JDB

ທະນາຄານຮ່ວມພັດທະນາ
Joint Development Bank



ບົດລາຍງານປະຈຳປີ 2018

ANNUAL REPORT 2018

“ເຕີບໃຫ່ຍໄປພ້ອມກັນ”
“BLOOMING TOGETHER”



ທະນາຄານຮ່ວມພັດທະນາ
Joint Development Bank

ສຳນັກງານໃຫ່ຍ ທະນາຄານຮ່ວມພັດທະນາ ຕັ້ງຢູ່
Head Quarter Location

ອາຄານເລກທີ 82, ຖະໜົນ ລ້ານຊ້າງ
Building No 82, Lanexang Ave
ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
Ban Hatsadee, Chanthabouly District, Vientiane Capital
ຕູ້ໄປສະນີ P.O. Box 3187
ໂທລະສັບ Tel: 021 - 213 531, ສາຍດ່ວນ Hotline 1499
ໂທລະສານ Fax: 021 - 213 530
Website: www.jdbbank.com.la
E-mail: info@jdbbank.com



JDB
ທະນາຄານຮ່ວມພັດທະນາ

ສາລະບານ | CONTENT

1 ຂໍ້ມູນດ້ານການເງິນໂດຍຫຍໍ້.....01
Summary of Financial Information

2 ບົດຄວາມເຫັນຂອງ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ.....03
(ທ່ານ ເອກະພັນ ພະພິທັກ)
Speech of the Chairman of the Board of Director of
Joint Development Bank (Mr. Ekaphan PHAPHITHAK)

3 ບົດຄວາມເຫັນຂອງ ຜູ້ອຳນວຍການໃຫ່ຍ ທະນາຄານຮ່ວມພັດທະນ້ຳ.....05
(ທ່ານ ບຸນສະຫວ່ຳງ ພິລາໄຊພິທັກ)
Speech of the General Managing Director of
Joint Development Bank (Mr. Bounsavang PHILAXAYPHITHAK)

4 ຄະນະສະພາບໍລິຫານ ທະນາຄານຮ່ວມພັດທະນາ.....06
The Board of Directors of Joint Development Bank

5 ຄະນະອຳນວຍການ ທະນາຄານຮ່ວມພັດທະນາ.....07
Directors of Joint Development Bank

6 ຄະນະທີ່ປຶກສາ ທະນາຄານຮ່ວມພັດທະນາ.....08
Consultants of Joint Development Bank

7 ໂຄງຮ່ຳງການຈັດຕັ້ງ.....09
Organizational Structure

8 ວິໃສທັດ ແລະ ພາລະກິດ.....10
Vision and Mission

9 ສະຫຼຸບ ການດຳເນີນທຸລະກິດ 2018.....12
Summary of Business Operation 2018

10 ວຽກງານຊ່ວຍເຫຼືອສັງຄົມ.....40
Social Supporting Works

11 ບົດລາຍງານຂອງນັກກວດສອບອິດສະຫະ.....42
Report of Independent Auditor (Laos and English)

12 ທະນາຄານຕົວແທນ ຢູ່ຕ່ຳງປະເທດ.....107
Correspondent Banks in Oversea

13 ການເຄື່ອນໄຫວ ກິດຈະກຳຕ່ຳງ ຂອງທະນາຄານຮ່ວມພັດທະນາ.....109
Activities of Joint Development Bank

14 ໜ່ວຍບໍລິການຕ່ຳງໆ.....111
Service Units

15 ຜະລິດຕະພັນ ຕ່ຳງໆ ຂອງທະນາຄານຮ່ວມພັດທະນາ.....118
Products of Joint Development Bank

ທະນາຄານຮ່ວມພັດທະນາ

Financial Highlight

Mio LAK

	2012	2013	2014	2015	2016	2017	2018
Assets	679,121.43	1,050,539.47	1,079,827.01	1,613,294.57	2,356,381.77	2,889,412.88	3,632,185.86
Deposits	469,978.42	683,339.40	690,942.50	1,125,292.57	1,873,694.12	2,356,742.36	2,925,231.77
Loan	258,958.93	350,160.07	513,024.45	782,067.01	1,272,881.58	1,913,425.42	2,190,460.92



Mio LAK

	2012	2013	2014	2015	2016	2017	2018
Revenues	74,140.25	70,154.86	116,952.30	162,522.70	230,949.43	308,455.19	278,889.76
Expenses	64,380.73	68,591.73	110,366.03	159,379.35	225,783.73	302,177.44	271,051.85
Profit	9,759.52	1,563.13	6,586.27	3,143.35	5,165.70	6,277.75	7,837.91



ທ່ານ ເອກະພັນ ພະພິທັກ
MR. EKAPHAN PHAPHITHACK

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ
Chairman, Board of Directors



“ຂ້າພະເຈົ້າ ໃນນາມປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ຂໍສະແດງຄວາມຂອບໃຈເປັນຢ່າງສູງ”

ບົດປະກອບຄຳເຫັນ

Speech Of Mr. Ekaphan Phaphithack Chairman Of The Board Of Directors Of Joint Development Bank

ຂ້າພະເຈົ້າໃນນາມປະທານສະພາບໍລິຫານທະນາຄານຮ່ວມພັດທະນາ JDB ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ທະນາຄານແຫ່ງ ສປປລາວ ທີ່ໄດ້ໃຫ້ທິດຊີ້ນຳຢ່າງໄກ້ຊິດຕິ ແທດເພື່ອພັດທະນາທະນາຄານຮ່ວມພັດທະນາໃຫ້ທັນສະໄໝ

ໃນໄລຍະ 30 ປີ ຜ່ານມາ ທະນາຄານພວກເຮົາໄດ້ພັດທະ ນາຕົນເອງໃຫ້ມີຄວາມເຂັ້ມແຂງ ທາງດ້ານການເງິນ, ມີຄວາມ ແຂງແກ່ນທາງດ້ານການບໍລິການລູກຄ້າ ແລະ ການບໍລິຫານມີ ນະໂຍບາຍທີ່ເຂັ້ມແຂງ, ເຮັດໃຫ້ທະນາຄານຮ່ວມພັດທະນາ ກ້າວໄປສູ່ຄຸນນະພາບໃໝ່ ທີ່ໄດ້ມາດຕະຖານສາກົນ, ໄດ້ຂະ ຫຍາຍຕາ່ງການບໍລິການໄປທົ່ວປະເທດ ເຊິ່ງມີຈຳນວນ 60 ໜ່ວຍບໍລິການໄດ້ປ່ຽນແປງຮູບແບບການບໍລິຫານຢ່າງມືອາຊີບ ຊຶ່ງໄດ້ເອົາໃຈໃສ່ອຽງງານການບໍລິການໃຫ້ເປັນທີ່ປະທັບໃຈ ຂອງລູກຄ້າທຸ່ກລະດັບ, ເຮັດໃຫ້ JDBກາຍເປັນທະນາຄານ ທີ່ທັນສະໄໝ ໄດ້ມາດຕະຖານສາກົນ,ບໍລິການລູກຄ້າທຸກລະ ດັບຢ່າງປະທັບໃຈ.

ຕໍ່ໄປ ພວກເຮົາຈະສ້າງຜົນງານ ອອກມາຮັບໃຊ້ສັງຄົມ ໃຫ້ມີຄວາມປະທັບໃຈຍິ່ງໆຂຶ້ນ.

- ຈະມີການເຊື່ອມໂຍງ ລະຫວ່າງທະນາຄານພາຍໃນປະເທດ ແລະ ຕ່າງປະເທດ .
- ການຊຳລະສະສາງ ລະຫວ່າງ ທະນາຄານກັບທະນາຄານດ້ວຍ ລະບົບທີ່ທັນສະໄໝ (Mobile Banking)
- ຫັນທະນາຄານ ໃຫ້ເປັນ Digital Bank ເທື່ອລະກ້າວ.

ວິໃສທັດ ແລະ ພາລະກິດຂອງພວກເຮົາແມ່ນປະຕິບັດຕາມ ແຜນຍຸດທະສາດ 4.0 ເພື່ອອຳນວຍຄວາມສະດວກສະບາຍ ໃຫ້ແກ່ລູກຄ້າ ຂອງທະນາຄານຮ່ວມພັດທະນາໃຫ້ໄດ້ຜົນປະ ໂຫຍດສູງສຸດ. ເປັນສ່ວນນຶ່ງໃນການສະໜັບສະໜູນຊ່ວຍເຫຼືອ ສັງຄົມ ມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ, ສ້າງເງື່ອນໄຂ ແລະ ກະກຽມຄວາມພ້ອມຕ່າງໆ ເພື່ອສ້າງໃຫ້ ກາຍເປັນທະນາຄານມະຫາຊົນ.ສາມາດຕອບສະໜອງການບໍລິ ການທາງດ້ານການເງິນ ແລະ ການທະນາຄານ ໃຫ້ແກ່ລູກຄ້າທັງ ຄົນລາວ ແລະ ຕ່າງປະເທດ ທຸກລະດັບໃຫ້ມີຄວາມປະທັບໃຈ ເປັນທີ່ຍອມຮັບໃນລະດັບພູມີພາກ ແລະ ໃນໂລກ.

"I am on behalf of the Chairman of Board of Directors of Joint Development Bank (JDB) would like to express my sincere appreciation"

I am on behalf of the Chairman of Board of Directors of Joint Development Bank (JDB) would like to express my sincere appreciation to the Bank of Lao PDR for providing closely direction for the development of Joint Development Bank to modernize gradually, and express my sincere thanks to all customers and businesspersons who trustful the Joint Development Bank for being encouragement and business cooperation.

For the past 30 years, our bank has developed our own financial strength, providing strong customer services and governance,

improving Joint Development Bank to be qualified international standards, service networks have expanded for 60 service units nationwide, it has been changed to a professional management model, which it has focused on the services of the customer satisfaction at all levels in order to make JDB to become a modernization bank and meet international standard, provide customer services satisfaction at all level.

In the future, we will make more satisfaction to serve the public.

- There will be links among domestic and foreign banks.
- Training personnel to be professional knowledgeable, capable to advance internationally.
- Interbank transactions by modernise system (Mobile Banking).
- Develop the bank into a Digital Banking gradually.

Our vision and mission is to follow the strategic plan 4.0 in order to provide the convenience for its customers to gain the highest benefit.

As a part of social support to participate in socio-economic development, create conditions and ready to become a public bank. Be able to provide financial services and banking for both Lao and foreign customers at all levels to be satisfied and acceptable in the region and global.

ທ່ານ ບຸນສະຫວ່າງ ພິລາໄຊພິທັກ

MR. BOUNSAVANG PHILASAYPHITHAK

ຜູ້ອຳນວຍການໃຫ່ຍ ທະນາຄານຮ່ວມພັດທະນາ

General Managing Director of Joint Development Bank.



“ ປີ 2018 ເປັນອີກປີຫນຶ່ງ ທີ່ຂ້າພະເຈົ້າ ໄດ້ຮັບຕຳແໜ່ງເປັນຜູ້ອຳນວຍການໃຫ່ຍ ໄດ້ປະກອບສ່ວນທຸ້ມເທສະຕິປັນຍາ ເຂົ້າໃນການບໍລິຫານ ”

ປີ 2018 ເປັນອີກປີຫນຶ່ງ ທີ່ຂ້າພະເຈົ້າໄດ້ຮັບຕຳແໜ່ງເປັນຜູ້ອຳນວຍການໃຫ່ຍໄດ້ປະກອບສ່ວນທຸ້ມເທສະຕິປັນຍາເຂົ້າໃນການບໍລິຫານທະນາຄານຮ່ວມພັດທະນາຫລີເຈດີບີໃຫ້ບັນລຸເປົ້າຫມາຍຕາມຕົວເລກ (KPI) ທີ່ຜູ້ບໍລິຫານໄດ້ກຳນົດໄວ້ຫລາຍດ້ານ ບໍ່ວ່າດ້ານການຂະຫຍາຍຕາຫນ່າງບໍລິການ ໄປສູ່ຊຸມຊົນໃນຂອບເຂດທົ່ວປະເທດ ເພື່ອສ້າງເງື່ອນໄຂ ແລະ ຄວາມສະດວກໃນການໃຊ້ບໍລິການທາງການເງິນ ໃຫ້ແກ່ປະຊາຊົນ ແລະ ລູກຄ້າ ໃຫ້ເກີດປະໂຫຍດສູງສຸດ, ປີ 2018 ທະນາຄານ ໄດ້ຂະຫຍາຍຫນ່ວຍບໍລິການເພີ້ມ ຈຳນວນ 7 ຫນ່ວຍບໍລິການ, ຊຶ່ງມາຮອດທ້າຍປີ 2018 ໄດ້ມີຫນ່ວຍບໍລິການ ແລະ ບຸດບໍລິການທັງໝົດທົ່ວປະເທດ 60 ໜ່ວຍ. ດ້ານພະນັກງານ,ປະຈຸບັນພະນັກງານທີ່ເຮັດວຽກຢູ່ທະນາຄານ ເຈດີບີ ຫລາຍກວ່າ 577 ຄົນ.

ໃນການດຳເນີນທຸລະກິດໃນປີ 2018 ຂອງທະນາຄານຮ່ວມພັດທະນາ ແມ່ນມີກຳໄລເປັນທີ່ເພີ່ງພໍໃຈ ໜີ້ສິນ NPແມ່ນຕ່ຳກວ່າ 3% ເຊິ່ງແມ່ນຢູ່ໃນເກນມາດຕາຖານ ຂອງທະນາຄານແຫ່ງ ສປປ ລາວ ວາງອອກ, ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງ ພະນັກງານທຸກຄົນ ພ້ອມດ້ວຍຄະນະຜູ້ບໍລິຫານທຸກຂັ້ນ ທີ່ເອົາໃຈໃສ່ວຽກງານວິຊາສະເພາະຂອງຕົນ ປະກອບສ່ວນເຂົ້າໃນການຂັບເຄື່ອນທຸລະກິດຂອງ JDB ໃຫ້ມີການຂະຫຍາຍຕົວຢ່າງເພີ່ງພໍໃຈ.ແລະເພື່ອເປັນການຕຽມຕ້ອນຮັບງານສະຫຼອງຄົບຮອບ ທະນາຄານຮ່ວມພັດທະນາ 30 ປີ ໃນເດືອນຕຸລາ ປີ 2019 ນີ້ (1989-2019)

ບົດຄຳເຫັນ

Speech Of Mr. Bounsavang Philasayphithak General Managing Director Of Joint Development Bank.

ຂໍສະແດງຄວາມຂອບໃຈ ເປັນຢ່າງສູງມາຍັງທະນາຄານແຫ່ງ ສປປລາວ ແລະ ທ່ານປະທານສະພາບໍລິຫານທະນາຄານ ຮ່ວມພັດທະນາ ທີ່ໄດ້ໃຫ້ທິດຊີ້ນຳຢ່າງໄກ້ຊິດຕິດແທດເພື່ອພັດ ທະນາທະນາຄານຮ່ວມພັດທະນາໃຫ້ເປັນທະນາຄານທີ່ທັນສະ ໄໝ ຕາມຍຸກ 4,0 ເທື່ອລະກ້າວ.

ປະຈຸບັນໄດ້ຫຸ້ມເທພັດທະນາລະບົບຢ່າງຕັ້ງໜ້າພ້ອມສາມາດ ອອກຜະລິດຕະພັນໃໝ່ເພື່ອສະໜອງລູກຄ້າໃຫ້ໄດ້ຊົມໃຊ້ຜະ ລິດຕະພັນ ຢ່າງຫຼວງຫຼາຍ ແລະ ໄດ້ຮັບຄວາມປະທັບໃຈ. ເຊັ່ນ ວ່າ: ເງິນກູ້ເພື່ອພະນັກງານ, ເງິນກູ້ເພື່ອການສຶກສາພາຍໃນ ແລະ ຕ່າງປະເທດ,ສຳເລັດໃນອອກຜະລິດຕະພັນເຮັດທຸລະກຳການ ເງິນຜ່ານມືຖື (Mobile Banking) ຫຼືເວົ້າຫຍໍ້ວ່າ: JDB Yes ແລະ Yes pay (QR Code) ອອກຜະລິດຕະພັນ ໃໝ່ ເຊັ່ນ: ອອກບັດ UnionPay ແລະ ອື່ນໆ ອີກຢ່າງຫຼວງ ຫລາຍ, ພ້ອມພັດທະນາໃຫ້ເປັນ Digital Banking ເທື່ອລະ ກ້າວ. ພ້ອມກັນນັ້ນກໍ່ເປັນການປະກອບສ່ວນ ແກ້ໄຂຊີວິດການ ເປັນຢູ່ຂອງພະນັກງານ-ລັດຖະກອນໃຫ້ຊີວິດການເປັນຢູ່ທີ່ດີ ຂຶ້ນໂດຍການຕອບສະໜອງສິນເຊື່ອພະນັກງານໂດຍບໍ່ມີຫຼັກຊັບ ຄ້ຳປະກັນ 15 ເທົ່າຂອງເງິນເດືອນໃຫ້ແກ່ພະນັກງານ-ລັດຖະ ກອນ ທີ່ເບີກຈ່າຍເງິນເດືອນຜ່ານທະນາຄານ JDB ແລະ ການ ຄ້າຕ່າງປະເທດລາວມະຫາຊົນ. ໃນບໍ່ດົນມານີ້ທາງ JDB ໄດ້ມີ ການອອກຜະລິດຕະພັນໃໝ່ກໍ່ຄືເງິນຝາກດອກເບ້ຍ X2 ມາຮັບ ໃຊ້ລູກຄ້າ ພ້ອມກັນນັ້ນ ຍັງໄດ້ເຂົ້າຮ່ວມໂຄງການ LAPS ຂອງ BOL ໂອນເງິນຜ່ານ Mobile Banking (QR) ຮ່ວມກັບ 6 ທະນາຄານ, ເຂົ້າຮ່ວມໂຄງການ ຊຳລະເງິນຄ່າທຳນຽມທາງ, ທີ່ດິນ ແລະ ອາກອນ ນອກນັ້ນຍັງມີຫຼາຍໂຄງການ.... ອອກຜະ ລິດຕະພັນເພື່ອມາຮັບໃຊ້ສັງຄົມເຮັດໃຫ້ລູກຄ້າໄດ້ຮັບຜົນປະ ໂຫຍດສູງສຸດ. ຂ້າພະເຈົ້າເຊື່ອໝັ້ນວ່າ ປີ 2019 ທະນາຄານ ຮ່ວມພັດທະນາຄືຈະບັນລຸຕາມເປົ້າໝາຍທີ່ຜູ້ບໍລິຫານໄດ້ຕັ້ງ ໄວ້. ສຸດທ້າຍນີ້ ຂໍອວຍໄຊໃຫ້ພອນແດ່ຜູ້ນຳພັກ-ລັດ, ທ່ານລູກ ຄ້າທີ່ມີພະຄຸນ ຈົ່ງມີສຸຂະພາບເຂັ້ມແຂງມີຄວາມຜາສຸກໃນຊີວິດ ການງານ, ທຸລະກິດ ແລະ ຄອບຄົວຂອງທ່ານ.

In 2018 is a year that I was promoted as a General Managing Director, contributing my best knowledge for management of Joint Development Bank or JDB to succeed Key Performance Indicators (KPI) which the managers have targeted many aspects whether the expansion of network services to the public nationwide in order to create conditions and accessibilities for financial services to the public and its customers to maximize of benefits, in 2018, the Bank has expanded 7 service units, which by the end of 2018 there are 60 service units and booth services throughout the country. Currently, there are more than 577 staffs working at JDB. In 2018, the business operation of Joint Development Bank is profitable. NPL is lower than 3% which it is at the benchmark of the Bank of Lao PDR, I would like to express my sincere congratulation to all staffs and executive boards at all levels who dedicated their professional careers, contributing to the business development of the JDB satisfyingly, and to celebrate the 30th year anniversary of Joint Development Bank in October 2019 (1989-2019).

We would like to express our sincere thanks to the Bank of Lao PDR and the Chairman of the Board of Directors of Joint Development Bank for providing faithfully direction for the development of Joint Development Bank to become a modern bank in the Industrial Revolution 4.0 progressively.

Nowadays, we are intentionally focused on system development in order to be able to deliver new products to its customers, providing numerous products and be satisfied. Such as: Loan for employees, loan for domestic and international education, be successfully completed for mobile transaction products (Mobile Banking) or briefly call: JDB Yes and Yes pay (QR Code), have issued new products such as: UnionPay and other services, along with the development of Digital Banking gradually. In addition, it is also contributing to improve the living conditions of employees-civil servants to be better living conditions by providing staff loans without collateral which up to 15 times of salary to the employees-civil servants with their payroll through JDB and BANQUE POUR LE COMMERCE EXTERIEUR LAO PUBLIC. Recently, JDB provides a new product as the interest savings account X2 to the customers, and has also participated in the LAPS project of BOL transfer via Mobile Banking (QR), in collaboration with 6 banks, participating in the road tax, land tax and taxes payment system and many other projects...

ສະພາບໍລິຫານ ທະນາຄານຮ່ວມພັດທະນາ

Board Of Directors Of The Joint Development Bank



ທ່ານ. ເອກະພັນ ພະພິທັກ
Mr. Ekaphan PHAPHITHAK
ປະທານສະພາບໍລິຫານ
Chairman, Board of Directors



ທ່ານ. ສຸນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ຮອງປະທານ ສະພາບໍລິຫານ
Vice chairman of board of directors



ດຣ. ວິວັດ ກິດຕິພົງໂກສົນ
Dr. Vivat KHITTIPHONGKOSOL
ສະມາຊິກ ສະພາບໍລິຫານ
Member



ທ່ານ. ບຸນສະຫວ່າງ ພິລາໄຊພິທັກ
Mr. Bounsavang PHILASAYPHITHAK
ສະມາຊິກ ສະພາບໍລິຫານ
Member



ທ່ານ. ຄຳຮຸ້ ທອງທະວີ
Mr. Khamhou THONGTHAVY
ສະມາຊິກ ສະພາບໍລິຫານ
Member



ທ່ານ. ວິໄລ ສີພະພອນ
Mr. Vilay SIPHAPHONE
ສະມາຊິກ ສະພາບໍລິຫານ
Member



ທ່ານ ປອ. ບົວວອນ ຈັນທະນິເລີດ
Mr. Bouavone CHANTHANILEUTH
ສະມາຊິກ ສະພາບໍລິຫານ
Member

ຄະນະອຳນວຍການ ທະນາຄານຮ່ວມພັດທະນາ

Executive Of The Joint Development Bank



ທ່ານ. ບຸນສະຫວ່າງ ພິລາໄຊພິທັກ
Mr. Bounsavang PHILASAYPHITHAK
ຜູ້ອຳນວຍການໃຫ່ຍ
Managing Director



ທ່ານ. ຄຳຮຸ້ ທອງທະວີ
Mr. Khamhou THONGTHAVY
ຮອງຜູ້ອຳນວຍການໃຫ່ຍ
Deputy Managing Director



ທ່ານ ນາງ. ພອນສະໄໝ ສຸກຂະພົນ
Ms. Phonesamay SOUKHAPHON
ຮອງຜູ້ອຳນວຍການໃຫ່ຍ
Deputy Managing Director



ທ່ານ. ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ຮອງຜູ້ອຳນວຍການໃຫ່ຍ
Deputy Managing Director



ທ່ານ. ຈັນຊະນະ ສິງຫາວົງ
Mr. Chansana SINGHAVONG
ຮອງຜູ້ອຳນວຍການໃຫ່ຍ
Deputy Managing Director



ທ່ານ. ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ຮອງຜູ້ອຳນວຍການໃຫ່ຍ
Deputy Managing Director

ຄະນະທີ່ປຶກສາ ທະນາຄານຮ່ວມພັດທະນາ
Advisory Board Of The Joint Development Bank



ດຣ. ວິວັດ ກິດຕິພົງໂກສົນ
Dr. Vivat KITTIPHONGKOSOL
ປະທານທີ່ປຶກສາດ້ານເສດຖະກິດ
Head of Economic Advisors



ທ່ານ. ວິໄລ ສີພະພອນ
Mr. Vilay SIPHAPHONE
ທີ່ປຶກສາ ແລະ ຊີ້ນຳວຽກງານກວດກາ
Advisor & Supervisor of Internal Audit



ທ່ານ. ຖາວອນ ອ້ອນມາລາ
Mr. Thavone OUANMALA
ທີ່ປຶກສາ ແລະ ປະສານງານພາກລັດ ປະຈຳພາກໃຕ້
Advisor and government
coordinator southern provinces

ໂຄງຮ່າງການຈັດຕັ້ງ
Organization chart 2018



ທະນາຄານຮ່ວມພັດທະນາ
Joint Development Bank

ວິໃສທັດ ແລະ ພາລະກິດຂອງທະນາຄານຮ່ວມພັດທະນາ
Vision and Mission of Joint Development Bank

1 ວິໃສທັດ

ທະນາຄານຮ່ວມພັດທະນາໄດ້ກຳນົດທິດທາງໃນການພັດທະນາໄລຍະຍາວເປັນເວລາ 5 ປີ ເຖິງ 10 ປີ ໂດຍເບິ່ງມຸມມອງຂອງການຂະຫຍາຍຕົວທາງດ້ານເສດຖະກິດໂລ ແລະ ພູມີພາກ ບວກກັບລະດັບການຄົ້ນຄິດພັດທະນາເທັກໂນໂລຢີແລະອີເລັກໂທຣນິກທີ່ຕອບສະໜອງໃຫ້ແກ່ການບໍລິການດ້ານຕ່າງໆ ໂດຍສະເພາະແມ່ນການບໍລິການດ້ານການທະນາຄານໃຫ້ມີຄວາມທັນສະໄໝກ້າວໄກຢ່າງບໍ່ຢຸດຢັ້ງເພື່ອຕອບສະໜອງໃຫ້ແກ່ການຂະຫຍາຍຕົວຂອງລະບົບທະນາຄານຮັບໃຊ້ລູກຄ້າໃຫ້ມີຄວາມສະດວກສະບາຍວ່ອງໄວພັດທະນາຕົນເອງໃຫ້ເປັນທະນາຄານທັນສະໄໝໄດ້ມາດຕະຖານສາກົນແລະເພື່ອຮອງຮັບການແຂ່ງຂັນທີ່ເຂັ້ມຂຸ້ນເປັນລຳດັບ, ທະນາຄານຮ່ວມພັດທະນາ ໄດ້ກຳນົດວິໃສທັດເພື່ອເປັນກອບພັດທະນາໃຫ້ບັນລຸວັດຖຸປະສົງ ແລະ ເປົ້າໝາຍຂອງຕົນເອງຄື:

“ ທະນາຄານນຳໜ້າດ້ານການບໍລິການທີ່ທັນສະໄໝໄດ້ມາດຕາຖານສາກົນ ”

ຊຶ່ງທະນາຄານຮ່ວມພັດທະນາມີຄວາມມຸ້ງໝັ້ນພັດທະນາຮອບດ້ານໃຫ້ກາຍເປັນທະນາຄານທີ່ທັນສະໄໝບໍລິການລູກຄ້າຢ່າງສະດວກສະບາຍໄດ້ມາດຕະຖານສາກົນເປັນທີ່ຍອມຮັບຂອງລູກຄ້າທັງພາຍໃນ ແລະ ຕ່າງປະເທດ ແລະ ກ້າວສູ່ລະດັບພູມມີພາກແລະສາກົນເທື່ອລະກ້າວ

1 Vision

Joint Development Bank has identified long-term development direction in the coming 5 to 10 years by looking at forecasting the growth of the global and regional economic. In addition to technology and electronics innovation that will be required for our services, especially the banking services which will be modern and continually expanding as to extend the banking system to provide convenient and quick service to our customers, we also need to develop ourselves to be a modern bank of international standards, and to be ready for tougher competition. Joint Development Bank has developed our vision as a developmental framework in order to achieve our objectives and goals as follows:

As the **“ Leading bank for modern services and international standards”** Joint Development Bank has a commitment to integrated developments to become a modern bank to provide convenient services of international standards to our customers, with recognition from our domestic and international customers. Our path will gradually be expanded into the regional and international areas.

2 ພາລະກິດ

ໃນການດຳເນີນທຸລະກິດໃຫ້ບັນລຸຕາມວິໄສທັດທີ່ເປັນທິດທາງການພັດທະນາໄລຍະຍາວທະນາຄານຮ່ວມພັດທະນາໄດ້ກຳນົດພາລະກິດທີ່ຊັດເຈນ ທີ່ເປັນກອບໃນການພັດທະນາ ແຕ່ປີ 2016 ຈົນຮອດປີ 2020 ໂດຍມີວັດຖຸປະສົງເພື່ອສ້າງຜົນປະໂຫຍດສູງສຸດໃຫ້ກັບທຸກພາກສ່ວນທີ່ມີສ່ວນຮ່ວມກັບທະນາຄານຮ່ວມພັດທະນາ ລວມທັງສັງຄົມແລະປະເທດຊາດ ຄື: **" JDB ມຸ່ງໝັ້ນບໍລິການທີ່ເປັນເລີດ ທັນຍຸກ ທັນສະໄໝ ມີຄຸນນະພາບໄດ້ມາດຕາຖານສາກົນ,ຖືເອົາຄວາມຕ້ອງການຂອງລູກຄ້າເປັນຫຼັກ,ພັດທະນາຜະລິດຕະພັນທີ່ຫຼາກຫຼາຍປະສານກັບການບໍລິການທີ່ດີເດັ່ນຂອງພະນັກງານດ້ວຍລະບົບເທັກໂນໂລຍີທັນສະໄໝ, ສ້າງຜົນປະໂຫຍດສູງສຸດໃຫ້ທຸ່ກຝ່າຍສາມາດເຕີບໃຫ່ຍໄປພ້ອມກັນ ແລະ ເປັນສ່ວນປະກອບທີ່ສຳຄັນໃນການພັດທະນາປະເທດຊາດ "**

ພາລະກິດຂອງທະນາຄານຮ່ວມພັດທະນາໄດ້ກຳນົດໜ້າວຽກແຕ່ລະດ້ານ ທີ່ຈະຕ້ອງພັດທະນາ ນັບແຕ່ປີ 2016 ຈົນເຖິງປີ 2020 ເຮັດໃຫ້ທະນາຄານ ຮ່ວມພັດທະນາ ຫຼື JDB ກາຍເປັນທະນາຄານທີ່ທັນສະໄໝໄດ້ມາດຕາຖານສາກົນ,ມີລະບົບບໍລິການລູກຄ້າສະດວກສະບາຍເປັນທີ່ໜ້າເຊື່ອຖື ແລະ ລູກຄ້າມີຄວາມເພິ່ງພໍໃຈມາໃຊ້ບໍລິການ. ທະນາຄານ ໄດ້ຖືເອົາການພັດທະນາລະບົບເທັກໂນໂລຍີ ຂໍ້ມູນຂ່າວສານ ຫຼື ລະບົບ IT ເປັນບູລິມະສິດຫຼັກໂດຍສະເພາະແມ່ນການພັດທະນາລະບົບ Core Banking ແລະ ລະບົບຖານຂໍ້ມູນໃຫ້ມີຄວາມທັນສະໄໝໄດ້ມາດຕາຖານສາກົນທີ່ເປັນຕົວບົ່ງບອກວ່າJDB ເປັນທະນາຄານທີ່ທັນສະໄໝແລະພ້ອມກັນນັ້ນກໍ່ຕ້ອງພັດທະນາຜະລິດຕະພັນຕ່າງໆຕາມຄວາມຕ້ອງການຂອງລູກຄ້າ ໂດຍສະເພາະຜະລິດຕະພັນທາງອີເລັກໂທຣນິກທີ່ນຳເອົາລະບົບບໍລິການທະນາຄານໄປໄວ້ກັບລູກຄ້າ,ລູກຄ້າສາມາບໍລິການດ້ວຍຕົນເອງໄດ້ ໂດຍບໍ່ຈຳເປັນມາຫາທະນາຄານ,ເຊິ່ງລະບົບບໍລິການດັ່ງກ່າວຈະສ້າງປະໂຫຍດສູງສຸດໃຫ້ກັບJDB,ໃຫ້ກັບລູກຄ້າຜູ້ນຳໃຊ້ບໍລິການ, ໃຫ້ກັບສັງຄົມ ແລະ ປະເທດຊາດ.

2 Mission

To achieve operation, the vision that will be the direction for our long-term development, Joint Development Bank has identified the mission clearly, which will act as a developmental framework from the year 2016 until 2020. The objective of the mission is set to bring the greatest benefits to stakeholders who took part with Joint Development Bank, including our society and the nation: "Joint Development Bank has a commitment to provide the best services, modernize, qualify and become international. We are deliberately with the requirements of our customers, and will develop a variety of products together with the best customer service from our staff through the system of modern technology in order to bring the greatest benefits for everyone to bloom together and be an important part of the country's development". The Mission of Joint Development Bank identified for each effort that will need to develop from the year 2016 until 2020 in order to make Joint Development Bank, or JDB, become a modern bank with international standards, which provides a customer service system that is comfortable and reliable for the satisfaction of our customers. The bank has conducted information technology or IT system development, as our main priority, in particular in terms of our core banking system development and database system, to become modernized and international. This will indicate that Joint Development Bank is a modernized bank, and meanwhile the bank is developing a variety of products based on the needs of our customers, most especially, the electronic products that bring our banking service system to our customers, so that they can have access to services by themselves without coming to the bank. Therefore, these services will bring the greatest benefits to Joint Development Bank, our customers who use the services, and our society and nation.

ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ 2018
Annual Business Operations Report for 2018

I. ສະພາບແວດລ້ອມໃນການດຳເນີນທຸລະກິດ

ສະພາບແວດລ້ອມຂອງໂລກ ໃນປີ 2018 ຍັງສືບຕໍ່ຜັນແປຢ່າງສັບສົນ, ຄວາມຂັດແຍ່ງຢູ່ຫລາຍຂົງເຂດນັບມື້ນັບມີຄວາມຮຸນແຮງ, ການກໍ່ການຮ້າຍ ແລະ ການແບ່ງແຍກດິນແດນໄດ້ມີການສູ້ຮົບກັນຢ່າງຕໍ່ເນື່ອງ ນຳໃຊ້ອາວຸດສົງຄາມທຳລາຍລ້າງເຮັດໃຫ້ມີຄົນລົ້ມຕາຍເປັນຈຳນວນຫລາຍປະຊາຊົນຕ້ອງໄດ້ຍ້າຍຖິ່ນຖານນັບມື້ນັບເພີ່ມຂຶ້ນກໍ່ໃຫ້ເກີດບັນຫາທາງສັງຄົມຕາມມາຢ່າງຕໍ່ເນື່ອງ. ນອກຈາກນັ້ນ ການປ່ຽນແປງຂອງອາກາດກໍຍັງກໍ່ໃຫ້ເກີດມີໄພພິບັດທຳມະຊາດຢ່າງຮ້າຍແຮງ ເປັນຕົ້ນແມ່ນພາຍຸພັດຖະຫຼົ່ມ, ພູເຂົາໄຟລະເບີດ ເກີດຄື້ນສຶນາມິ ດິນເຊາະເຈື່ອນ ນ້ຳຖ້ວມຢູ່ຫລາຍຂົງເຂດ ມີຄົນລົ້ມຕາຍ ແລະ ທຳລາຍຊັບສິນຂອງປະຊາຊົນ ແລະ ຂອງສ່ວນລວມເປັນຈຳນວນຫຼວງຫຼາຍ ແລະ ພາຍໃນປີ 2018 ນີ້ ກໍເກີດມີຄວາມຂັດແຍ່ງທາງດ້ານການຄ້າຢ່າງຮຸນແຮງລະຫວ່າງສອງປະເທດເສດຖະກິດໃຫຍ່ຂອງໂລກ ຄື ອາເມຣິກາແລະຈີນ ມັນກະທົບຕໍ່ການຄ້າ ແລະ ການລົງທຶນຂອງບັນດາປະເທດຕ່າງໆໃນໂລກ, ຊຶ່ງທັງໝົດນັ້ນ ມັນກະທົບໂດຍກົງຕໍ່ການພັດທະນາເສດຖະກິດຂອງໂລກ ເຮັດໃຫ້ການຂະຫຍາຍຕົວຂອງເສດຖະກິດໂລກສະລົຕົວ. ສປປ ລາວ ກໍໄດ້ຮັບຜົນກະທົບຈາກສະພາບແວດລ້ອມຂອງໂລກດັ່ງກ່າວ ແລະ ຍັງໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກໄພພິບັດທຳມະຊາດເກີດນ້ຳຖ້ວມຢູ່ຫຼາຍທ້ອງຖິ່ນ, ເຂື່ອນເຊປຽນ ເຊນ້ຳນ້ອຍແຕກ ເຮັດໃຫ້ນ້ຳຖ້ວມກະທັນຫັນພັດຊຸຖະຫຼົ່ມບ້ານເຮືອນຂອງປະຊາຊົນຫຼາຍບ້ານຂອງເມືອງສະໜາມໄຊ ແຂວງອັດຕະປື ປະຊາຊົນລົ້ມຕາຍ ແລະ ສູນຫາຍເປັນຈຳນວນຫຼາຍ. ທັງໝົດນັ້ນເປັນເຫດເຮັດໃຫ້ເສດຖະກິດຂອງຊາດ ຂະຫຍາຍຕົວຊ້າລົງ, ການຂະຫຍາຍຕົວຂອງເສດຖະກິດຢູ່ໃນລະດັບ 6,9 ຕ່ຳກ່ວາແຜນການຄາດຄະເນໃນປີ. ລັດຖະບານໄດ້ອອກນະໂຍບາຍຢ່າງເຂັ້ມງວດ ກວດຂັນໂດຍສະເພາະແມ່ນການຍຸຕິການສົ່ງອອກໄມ້ທ່ອນອອກ, ກວດກາໂຄງການລົງທຶນຂອງລັດ ແລະ ຈັດສັນການຊຳລະໜີ້ສິນຂອງລັດ, ໂຄງການລົງທຶນຂອງລັດຫລາຍໂຄງການຕ້ອງໄດ້ສະລໍຕົວ,ສະພາບການດຳເນີນທຸລະກິດຂອງລູກຄ້າທະນາຄານມີຄວາມຫຍຸ້ງຍາກທາງດ້ານການເງິນໂດຍສະເພາະແມ່ນການລົງທຶນໃນໂຄງການຂອງລັດໄປແລ້ວ ແຕ່ກໍບໍ່ໄດ້ຮັບການຊຳລະຄືນເປັນເງິນສົດຫຼືເງິນໂອນ ຫຼືໄດ້ຮັບການຊຳລະ ແຕ່ກໍເປັນຈຳນວນໜ້ອຍ ແລະ ແບ່ງເປັນຫລາຍງວດແລະຫລາຍປີທັງໝົດນັ້ນ ມັນກະທົບໂດຍກົງຕໍ່ການດຳເນີນທຸລະກິດຂອງທະນາຄານ, ເຮັດໃຫ້ທລາຍທະນາຄານມີຜົນການດຳເນີນທຸລະກິດບໍ່ໄດ້ຕາມແຜນການ, ຫລາຍທະນາຄານມີໜີ້ NPL ເພີ້ມຂຶ້ນ ເຮັດໃຫ້ທະນາຄານບໍ່ມີສະພາບຄ່ອງໃນການດຳເນີນທຸລະກິດຕໍ່ໄປ.

I. Business Operation Environment

In 2018, the world's environment continues to be convoluted, conflicts in many regions are heavily increased, such as terrorism and territory secessionism continuous at war, use of weapons of mass destruction, many people have been killed and injured, number of migrants are increasing and cause to the social problems. In addition, climate change also caused seriously natural disasters such as storm, volcanic explosion, tsunami, erosion, flooding in many regions which it caused people lost their lives and assets; and in 2018 this was a serious conflict of trade between the two biggest economic countries of the world like United State of America and China which influence to trade and investment among countries in the world, all of which directly impacted global economic growth, leading to a slowdown in global economic growth. Lao PDR has also been impacted by such global situations; and has been severely impacted by natural disasters, flooding in many areas, broken saddle of Xe Piane-Xe Namnoi dam has caused suddenly torrents and landslides in many villages in Sanarmxay district, Attapeu Province. Many people were killed and missing. All of those situation are causing the national economy slow down, economic growths at 6.9% which lower than estimated annual plan. The Government has issued strictly policies, especially the timber export ban, checking state's investment projects and allocating state repayments, many state's investment projects have to be suspended, the business conditions of the bank's customers have financial difficulties, especially the state-invested projects, but it has not been repaid in cash or transferred or only few projects have been repaid, and be divided several installments and many years. Those directly impacts the bank's business, resulting in many banks cannot achieve their business plans, number of NPL are increasing with many banks that it made the bank no liquidity in business.



II. ການປະຕິບັດແຜນງານຕ່າງໆ

ໃນການດຳເນີນທຸລະກິດ ປີ 2018ນີ້ທະນາຄານຮ່ວມພັດທະນາ (JDB) ໄດ້ປະຕິບັດແຜນຍຸດທະສາດພັດທະນາທະນາຄານແຕ່ ປີ 2015 – 2020 ທີ່ກຳນົດໄວ້ໂດຍສະເພາະແມ່ນການນຳເອົາ ພາລະກິດ (Mission) ທີ່ວ່າ“ ພັດທະນາລະບົບຄຸ້ມຄອງບໍລິ ຫານ, ລະບົບບໍລິການດ້ວຍລະບົບ digital ພ້ອມທັງປັບປຸງ ແລະ ພັດທະນາຜະລິດຕະພັນຕ່າງໆ ໃຫ້ກາຍເປັນຜະລິດຕະພັນ digital ທັນຍຸກທັນສະໄໝ ກາຍເປັນທະນາຄານນຳໜ້າທາງ ດ້ານເທັກໂນໂລຢີ ແລະ ເປັນສູນກາງຊຳລະສະສາງຢູ່ພາຍໃນ ປະເທດແລະພູມີພາກ ສ້າງຜົນປະໂຫຍດສູງສຸດໃຫ້ແກ່ JDB ແລະ ລູກຄ້າສາມາດເຕີບໃຫຍ່ໄປພ້ອມກັນປະກອບສ່ວນສຳຄັນ ໃນການພັດທະນາປະເທດຊາດໄປຜັນຂະຫຍາຍເປັນແຜນງານ ລະອຽດໃນແຕ່ລະດ້ານ ເພື່ອໃຫ້ບັນລຸວິໄສທັດທີ່ວ່າ “ພັດທະນາ JDB ໃຫ້ກາຍເປັນທະນາຄານ Digital 4.0 ນຳໜ້າທາງດ້ານ ເທັກໂນໂລຢີທີ່ທັນສະໄໝໄດ້ມາດຕະຖານສາກົນຕອບສະ ໜອງການບໍລິການລູກຄ້າໄດ້ຢ່າງສະດວກວ່ອງໄວ“ .ຜົນສຳເລັດ ໃນການປະຕິບັດແຜນງານແຕ່ລະດ້ານມີດັ່ງນີ້:

II. Implementation of Plans

For the business operation in 2018, the Joint Development Bank (JDB) has implemented its strategic development plan from 2015 to 2020, specifically, implementing its mission that "Develops management system, digital system service as well as improves and develops products to become a modern digital product, be a leading technology bank and a payment center in the country and the region, creation maximize benefits for JDB and its customers be able to grow together and significantly contribute for the 1 national development". In order to achieve its vision that "To develop JDB to become a Digital 4.0 Bank, advance modern technology, international standard quick service". The successful of each plans are as below:

1. ການປັບປຸງກົງຈັກການຈັດຕັ້ງ

ໂດຍປະຕິບັດຕາມນະໂຍບາຍແລະທິດນຳຂອງສະພາບໍລິຫານ ໃນການຫັນ JDB ໃຫ້ເປັນໜຸ່ມ ຄືສ້າງເອົາຄົນລຸ້ນໜຸ່ມຂຶ້ນມາ ເປັນຜູ້ບໍລິຫານ ເພື່ອເລັ່ງພັດທະນາ JDB ໃນຍຸກ 4.0 ໃຫ້ກາຍ ເປັນທະນາຄານ Digital Banking ທີ່ທັນຍຸກທັນສະໄໝ ໄດ້ມາດຕະຖານສາກົນ ໃຫ້ປະສົບຜົນສຳເລັດໂດຍໄວ. ໃນປີ 2018 ນີ້ ກອງປະຊຸມຜູ້ຖືຮຸ້ນໄດ້ຕົກລົງໃຫ້ປັບປຸງລະບົບການ ຈັດຕັ້ງ ນັບແຕ່ສະພາບໍລິຫານລົງມາຫາພະແນກແລະໜ່ວຍບໍລິ ການຈຳນວນນຶ່ງຄືໄດ້ເພີ້ມສະມາຊິກສະພາບໍລິຫານຈາກທ່ານມາ ເປັນ 7 ທ່ານ, ໄດ້ປັບປຸງຄະນະອຳນວຍການຄືໄດ້ແຕ່ງຕັ້ງຜູ້ອຳ ນວຍການຄົນໃໝ່ແລະໄດ້ແຕ່ງຕັ້ງຮອງຜູ້ອຳນວຍການທີ່ເປັນ ຄົນໜຸ່ມຂຶ້ນມາຕື່ມອີກ 3 ທ່ານ ລວມເປັນ 6 ທ່ານ, ໄດ້ສ້າງ ພະແນກໃໝ່ຂຶ້ນມາເພີ່ມອີກ 2 ພະແນກ ຄື ພະແນກສູນບັດ ແລະ ພະແນກຄຸ້ມຄອງເຂດ ຄືເພີ່ມຂຶ້ນຈາກແຕ່ກ່ອນມີພຽງ 10 ພະແນກ ມາເປັນ 12 ພະແນກພ້ອມທັງໄດ້ສັບຊ້ອນພະນັກງານ ເຂົ້າຕຳແໜ່ງງານຢ່າງເໝາະສົມ. ພ້ອມກັນນັ້ນກໍໄດ້ຈັດຄະນະຜູ້ ບໍລິຫານຮັບຜິດຊອບດ້ານທຸລະກິດ (Front Office) ແລະ ຜູ້ ບໍລິຫານຮັບຜິດຊອບວຽກງານສະໜັບສະໜູນຕິດຕາມກວດກາ ແລະ ປະເມີນຜົນ (Back Office), ໄດ້ກຳນົດເກນມາດຕະ ຖານໃຫ້ໜ່ວຍບໍລິການ ແລະ ບຸດບໍລິການເພື່ອກະຕຸ້ນໃຫ້ໜ່ວຍ ບໍລິການແລະບຸດບໍລິການຕ້ອງເອົາໃຈໃສ່ປະຕິບັດຕົວເລກ KPI ໃຫ້ບັນລຸຄາດໝາຍ.ໃນການຂະຫຍາຍຕາໜ່າງບໍລິການເພື່ອສ້າງ ຄວາມສະດວກສະບາຍໃຫ້ແກ່ລູກຄ້າໄດ້ເຂົ້າເຖິງລະບົບບໍລິ ການຂອງ JDB ຢ່າງທົ່ວເຖິງໃນປີ 2018 JDB ໄດ້ຮັບພະນັກ ງານ ເພີ່ມ 84 ຄົນ ຊຶ່ງມາເຖິງປະຈຸບັນ ມີພະນັກງານທັງໝົດ 570 ຄົນ ໃນນີ້ມີຍິງ 310 ຄົນ. ພ້ອມກັນນັ້ນກໍໄດ້ຈັດຝຶກ ອົບຮົມໃນຫົວຂໍ້ຕ່າງໆເພື່ອເພີ່ມຄວາມຮູ້ຄວາມສາມາດໃຫ້ພະ ນັກງານ ໄດ້ 367 ເທື່ອຄົນ ໃນນີ້ ຝຶກອົບຮົມພາຍໃນ ໄດ້337 ເທື່ອຄົນ ແລະ ຝຶກອົບຮົມຈາກພາຍນອກ ແລະ ຕ່າງປະເທດ ຈຳນວນ 30 ເທື່ອຄົນ.

1. Organizational Structure Improvement

On implementation of the policies and directions of the Board of Directors on promoting JDB to young generation management in order to accelerate the development of JDB in the Industrial Revolution 4.0 to become a modernized Digital Banking in line with rapid international standards. In 2018, shareholders' meeting agreed to improve the organizational structure, both the Board of Directors and the divisions and units, increasing members of the Board of Directors from five to seven members, and improved the Board of management as to nominate 3 new directors, totally 6 managers at the present, 2 new divisions have been created, namely the Card Center Division and Zone Management Division, which the divisions are increased from 10 to 12 divisions, promote staffs positions appropriately.

In addition, members of the Board of Directors in charge of Front Office and to in charge of supporting, supervision, inspection and evaluation of Back Office are organized, standards for service units and service booth are determined in order to encourage of service units and booths in implementing KPI. In expanding the service network to provide customers with access to the JDB service system in 2018, JDB has recruited 84 additional staffs, which currently has 570 employees, there is 310 females. At the same time, training of 367 staff have been conducted with several topic in order to upgrade their knowledge and skill, 337 staffs have been trained in the country and 30 staffs have been trained abroad.










2. ການຂະຫຍາຍລະບົບຕາໜ່າງບໍລິການ

ເພື່ອຂະຫຍາຍຖານລູກຄ້າຢ່າງກ້ວາງຂວາງແລະນຳເອົາການບໍລິການທີ່ທັນສະໄໝໄປຮັບໃຊ້ບໍລິການລູກຄ້າໃຫ້ມີຄວາມສະດວກສະບາຍ ທະນາຄານຮ່ວມພັດທະນາໄດ້ປັບປຸງ ປ່ຽນແປງໂສມໜ້າໃໝ່ຂອງສູນບໍລິການສຳນັກງານໃຫຍ່ໃຫ້ມີສີສັນຈືບງາມທັນສະໄໝຈັດສັນເນື້ອທີ່ບໍລິການຢ່າງເໝາະສົມຄືມີສະຖານທີ່ບໍລິການທີ່ໂອ່ໂຖງສຳລັບລູກຄ້າ VIP ສະເພາະ ແລະ ສະຖານທີ່ບໍລິການສຳລັບລູກຄ້າທົ່ວໄປ ເຮັດໃຫ້ລູກຄ້າມີຄວາມຮູ້ສຶກສະບາຍໃຈແລະເປັນກັນເອງ ເມື່ອມານຳໃຊ້ບໍລິການ. ຄຽງຄູ່ກັບການປັບປຸງສະຖານທີ່ແລະລະບົບບໍລິການທີ່ມີຄຸນນະພາບ ແລະເປັນມາດຕະຖານສາກົນ JDB ຍັງໄດ້ຂະຫຍາຍຊ່ອງທາງບໍລິການຫຼາຍຊ່ອງທາງ ໂດຍສະເພາະແມ່ນ ໄດ້ຂະຫຍາຍໜ່ວຍບໍລິການເພີ້ມ 7 ໜ່ວຍໄປສູ່ຈຸດຊຸມຊົນຕ່າງໆ ຄື ໜ່ວຍບໍລິການບໍ່ເຕ່ນຢູ່ເຂດຊາຍແດນ ລາວ-ຈີນ ແຂວງຫຼວງນ້ຳທາ, ໜ່ວຍບໍລິການເກົ້າລ້ຽວ ເມືອງສີໂຄດຕະບອງ, ໜ່ວຍບໍລິການທົ່ງຂັນຄຳ ເມືອງຈັນທະບຸລີ, ໜ່ວຍບໍລິການ ບ້ານໂນນສະຫວ່າງ(ວັງຊາຍ) ເມືອງໄຊເສດຖາ,ບູດບໍລິການວຽງຈັນເຊັນເຕີ,ໜ່ວຍບໍລິການ ຫຼັກ 2 ເມືອງປາກເຊ ແລະໜ່ວຍບໍລິການ ປຕທເມືອງປາກຊ່ອງ ຊຶ່ງມາຮອດປະຈຸບັນ ທະນາຄານຮ່ວມພັດທະນາມີໜ່ວຍ ແລະ ບູດບໍລິການທັງໝົດ 60 ແຫ່ງລວມທັງສຳນັກງານໃຫຍ່. ນອກຈາກນັ້ນທະນາຄານຮ່ວມພັດທະນາກໍໄດ້ທົບທວນແລະປັບປຸງຈຸດທີ່ຕັ້ງຕູ້ ATM ແລະເຄື່ອງຮູດບັດ EDC ຄືນໃໝ່ ເພື່ອເຮັດໃຫ້ການບໍລິການລູກຄ້າຜ່ານຕູ້ ATM ແລະເຄື່ອງຮູດບັດ EDC ມີປະສິດທິຜົນເພີ່ມຂຶ້ນ ຊຶ່ງປະຈຸບັນ ມີຕູ້ ATM ທັງໝົດ 96 ຕູ້ ແລະເຄື່ອງຮູດບັດ EDC ຈຳນວນ 808ເຄື່ອງ ທີ່ກະຈາຍຢູ່ຕາມຮ້ານຄ້າ ຮ້ານອາຫານ ໂຮງແຮມຕ່າງໆຂອງລູກຄ້າ ແລະ ກໍໄດ້ເປີດນຳໃຊ້ຜະລິດຕະພັນ Mobile Banking " JDB Yes" ແລະ ຜະລິດຕະພັນການຊຳລະຜ່ານ QR Code "Yes Pay "ທີ່ທັນສະໄໝເພື່ອຄວາມສະດວກໃນການບໍລິການດ້ານການທະນາຄານທີ່ເປັນລະບົບ digital ຕາມທິດພັດທະນາຂອງສາກົນ ແລະ ເຫັນວ່າລູກຄ້າມີຄວາມສົນໃຈ ແລະນຳໃຊ້ບໍລິການນັບມື້ນັບເພີ້ມຂຶ້ນ ຄືມີຫຼາຍກ່ວາ 16.600 Users ໃນຊ່ວງໄລຍະເວລາສັ້ນໆຂອງການເປີດນຳໃຊ້.



2. Extension of Service Network System

To expand customer base widely and provide modern services to serve customers, JDB has been renovated of headquarter office in order to make it being colorful, beautiful, modern, to arrange a suitable service area, to provide a space to serve VIP customers and service space for public customers to make customers feel comfortable and friendly when they use the service. In addition to renovation of location and quality service system and to reach international standards, JDB has expanded its service channels, including expanding the 7 service units to the community level such as the service unit at Borten Laos-China border checkpoint in Luangnamtha Province, Kaoliew service unit, in Sikhottabong District, Thongkhankham service unit in Chanthabury District, Nonsavang Village service unit (Vangxai) in Xaysettha District, Vientiane Center service booth, KM2 service unit in Pakse District, and PTT service unit at Pakxong District. Up to now, JDB has a total of 60 service units and booths, including its headquarter office. In addition, JDB has revised and improve ATM locations and EDC to increase customer service through ATM and EDC efficiently. Currently, there are 96 ATMs and 808 EDCs distributed in its customer's restaurants, hotels and also launched Mobile Banking "JDB Yes" and payment products via modern QR Code "Yes Pay" to facilitate digital banking services in line with international development and the number of customers are increasingly interested in and using more and more services, at a short time of launching services, more than 16,600 users applied to use it.







JDB

ທະນາຄານຮ່ວມພັດທະນາ

ໜ່ວຍບໍລິການ ທະນາຄານຮ່ວມພັດທະນາ



“ເຕີບໃຫ່ຍໄປພ້ອມກັນ”

“BLOOMING TOGETHER”

LINE QR code

Website www.jdbbank.com.la

jdbbankofficial

Hotline 1499







3. ການລະດົມເງິນຝາກ

ທະນາຄານຮ່ວມພັດທະນາໄດ້ນຳໃຊ້ກົນລະຍຸດ ແລະ ຍຸດທະວິທີຫຼາກຫຼາຍຮູບແບບ ເປັນຕົ້ນແມ່ນການຂະຫຍາຍຊ່ອງທາງບໍລິການຢ່າງກ້ວາງຂວາງລົງສູ່ຈຸດຊຸມຊົນຕ່າງໆໃນຂອບເຂດທົ່ວປະເທດພ້ອມທັງໄດ້ປັບປຸງປ່ຽນແປງສູນບໍລິການສຳນັກງານໃຫຍ່ໃຫ້ມີຄວາມສະດວກສະບາຍ ທັນສະໄໝໂອ່ໂຖງກ່ວາເກົ່າ ເປັນທີ່ດຶງດູດໃຈລູກຄ້າ,ປັບປຸງລະບົບບໍລິການໄດ້ຄຸນນະພາບມາດຕະຖານສາກົນ ISO 9001:2015,ການຈັດໂປຣໂມຊັ່ນ, ການແຈກຂອງຂວັນ, ການຈັດ events, ການຕັ້ງບູດບໍລິການໃນເທດສະການສຳຄັນຢູ່ແຕ່ລະທ້ອງຖິ່ນ,ການລົງຫາລູກຄ້າຢູ່ຕາມສຳນັກງານອົງການ ແລະ ບໍລິສັດຕ່າງໆ ເພື່ອເຜີຍແຜ່ ແລະ ອະທິບາຍຜະລິດຕະພັນຕ່າງໆທີ່ມີແລະອະທິບາຍຜົນປະໂຫຍດທີ່ລູກຄ້າຈະໄດ້ຮັບຈາກການນຳໃຊ້ຜະລິດຕະພັນຕ່າງໆຂອງ JDB, ຈັດງານພົບປະລູກຄ້າ, ການໂຄສະນາຜ່ານສື່ຕ່າງໆ ເຫັນໄດ້ວ່າປະຊາຊົນແລະສັງຄົມທົ່ວໄປໄດ້ມີຄວາມຮັບຮູ້ເຂົ້າໃຈຜະລິດຕະພັນຕ່າງໆ ແລະການບໍລິການທີ່ທັນສະໄໝຂອງ JDB ເຮັດໃຫ້ລູກຄ້າມານຳໃຊ້ບໍລິການກັບ JDB ນັບມື້ນັບເພີ້ມຂຶ້ນ ຄືລູກຄ້າມາເປີດບັນຊີເງິນຝາກໃໝ່ ເພີ້ມຂຶ້ນ 41.220 ບັນຊີ ເທົ່າກັບ 45,80% ຂອງແຜນການ ແລະ ຈຳນວນບັນຊີລວມເພີ້ມຂຶ້ນຈາກປີຜ່ານມາ 23,88% ແລະ ສາມາດລະດົມເງິນຝາກໄດ້ ຈຳນວນ 630 ຕື້ກີບ ເທົ່າກັບ 90% ຂອງແຜນການປີ ແລະ ເພີ່ມຂຶ້ນຈາກປີກາຍ 28,31%, ຍອດເງິນຝາກລວມບັນລຸໄດ້ 3.049,05 ຕື້ກີບ ເທົ່າກັບ 97,77%% ຂອງແຜນການ ແຕ່ເພີ່ມຂຶ້ນຈາກປີຜ່ານມາ 26,08%. ການທີ່ບໍ່ສາມາດປະຕິບັດໄດ້ຕາມແຜນການ ຍ້ອນວ່າ ທະນາຄານຍັງສືບຕໍ່ໄດ້ຮັບຜົນກະທົບຈາກສະພາບເສດຖະກິດໂດຍລວມຂອງຊາດ. ຫຼາຍບໍລິສັດໃຫຍ່ໆກໍຍັງມີບັນຫາດ້ານການເງິນ ບໍ່ສາມາດນຳເງິນມາຝາກທະນາຄານໄດ້ຢ່າງເປັນປົກກະຕິຄືຊຸມປີຜ່ານມາ.

3. Deposit Mobilization

Joint Development Bank has adopted a number of strategies and tactics, such as extensively expanded networks of service to communities nationwide as well as improving the service center to be more modern,convenience, attractive customer service, improving the service system to be international quality. ISO 9001: 2015, arrangement of promotions, gifts, events, service booths at local events, to meet with customers in their offices, organizations and companies to disseminate and explain our available products, the benefits that the customers will receive from using JDB products, meeting customers, advertising via medias that people and societies are perceived and understood the products and modern services of JDB that make customers use the JDB service increasingly such as 41,220 are new customer open accounts equivalent to 45.80% of the plan and number of accounts increased from the previous year 23.88% and deposit mobilization reached 630 billion kip equivalent to 90% of the annual plan and increased 28.31% from last year, total deposits reached 3,049.05 billion kip, equal to 97.77% of the plan, but it was increased 26.08% from last year. The failure to implement the plan because the bank continues to be affected by the overall national economy. Many big companies still have financial problems that cannot bring money to deposit in the bank regularly as previous years.

4. ການປ່ອຍກູ້

ທະນາຄານຮ່ວມພັດທະນາໄດ້ປະກອບສ່ວນພັດທະນາເສດຖະກິດຂອງປະເທດ ຕາມແຜນຍຸດທະສາດທີ່ກຳນົດໄວ້ຄືໜ່ວຍບໍລິການຂອງທະນາຄານຮ່ວມພັດທະນາຢູ່ທ້ອງຖິ່ນໃດແມ່ນໃຫ້ປະກອບສ່ວນພັດທະນາທ້ອງຖິ່ນນັ້ນໂດຍການປ່ອຍສິນເຊື່ອໃຫ້ຫົວໜ່ວຍທຸລະກິດບົນພື້ນຖານການໄລ່ລຽງທຸລະກິດມີຜົນກຳໄລເພື່ອເປັນທຶນປະຕິບັດໂຄງການທີ່ມີປະສິດທິຜົນລວມທັງສະໜອງທຶນໃຫ້ແກ່ທຸລະກິດຂະໜາດນ້ອຍ,ຂະໜາດກາງ,ການສ້າງເສດຖະກິດຄອບຄົວ ແລະການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນຢູ່ແຕ່ລະທ້ອງຖິ່ນ. ໃນປີ 2018 ນີ້ ທະນາຄານຮ່ວມພັດທະນາໄດ້ປ່ອຍສິນເຊື່ອດ້ວຍຫຼາຍຜະລິດຕະພັນປະກອບມີ: ສິນເຊື່ອລູກຄ້າລາຍໃຫຍ່ (Corporate), ສິນເຊື່ອສຳລັບ SME,ຜະລິດຕະພັນສິນເຊື່ອຫັນຊັບເປັນທຶນ,ເງິນກູ້ພະນັກງານລັດຖະກອນ, ເງິນກູ້ເພື່ອການສຶກສາ, ເງິນກູ້ເພື່ອງານແຕ່ງດອງ ແລະ ເງິນກູ້ສ່ວນບຸກຄົນ ຊຶ່ງສາມາດປ່ອຍສິນເຊື່ອໄດ້ຈຳນວນ 282,9 ຕື້ກີບ (ຄິດໄລ່ຕາມຍອດທ້າຍປີ) ເທົ່າກັບ 50,52% ຂອງແຜນການແຕ່ຖ້າຄິດໄລ່ຕາມຈຳນວນປ່ອຍກູ້ເປັນແຕ່ລະວັນ ແມ່ນມີຈຳນວນ 817,53 ຕື້ກີບ ເທົ່າກັບ 146% ຂອງແຜນການປີ, ຍອດສິນເຊື່ອເພີ່ມຂຶ້ນຈາກປີຜ່ານມ14,45%.

4. Loan

Joint Development Bank has adopted a number of strategies and tactics, such as extensively expanded networks of service to communities nationwide as well as improving the service center to be more modern, convenience, attractive customer service, improving the service system to be international quality. ISO 9001: 2015, arrangement of promotions, gifts, events, service booths at local events, to meet with customers in their offices, organizations and companies to disseminate and explain our available products, the benefits that the customers will receive from using JDB products, meeting customers, advertising via medias that people and societies are perceived and understood the products and modern services of JDB that make customers use the JDB service increasingly such as 41,220 are new customer open accounts equivalent to 45.80% of the plan and number of accounts increased from the previous year 23.88% and deposit mobilization reached 630 billion kip equivalent to 90% of the annual plan and increased 28.31% from last year, total deposits reached 3,049.05 billion kip, equal to 97.77% of the plan, but it was increased 26.08% from last year. The failure to implement the plan because the bank continues to be affected by the overall national economy. Many big companies still have financial problems that cannot bring money to deposit in the bank regularly as previous years.





5. ການແກ້ໄຂໜີ້ NPL

ທະນາຄານຮ່ວມພັດທະນາໄດ້ປະກອບສ່ວນພັດທະນາເສດຖະກິດຂອງປະເທດ ຕາມແຜນຍຸດທະສາດທີ່ກຳນົດໄວ້ຄືໜ່ວຍບໍລິການຂອງທະນາຄານຮ່ວມພັດທະນາຢູ່ທ້ອງຖິ່ນໃດແມ່ນໃຫ້ປະກອບສ່ວນພັດທະນາທ້ອງຖິ່ນນັ້ນໂດຍການປ່ອຍສິນເຊື່ອໃຫ້ຫົວໜ່ວຍທຸລະກິດບົນພື້ນຖານການໄລ່ລຽງທຸລະກິດມີຜົນກຳໄລເພື່ອເປັນທຶນປະຕິບັດໂຄງການທີ່ມີປະສິດທິຜົນລວມທັງສະໜອງທຶນໃຫ້ແກ່ທຸລະກິດຂະໜາດນ້ອຍ,ຂະໜາດກາງ,ການສ້າງເສດຖະກິດຄອບຄົວ ແລະການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນຢູ່ແຕ່ລະທ້ອງຖິ່ນ. ໃນປີ 2018 ນີ້ ທະນາຄານຮ່ວມພັດທະນາໄດ້ປ່ອຍສິນເຊື່ອດ້ວຍຫຼາຍຜະລິດຕະພັນປະກອບມີ: ສິນເຊື່ອລູກຄ້າລາຍໃຫຍ່ (Corporate), ສິນເຊື່ອສຳລັບ SME,ຜະລິດຕະພັນສິນເຊື່ອຫັນຊັບເປັນທຶນ,ເງິນກູ້ພະນັກງານລັດຖະກອນ, ເງິນກູ້ເພື່ອການສຶກສາ, ເງິນກູ້ເພື່ອງານແຕ່ງດອງ ແລະ ເງິນກູ້ສ່ວນບຸກຄົນ ຊຶ່ງສາມາດປ່ອຍສິນເຊື່ອໄດ້ຈຳນວນ 282,9 ຕື້ກີບ (ຄິດໄລ່ຕາມຍອດທ້າຍປີ) ເທົ່າກັບ 50,52% ຂອງແຜນການແຕ່ຖ້າຄິດໄລ່ຕາມຈຳນວນປ່ອຍກູ້ເປັນແຕ່ລະວັນ ແມ່ນມີຈຳນວນ 817,53 ຕື້ກີບ ເທົ່າກັບ 146% ຂອງແຜນການປີ, ຍອດສິນເຊື່ອເພີ່ມຂຶ້ນຈາກປີຜ່ານມ14,45%.

5. Non-Performance Loan Collection (NPL)

Along with credit or loan, Joint Development Bank pays attention to manage, monitor the loan in order to prevent NPL exceeds 3% as set out in the business plan. The Bank has focused on accelerating the collect NPL debt in both inside and outside its previous plan, using the measures such as reconciliation, asset allocation and prosecution. This year, NPL can be collected up to 4.04 billion kip, 482 million kip of its principal and 190 million kip of interest. The NPL ratio continues to fall lower than 1%.










6. ການພັດທະນາລະບົບ IT ໃນຍຸກ 4.0

ທະນາຄານຮ່ວມພັດທະນາໄດ້ກຳນົດແຜນຍຸດທະສາດພັດທະນາທະນາຄານໃຫ້ເປັນທະນາຄານທີ່ທັນສະໄໝໄດ້ມາດຕະຖານສາກົນ. ການພັດທະນາລະບົບ IT ແລະ ການພັດທະນາຜະລິດຕະພັນທາງອີເລັກໂທຣນິກ ຖືເປັນວຽກບຸລິມະສິດ ແລະ ເປັນຕົວຊີ້ວັດເຖິງຄວາມທັນສະໄໝຂອງທະນາຄານ. ໃນປີ 2018ນີ້ ທະນາຄານຮ່ວມພັດທະນາໄດ້ປັບປຸງ ແລະ ພັດທະນາລະບົບ IT ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານ ເປັນຕົ້ນແມ່ນໄດ້ຕິດຕັ້ງລະບົບຄວາມປອດໄພສຳລັບອຸປະກອນ Core Switch ແລະ Firewal ແລະ ໄດ້ປັບປຸງການຄຸ້ມຄອງຄວາມປອດໄພລະບົບ Network (Network Infra Security), ໄດ້ພັດທະນາລະບົບ QR Code Payment ຢູ່ໃນ Mobile Banking Application (JDB Yes) ແລະ ໄດ້ພັດທະນາໂປຣແກຣມຂຶ້ນທະບຽນຮ້ານຄ້າທີ່ນຳໃຊ້ QR Code Payment “Yes Pay” ຂອງ JDB, ໄດ້ພັດທະນາລະບົບ Bill Payment ຊຳລະຄ່ານ້ຳ, ຄ່າໂທລະສັບ, ການເຕີມມູນຄ່າໂທແບບ onlineຜ່ານມືຖື,ໄດ້ພັດທະນາໂປຣແກຣມເປັນຕົວແທນຊື້ຂາຍ ແລະ ຊຳລະສະສາງຫວຍພັດທະນາລາວຜ່ານມືຖື, ໄດ້ພັດທະນາໂປຣແກຣມບໍລິຫານຈັດການສາງໃຫ້ແກ່ພະແນກຫ້ອງການນຳໃຊ້, ໄດ້ພັດທະນາໂປຣແກຣມບໍລິຫານຈັດການເງິນກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນຂອງພະນັກງານ,ໄດ້ພັດທະນາໂປຣແກຣມ Online Statement ໃຫ້ແກ່ຮ້ານຄ້າທີ່ນຳໃຊ້ QR Code Payment “Yes Pay” ຂອງ JDB. ການພັດທະນາດັ່ງກ່າວນັ້ນລ້ວນແຕ່ແມ່ນການພັດທະນາຜະລິດຕະພັນອີເລັກໂທຣນິກ ເພື່ອສ້າງຄວາມສະດວກສະບາຍໃຫ້ແກ່ລູກຄ້າທີ່ມາໃຊ້ບໍລິການກັບ JDB ແລະ ເຮັດໃຫ້ JDB ກາຍເປັນ Digital Banking ເທື່ອລະກ້າວຕາມແຜນຍຸດທະສາດທີ່ໄດ້ກຳນົດໄວ້.

6. IT System Development in the Industrial Revolution 4.0

Joint Development Bank has its strategy to develop the bank to become a modern bank in line with international standards. IT system development and electronic products development is a priority and an indicator of the bank's modernity. In 2018, Joint Development Bank has upgraded and developed a high quality and standard IT system, including installing a security system for Core Switch and Firewall devices and improved Network Infra Security, developing QR Code Payment system in Mobile Banking Application (JDB Yes) and developing registration program for the shops those use QR Code payment system, developing Bill Payment system for water supply, telephone, online mobile recharge, developed a software for agent trading and Lao lottery payment via mobile phone, developed software for inventory management to the office department, developed a program for collaborative fund management of employees, developed the Online Statement program to shops that applied QR Code Payment "Yes Pay" of JDB. Such developments are the development of electronic products to provide the facilities to customers who use JDB services and to make JDB become Digital Banking in accordance with strategy plan.











7. ການພັດທະນາລະບົບບັດ

ການພັດທະນາລະບົບບັດຖືເປັນວຽກງານນຶ່ງທີ່ສຳຄັນ ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ຮັບປະກັນຄວາມປອດໄພ ໃນການບໍລິການລູກຄ້າທັງບັດພາຍໃນແລະບັດສາກົນ,ຊຶ່ງໃນປີນີ້ທະນາຄານຮ່ວມພັດທະນາໄດ້ສືບຕໍ່ປັບປຸງແລະພັດທະນາລະບົບຄຸ້ມຄອງບັດ (CMS) ແລະ ລະບົບ ATM Switching ທີ່ເປັນລະບົບ Outsourcing ກັບບໍລິສັດ eProtea ຂອງປະເທດມາເລເຊັຽ ໃຫ້ໄດ້ມາດຕະຖານສາກົນ ເຮັດໃຫ້ການບໍລິການ ແລະ ການຄຸ້ມຄອງການນຳໃຊ້ບັດຕ່າງໆມີຄວາມສະດວກສະບາຍ ແລະ ມີຄວາມປອດໄພຫຼາຍຂຶ້ນ. ພ້ອມກັນນັ້ນ ທະນາຄານກໍໄດ້ປັບປຸງລະບົບຕູ້ ATM , ເຄື່ອງຮູດບັດ EDC ໃຫ້ໄດ້ມາດຕະຖານ EMV ສາມາດຮັບປະກັນການນຳໃຊ້ບັດປອມລັກຖອນເງິນສົດຜ່ານຕູ້ ATM ແລະ ເຄື່ອງຮູດບັດ EDC ໄດ້ຄືດັ່ງທີ່ຜ່ານມາ, ໄດ້ສືບຕໍ່ພັດທະນາລະບົບ ATM Switchingໃຫ້ສາມາດຮອງຮັບບັດສາກົນຕ່າງໆ ໄດ້ເປັນຕົ້ນແມ່ນບັດ MasterCard,-JCB, VISA, Union Pay ແລະ ບັດອື່ນໆ. ນອກຈາກນັ້ນ ທະນາຄານຮ່ວມພັດທະນາກໍຍັງໄດ້ຮ່ວມມືກັບບໍລິສັດຕ່າງປະເທດ ສຳເລັດການພັດທະນາລະບົບຊຳລະທາງອີເລັກໂທຣນິກ Wechat Pay ແລະ Alipay ແລະ ສາມາດນຳໃຊ້ບໍລິການໄດ້ແລ້ວ. ເພື່ອເຮັດໃຫ້ລູກຄ້າມີທາງເລືອກຫຼາຍຂຶ້ນທະນາຄານຮ່ວມພັດທະນາໄດ້ຮ່ວມມືກັບບໍລິສັດ UPI ອອກບັດ Union-pay Debit ແລະ Unionpay Creditທີ່ເປັນທັງບັດພາຍໃນແລະເປັນບັດສາກົນ ແລະ ເຫັນວ່າການອອກບັດດັ່ງກ່າວ ພ້ອມທັງບັດ ATM ຂອງ JDB ແລະ ບັດ VISA ນັບມື້ນັບເພີ່ມຂຶ້ນ.

7. Card System Development

Card system development is an important task that needs to take in to account to ensure the security of both domestic and international customer service, which this year, Joint Development Bank has continued to improve and develop a card management system (CMS) and ATM Switching which it is outsourcing with Malaysia's eProtea Company, provides international standards making the services and management of card usage more comfortable and safer. At the same time, the bank has improved its ATM system, EDC to be reached EMV standard, be able to secure to use false cards withdraw cash through ATM and EDC, continued to develop ATM Switching to be acceptable for international cards such as MasterCard, JCB, VISA, Union Pay and other cards. In addition, Joint Development Bank also cooperates with foreign companies to develop electronic payment system Wechat Pay and Alipay and these service can be used. In order to make more options available for customers, Joint Development Bank collaborated with UPI to issue UnionPay Debit and UnionPay Credit cards, both domestic and international cards, and the card issuance, as well as the number of JDB's ATM and VISA cards have increased.


JDB
ATM
24 hours




JDB





8. ວຽກງານບັນຊີ

ໃນປີ 2018 ນີ້ ຄະນະຜູ້ບໍລິຫານໄດ້ມອບໝາຍໃຫ້ພະແນກບັນຊີແລະການເງິນສືບຕໍ່ປະຕິບັດແຜນງານຂອງປີຜ່ານມາໃຫ້ສຳເລັດໂດຍພື້ນຖານຄືໄດ້ຈັດຝຶກອົບຮົມກ່ຽວກັບລະບົບບັນຊີທະນາຄານ, ລະບົບບັນຊີມາດຕະຖານສາກົນ (AIS), ລະບົບລາຍງານຕາມມາດຕະຖານສາກົນ (IFRS) ໃຫ້ພະນັກງານຫຼາຍຄັ້ງໂດຍຜູ້ຊ່ຽວຊານບັນຊີທັງພາຍໃນແລະຈາກຕ່າງປະເທດ ເຮັດໃຫ້ພະນັກງານມີຄວາມຮັບຮູ້ ແລະ ເຂົ້າໃຈວຽກງານບັນຊີເພີ່ມຂຶ້ນ, ໄດ້ຈັດຝຶກອົບຮົມການລົງບັນຊີ ແລະ ລະບົບລາຍງານຕ່າງໆໃຫ້ໜ່ວຍບໍລິການທົ່ວລະບົບຫຼາຍຄັ້ງພ້ອມທັງໄດ້ຕິດຕາມການປະຕິບັດວຽກງານບັນຊີຕົວຈິງຂອງໜ່ວຍຕ່າງໆ ແລະຍັງໄດ້ຈັດສົ່ງພະນັກງານບັນຊີຈາກສຳນັກງານໃຫຍ່ລົງໄປຊ່ວຍຝຶກອົບຮົມກັບທີ່ໃຫ້ແກ່ໜ່ວຍບໍລິການທີ່ເປີດໃໝ່, ໄດ້ດັດແກ້ການລົງບັນຊີຜິດພາດຫຼືລົງບັນຊີບໍ່ຖືກກັບຫົວບັນຊີຕາມການແນະນຳຂອງຜູ້ກວດສອບທັງພາຍໃນແລະພາຍນອກ.ພະແນກບັນຊີໄດ້ເຮັດລະບົບລາຍງານໃຫ້ທະນາຄານກາງທັນຕາມກຳນົດເວລາ ແລະ ມີຄວາມຖືກຕ້ອງ ພ້ອມທັງໄດ້ນຳໃຊ້ລະບົບ MISຂອງລະບົບ Core Banking ເຮັດລາຍງານຂໍ້ມູນຕ່າງໆເພີ່ມເຕີມໃຫ້ຄະນະຜູ້ບໍລິຫານເພື່ອເປົ້າໝາຍການບໍລິຫານຈັດການທາງທຸລະກິດ. ພະແນກບັນຊີເປັນເຈົ້າການຕິດຕາມການປະຕິບັດຕົວເລກ KPI ແລະ ຜົນການດຳເນີນງານ ລາຍຮັບ ລາຍຈ່າຍ ກຳໄລຂາດທຶນ ຂອງແຕ່ລະພະແນກ ແລະແຕ່ລະໜ່ວຍບໍລິການ,ແລ້ວລາຍງານໃຫ້ຄະນະຜູ້ບໍລິຫານເພື່ອເປັນບ່ອນອີງໃຫ້ຄະນະຜູ້ບໍລິຫານໃນການກຳນົດຍຸດທະສາດໃຫ້ແຕ່ລະພາກສ່ວນນຳໄປຜັນຂະຫຍາຍແລະຈັດຕັ້ງປະຕິບັດພ້ອມທັງເປັນເຈົ້າການກຳນົດຕົວເລກ KPI ໃນປີຖັດໄປ ຕາມການຊີ້ນຳຂອງຄະນະຜູ້ບໍລິຫານ.







8. Accounting

In 2018, the Board of Directors has assigned to the Accounting and Finance Division to continue implementing the plan of the past year, training course on banking accounting system, international accounting system (AIS), International Financial Reporting Standards (IFRS) for staffs has been organized many times by domestic and international accounting professionals, making staff more aware of and understand accounting work, accounting training, and reporting systems for service units also has been conducted many times, it also has monitored the implementation of the actual accounting activities of the units and also appointed the accounting staff from the headquarter to train the new service-opened units, corrected the error accounting or incorrect accounting as instructed by the internal and external auditors. The Accounting Division has been reporting to the Central Bank on time and accurate basis, as well as using the MIS system of the Core Banking system to provide additional information to the Board of Directors for business management purpose. The Accounting Division follows up the performance of the KPI figures and the results of the income and expense, profit and loss of each division and each service unit, and reports to the Board of Directors as a reference to the Board of Directors in determining each section's strategy for implementation, and to determine KPI figure of coming year according to the supervision of the Board of Directors.

9. ອຽກງານບໍລິຫານທຶນ ແລະ ບໍລິການລະຫວ່າງປະເທດ

ໃນປີ 2018 ພະແນກບໍລິຫານທຶນ ແລະ ບໍລິການລະຫວ່າງປະເທດໄດ້ຄຸ້ມຄອງແຫຼ່ງທຶນ ທີ່ມີຢູ່ຢ່າງມີປະສິດທິພາບພ້ອມທັງໄດ້ຈັດສັນການນຳໃຊ້ແຫຼ່ງທຶນໄດ້ຮັບຜົນປະໂຫຍດສູງສຸດ ເປັນຕົ້ນແມ່ນໄດ້ຈັດສັນການລົງທຶນໃນອຽກງານສິນເຊື່ອ 817 ຕື້ກີບ, ການລົງທຶນໃນການຊື້ພັນທະບັດ ປະມານ 77,8 ຕື້ກີບ, ລົງທຶນໃນການຊື້ຂາຍເງິນຕາຈຳນວນນຶ່ງ, ການຊື້ຮຸ້ນ ປະມານ 13 ຕື້ກີບ ແລະອື່ນໆ. ຊອກຫາແຫຼ່ງທຶນຈາກສະຖາບັນການເງິນຕ່າງໆຢູ່ພາຍໃນປະເທດ ໄດ້ 130 ຕື້ກີບ ເພື່ອສ້າງສະພາບຄ່ອງໃນການດຳເນີນທຸລະກິດຂອງທະນາຄານ, ໄດ້ບໍລິຫານຄວາມສ່ຽງສະພາບຄ່ອງເງິນສົດຂອງໜ່ວຍບໍລິການເປັນປະຈຳວັນ ແລະ ນຳໃຊ້ເງິນສົດທີ່ມີຢູ່ພາຍໃນປະເທດ ແລະ ເງິນຝາກຢູ່ຕ່າງປະເທດໃຫ້ເກີດປະໂຫຍດສູງສຸດສ້າງລາຍຮັບໃຫ້ແກ່ທະນາຄານ. ອຽກງານການບໍລິການລະຫວ່າງປະເທດ ເປັນຕົ້ນແມ່ນ ການບໍລິການຮັບແລະອອກໜັງສືສິນເຊື່ອເຫັນວ່າຫຼຸດລົງຈາກປີຜ່ານມາ,ການອອກໜັງສືຄ້ຳປະກັນເພີ່ມຂຶ້ນເລັກນ້ອຍ. ໃນການໂອນເງິນລະຫວ່າງປະເທດທະນາຄານໄດ້ຍຸຕິການໂອນເງິນແບບ Mail Transfer ທີ່ນຳໃຊ້ຜ່ານມາ ໃຫ້ມານຳໃຊ້ຜ່ານລະບົບ SWIFT ແທນ ທີ່ຮັບປະກັນ ແລະ ວ່ອງໄວກ່ວາ.

9. Treasury Management and International Services

In 2018, the Treasury Management Division and International Services has effectively managed the existing treasury sources and allocated the use of fund as maximum benefit such as 817 billion kip for credit investment, 77.8 billion kip for bond purchases, investment on foreign currency trade, 13 billion kip for buying shares, etc. Seeking financial resources from domestic financial institutions can be reached 130 billion Kip to create liquidity in the banking business, managed liquidity risk of the daily service unit and use cash in the country and deposits abroad to maximize revenue to the bank. International services, such as credit services and issuance of letter of credit have declined since last year, issuance of letter of guarantee as few increase. International transfer, the bank terminated money transfer in form of Mail Transfer by using SWIFT system instead which be safer and faster.





10. ວຽກງານຄັງເງິນສົດ

ວຽກງານຄັງເງິນສົດຖືເປັນວຽກງານທີ່ສຳຄັນ ເປັນຜູ້ຮັບເງິນສົດ ແລະ ແຈກຢາຍເງິນສົດໃຫ້ໜ່ວຍບໍລິການຕ່າງໆ ລວມທັງຕູ້ ATM ແລະ ຍັງເປັນຜູ້ຮັກສາເງິນສົດ. ຫົວໜ້າຂະແໜງເງິນສົດ ແມ່ນໄດ້ຕິດຕາມ ສຶກສາອົບຮົມພະນັກ ງານຂອງຕົນຢ່າງເປັນ ປະຈຳ ໃຫ້ເປັນຄົນຊື່ສັດ ມີຈັນຍາບັນໃນການເຮັດວຽກ ແລະ ຮັກສາຄວາມລັບໄດ້ດີ. ໃນປີ 2018 ນີ້ ໄດ້ຮັບພະນັກງານ ໃໝ່ເຂົ້າມາເພີ້ມ, ໄດ້ສັບຊ້ອນພະນັກງານຄືນໃໝ່ແລະໄດ້ມອບ ໝາຍຄວາມຮັບຜິດຊອບ ແລະ ໜ້າທີ່ຢ່າງຂາດຕົວ, ບໍ່ມີປາກົດ ການຫຍໍ້ທໍ້ຕ່າງໆເກີດຂຶ້ນ, ໄດ້ປັບປຸງສະຖານທີ່ເຮັດວຽກໃຫ້ມີ ຄວາມສະດວກແລະປອດໄພ, ການເບີກຈ່າຍເງິນສົດແມ່ນໄດ້ ປະຕິບັດຫັກການ First In - First Outຕາມລະບຽບຫຼັກ ການຂອງລະບົບສາງເພື່ອກວດສອບການປະພຶດທີ່ບໍ່ດີຂອງພະ ນັກງານ.

10. Cashier

Cashier work is an important task as a cash receiver and distributor to various service units including ATM and also a cash keeper. The Chief of cahier division has closely and regularly monitored his/her staffs to become honest, ethical, and keep confidentially. In 2018, new employees have been recruited, employees have been re-arranged and assigned irresponsible responsibilities and duties, no negative phenomenon happened, improved accessibility and safe working places, cash disbursements are implemented the First In-First Out rule in accordance with the inventory system rules to monitor the bad behavior of employees.











11. ວຽກງານຫ້ອງການ

ພະແນກຫ້ອງການໄດ້ປະຕິບັດຕາມແຜນງານ ປີ 2018ໃນການ ສະໜັບສະໜູນຈັດຫາອັດຖຸອຸປະກອນ ສະຖານທີ່ ເຄື່ອງມືຮັບ ໃຊ້ວຽກງານວິຊາສະເພາະ, ພາຫະນະ ຕະຫຼອດຮອດຄ່າໃຊ້ຈ່ຍ ຕ່າງໆ ໃນການດຳເນີນທຸລະກິດຂອງທະນາຄານ ແລະ ນອກ ຈາກນັ້ນກໍຍັງໄດ້ຄຸ້ມຄອງຊັບສິນຂອງທະນາຄານແບບລວມສູນ, ຕິດຕາມການນຳໃຊ້ແລະຫັກຄ່າຫຼ້ຽຫ້ຽນຊັບສິນທັງໝົດຂອງ ທະນາຄານ ແລະ ໄດ້ນຳເອົາຊັບສິນເກົ່າ ເປເພ, ຊັບສິນທີ່ບໍ່ນຳ ໃຊ້ປະມູນຂາຍອອກ, ຈັດພິມແບບຟອມຕ່າງໆ ແລະຈັດຊື້ເຄື່ອງ ໃຊ້ຫ້ອງຫານໃນຮູບແບບຂອງຄະນະກຳມະການໂດຍພື້ນຖານ ມີການສົມທຽບລາຄາ. ກອງເລຂາກໍໄດ້ຈັດວາລະກອງປະຊຸມ ໃຫ້ສະພາບໍລິຫານ,ໃຫ້ຄະນະອຳນວຍການ,ໃຫ້ຄະນະກຳມະ ການຕ່າງໆລວມທັງການຕ້ອນຮັບແຂກທັງພາຍໃນ ແລະ ແຂກ ຕ່າງປະເທດແລະເຫັນວ່າທຸກກອງປະຊຸມໄດ້ດຳເນີນໄປດ້ວຍດີ.

11. Office Works

Office Division carried out duties in accordance with plan of 2018 to support and procure equipment, location, tools used for professional, vehicles including the cost of bank's business operation and it also managed in a centralized for the bank's assets, monitoring the use and depreciation for all assets of the bank and brought old and broken properties, unusable properties for auction sale, print out forms and purchasing office supplies in the form of committee by price comparison basis. The secretariat has organized a meeting agenda for the Board of Directors, Directors, committees, including the reception of guests both domestic and foreign delegation and that all meetings are well organized.

12. ອຽກງານກວດສອບພາຍໃນ

ພະແນກກວດກາພາຍໃນໄດ້ປະຕິບັດແຜນງານກວດສອບ ໃນປີ 2018 ໄດ້ຕາມແຜນການ ໂດຍສະເພາະແມ່ນການກວດກາໄປຕາມແຜນຄືໄດ້ລົງກວດກາວຽກງານຂອງແຕ່ລະພະແນກ,ແຕ່ລະໜ່ວຍບໍລິການ ແລະ ກວດກາວຽກງານ AML ບ່ອນລະ 1 ຄັ້ງ ແລະ ໄດ້ໃຫ້ຄຳແນະນຳໃນສິ່ງທີ່ກວດພົບເຫັນເພື່ອປັບປຸງແກ້ໄຂຕ່ອງກທີ່ປະຕິບັດບໍ່ຖືກຕ້ອງຕາມລະບຽບຫຼັກການເປັນຕົ້ນແມ່ນການລົງບັນຊີບໍ່ຖືກຫົວບັນຊີ, ເນື້ອໃນການລົງບັນຊີບໍ່ຄົບຖ້ວນ ແລະ ອື່ນໆ. ລົງກວດການອກແຜນ ຈຳນວນ 4 ຄັ້ງ ໂດຍສະເພາະ ແມ່ນການກວດກາການປະຕິບັດຜິດລະບຽບ ຫຼື ການສໍ້ໂກງຂອງພະນັກງານ, ກວດກາວຽກງານ ISO, ກວດກາການປະຕິບັດໜ້າທີ່ຂອງຫົວໜ້າເຂດ ແລະ ນຳສະເໜີຂໍທິດຊີ້ນຳຄະນະຜູ້ບໍລິຫານແກ້ໄຂ,ໄດ້ລົງກວດກາບັນຊີສິນເຊື່ອທີ່ມີບັນຊີເງິນຝາກເປັນຫຼັກຊັບຄ້ຳປະກັນໂດຍສົມທົບກັບພະແນກສິນເຊື່ອ ແລະພາກສ່ວນອື່ນທີ່ກ່ຽວຂ້ອງ. ນອກຈາກນັ້ນກໍຍັງໄດ້ລົງກວດກາຄັງເງິນສົດແບບສຸກເສີນ ຢູ່ບາງໜ່ວຍບໍລິການ ແລະ ຢູ່ຕູ້ ATM. ພະແນກກວດກາພາຍໃນໄດ້ເປັນເຈົ້າການປະສານງານກັບຜູ້ກວດສອບຂອງທະນາຄານແຫ່ງ ສປປ ລາວ ແລະ ຜູ້ກວດສອບພາຍນອກມາກວດກາວຽກງານປະຈຳປີຂອງທະນາຄານພ້ອມທັງເປັນຜູ້ສັງລວມບັນຫາຂໍ້ຄົດເຫັນ ແລະ ຄຳແນະນຳໃນການແກ້ໄຂບັນຫາແຕ່ລະເລື້ອງ ທີ່ຜູ້ກວດສອບພາຍນອກໄດ້ກວດພົບເຫັນໃຫ້ຄະນະຜູ້ບໍລິຫານແລະພາກສ່ວນຕ່າງໆຮັບຊາບ ແລະ ຫາວິທີແກ້ໄຂຕາມຜູ້ກວດສອບແນະນຳ ເຮັດໃຫ້ທະນາຄານດຳເນີນທຸລະກິດຖືກຕ້ອງຕາມລະບຽບຫຼັກການ ແລະ ສ້າງຄວາມໜ້າເຊື່ອຖືໃຫ້ແກ່ລູກຄ້າແລະສະຖາບັນການເງິນອື່ນໆທັງພາຍໃນແລະຕ່າງປະເທດ. ນອກຈາກນັ້ນພະແນກກວດກາພາຍໃນຍັງໄດ້ເປັນເຈົ້າການປະຕິບັດຕາມການຊີ້ນຳຂອງທະນາຄານແຫ່ງ ສປປ ລາວ ໃນການປະຕິບັດຫຼັກການ Basel II ໂດຍເຮັດສຳເລັດການວິເຄາະຊ່ອງຫວ່າງ ແລະ ໄດ້ເຮັດບົດລາຍງານສົ່ງໃຫ້ທະນາຄານແຫ່ງ ສປປ ລາວ ເປັນທີ່ຮຽບຮ້ອຍທັນຕາມກຳນົດເວລາ.



12. Internal Auditing

In 2018, the Internal Audit Division has implemented auditing schedule according to the plan, especially the auditing each divisions, each service units, and AML work once for each, to advise on what was being found to improve the incorrect of the work performed in accordance with the rules, such as mistake of accounting records, incomplete accounting records and others. Scrutinize outside plan for 4 times, especially the auditing of staff misconduct or employee fraud, inspection of ISO work, scrutinize the performance of the head of the zone and present to the Board of Directors to solve the problem, audit of loan with the secured deposited account in collaboration with the credit division and other relevant parties. In addition, it has also audited the emergency cash fund at some service units and ATM. Internal Audit Division is actively coordinated with auditors of the Bank of Lao PDR and the internal auditors auditing the annual bank activities along with summary of the comments and recommendations to resolve each problem found by the external auditors to the Board of Directors and stakeholders to find out solutions based on recommendation made by the external auditors in order that the banks can operate its business in accordance with rules and creates reliability to customers and other financial institutions both domestic and international. In addition, the Internal Audit Division has also been implemented of the instruction of the Bank of Lao PDR on the implementation of the Basel II principles by completing the gap analysis and reporting to the Bank of Lao PDR on time.







13. ວຽກງານນິຕິກຳ

ພະແນກນິຕິກຳໄດ້ດຳເນີນວຽກງານນິຕິກຳຢ່າງເປັນປົກກະຕິ ໂດຍສະເພາະແມ່ນໄດ້ສ້າງລະບຽບໃໝ່ໃນການຄຸ້ມຄອງວຽກ ງານຫຼາຍສະບັບ,ປັບປຸງລະບຽບເກົ່າຄືນໃໝ່ໃຫ້ສອດຄ່ອງກັບ ສະພາບປະຈຸບັນລະບຽບຄຸ້ມຄອງວຽກງານສິນເຊື່ອ,ປຶ້ມຄູ່ມືສິນ ເຊື່ອ,ພາລະບົດບາດຂອງພະແນກ,ພາລະບົດບາດຂອງຄະນະອຳ ນວຍການ ແລະ ພາລະບົດບາດຂອງສະພາບໍລິຫານ, ລະບຽບ ກ່ຽວກັບວຽກງານ AML/CFT,ໄດ້ສ້າງເອກະສານສັນຍາຕ່າງໆ ປະກອບມີ ສັນຍາກູ້ຢືມເງິນ 423 ສະບັບ ແລະ ສ້າງສັນຍາກັບ ພາກສ່ວນຕ່າງໆຫຼາຍສະບັບ. ພະແນກນິຕິກຳຍັງໄດ້ເຜີຍແຜ່ລະ ບຽບກົດໝາຍຕ່າງໆໃຫ້ພະນັກງານໄດ້ຮູ້ເຊັ່ນກົດໝາຍຕ້ານການ ຟອກເງິນ ແລະສະໜອງທຶນໃຫ້ຜູ້ກໍ່ການຮ້າຍ,ກົດໝາຍວ່າດ້ວຍ ການຄ້ຳປະກັນ, ກົດໝາຍແພ່ງ, ກົດໝາຍອາຍາແລະເອກະສານ ນິຕິກຳຕ່າງໆ. ນອກຈາກນັ້ນພະແນກນິຕິກຳຍັງຮັບຜິດຊອບຕິດ ຕາມແກ້ໄຂໜີ້ NPL ທີ່ໄດ້ຟ້ອງສານ ແລະ ໜີ້ນອກຜັງຊຶ່ງ ສາມາດເກັບກູ້ໜີ້ ໄດ້ປະມານ 6ຕື້ກີບລວມທັງໜີ້ບັດປອມແລະ ໄດ້ເປັນເຈົ້າການດຳເນີນຄະດີກັບລູກຄ້າສິນເຊື່ອທີ່ຜິດສັນຍາ ຫຼື ຫຼົບຫຼີກໜີ້ສິນ ແລະໄ ດ້ຮັບຜິດຊອບເຮັດບົດລາຍງານກ່ຽວກັບ ວຽກງານ AML/CFT ສົ່ງໃຫ້ສູນຂໍ້ມູນ AML/CFT ຂອງ ທະນາຄານກາງເປັນປະຈຳ.

13. Legal Works

The Legislative Division is regularly performed legislative work, especially creating new management rules, revising the old regulations to be consistent with current situation, credit management regulations, credit manuals, division's roles, roles of Directors and the role of the Board of Directors, regulation regarding AML/CFT, created various agreements, there is 423 loan agreements have been made, and contracts have been signed with various parties. The Legislation Division has also disseminated laws to the staffs such as law on anti-money laundering and terrorist financing, law on secured transaction, civil law, criminal law and legal documents. In addition, the Legal Division is also responsible for monitoring of NPL settlement those were sued to the court and debts outside the plan, which 6 billion kip of debts can be collected, including counterfeit debts, and have prosecuted customers who default credit or escape from its debt and take responsible for making a report on AML/CFT and delivery to AML/CFT Data Center of the Central Bank regularly.



14. ວຽກງານການຕະຫຼາດ

ພະແນກການຕະຫຼາດໄດ້ປະຕິບັດຕາມແຜນການຂະຫຍາຍຖານລູກຄ້າ, ການອອກຜະລິດຕະພັນໃໝ່ ແລະ ການຂາຍຜະລິດຕະພັນດ້ວຍການນຳໃຊ້ຍຸດທະວິທີທີ່ຫຼາກຫຼາຍເປັນຕົ້ນ ແມ່ນເຮັດການໂຄສະນາຜ່ານສື່ຕ່າງໆ ເປັນຕົ້ນແມ່ນຜ່ານໜັງສືພິມ ວິດທະຍຸ ໂທລະພາບ facebook Website, ເຮັດປ້າຍໂຄສະນາ, ສົມທົບກັບໜ່ວຍບໍລິການຈັດງານ Events ຢູ່ຕາມງານເທດສະການ ແລະ ຈັດຢູ່ຕາມຮ້ານອາຫານແລະຮ້ານອື່ນໆທີ່ເປັນ Partner ກັບ JDB ເພື່ອໂຄສະນາ ແລະ ຂາຍຜະລິດຕະພັນ,ລົງຕັ້ງບູດໂຄສະນາຢູ່ກັບບໍລິສັດທີ່ເບີກຈ່າຍເງິນເດືອນຜ່ານ JDB, ຈັດລາຍການ Live ສົດ online, ໄດ້ຈົກສະຫຼາກໃຫ້ທຶນການສຶກສາໃຫ້ແກ່ນັກສຶກສາ,ຈັດພິທີຈົກສະຫລາກມອບລາງວັນໃຫຍ່ໃຫ້ແກ່ລູກຄ້າ ແລະ ອື່ນໆ ຊຶ່ງເຮັດໃຫ້ລູກຄ້າມານຳໃຊ້ບໍລິການກັບ JDB ນັບມື້ນັບເພີ່ມຂຶ້ນ. ພ້ອມກັນນັ້ນ ພະແນກການຕະຫຼາດກໍໄດ້ຕິດຕາມການປະຕິບັດຕົວເລກ KPI ຜະລິດຕະພັນຕ່າງໆທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຄື:ການຂາຍປະກັນໄພປະຕິບັດໄດ້ 11,41%, ບັດ ATM Healthy Life ປະຕິບັດໄດ້ 92,70%, ລູກຄ້າ Payroll ໄດ້ 93%, ສັນຍາລູກຄ້າ Pyroll Loan ໄດ້ 29,95%, ສັນຍາເງິນກູ້ລັດຖະກອນໄດ້ 91,65%,ເງິນກູ້ເພື່ອການສຶກສາໄດ້ 21%, ບັດນັກສຶກສາໄດ້ 133,03%. ສະເພາະໃນປີ 2018 ນີ້ພະແນກການຕະຫຼາດກໍໄດ້ຄົ້ນຄ້ວາອອກຜະລິດຕະພັນເງິນຝາກໃໝ່ຄືຜະລິດຕະພັນເງິນຝາກສະສົມເພີ່ມຊັບຮັບດອກເບ້ຍຄູນ 2 ແລະທະນາຄານກາງກໍໄດ້ອະນຸຍາດແລ້ວຊຶ່ງຄາດວ່າຈະປະກາດໃຫ້ບໍລິການລູກຄ້າພາຍໃນເດືອນມັງກອນ ປີ 2019.

14. Marketing

The Marketing Division has followed a plan to expand customer base, issue new products, and sell products by using a variety of tactics, such as advertising through medias, newspaper, radio, television, facebook Website, billboards, in collaboration with event organizing service units at the restaurants and shops that are partnerships of JDB, to advertise and sell its products, set up advertising booths at the companies that use JDB for their payroll, organize online live events, sponsor of scholarship, organize a lucky draw ceremony to award to customers, etc., which enable customers to use JDB's services increasingly. At the same time, the Marketing Division has monitored on implementation of the KPI and other products in its responsibilities such as sales of insurance which accounted for 11.41%, ATM healthy life card accounted for 92.70%, payroll customers has reached for 93%, payroll loan customers has reached for 29.95%, and civil servant loan has reached for 91.65%, loan for education 21%, and 133.03% for student cards. In 2018, the Marketing Division has also issued new deposit products such as deposit bonus products with its double interest and it was approved by the Central Bank, which is expected to announce customer service in January 2019.





15. ວຽກງານກະກຽມປ້ອງກັນຄວາມສ່ຽງ

ຄຽງຄູ່ກັບການດຳເນີນທຸລະກິດຢ່າງປົກກະຕິ ຕາມແຜນງານທີ່ກຳນົດໄວ້ JDBໄດ້ຄົ້ນຄ້ວາຊອກຫາວິທີປ້ອງກັນຄວາມສ່ຽງແຕ່ຫົວທີໃນແຕ່ລະດ້ານດັ່ງນີ້:

- ດ້ານການບໍລິການລູກຄ້າ ແມ່ນໄດ້ກຳນົດໜ້າວຽກ (Job Description) ໃຫ້ພະນັກງານແຕ່ລະຄົນປະຕິບັດ, ສຶກສາອົບຮົມພະນັກງານໃຫ້ມີຄວາມຊື່ສັດ, ມີຈັນຍາບັນຂອງພະນັກງານທະນາຄານ, ພະແນກກວດກາພາຍໃນໄດ້ລົງກວດກາໄປຕາມແຜນ,ກວດກາສຸກເສີນ, ປະຕິບັດຫຼັກການກວດກາ 3 ຂັ້ນຕອນ,ປັບປຸງການບໍລິການໜ້າເຄົ້າເຕີໃຫ້ໄດ້ມາດຕະຖານສາກົນISO9001:2015,ຕິດຕັ້ງກ້ອງວົງຈອນປິດເພື່ອຕິດຕາມການເຮັດວຽກຂອງພະນັກງານ,ປະຊຸມສຳຫຼວດກວດກາວຽກງານເປັນແຕ່ລະອາທິດ ແລະ ອື່ນໆ.

-ປ້ອງກັນຄວາມສ່ຽງດ້ານສະພາບຄ່ອງ:ພະແນກທີ່ກ່ຽວຂ້ອງໄດ້ຕິດຕາມແຫຼ່ງທຶນ, ຊອກຫາແຫຼ່ງທຶນໃຫ້ພຽງພໍ,ຕິດຕາມການນຳໃຊ້ແຫຼ່ງທຶນຢ່າງລຽນຕິດເປັນແຕ່ລະມື້ເພື່ອໃຫ້ເກີດຜົນປະໂຫຍດສູງສຸດ ແລະ ຮັບປະກັນໃຫ້ມີສະພາບຄ່ອງໃນການດຳເນີນທຸລະກິດ ແລະ ກໍໄດ້ຮັກສາອັດຕາສ່ວນຄວາມພຽງພໍຂອງທຶນບໍ່ໃຫ້ຫຼຸດມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ພ້ອມທັງປະຕິບັດຕົວເລກດັດສະນີເກນມາດຕະຖານທາງການເງິນອື່ນໆເພື່ອປ້ອງກັນຄວາມສ່ຽງດ້ານການເງິນ.

- ການປ້ອງກັນຄວາມສ່ຽງຕໍ່ການຂາດທຶນ: ປີ 2018 JDB ໄດ້ຂຶ້ນແຜນທຸລະກິດໃຫ້ມີຜົນກຳໄລເພີ່ມຂຶ້ນຈາກປີຜ່ານມາ. ເພື່ອໃຫ້ບັນລຸຕາມຄາດໝາຍ JDB ໄດ້ດຳເນີນທຸລະກິດຢ່າງຮັດກຸມ ມີຄວາມລະມັດລະວັງສູງ ຍ້ອນສະພາບເສດຖະກິດລວມຂອງປະເທດ,ຄະນະຜູ້ບໍລິຫານໄດ້ຕິດຕາມຊີ້ນຳການດຳເນີນທຸລະກິດຢ່າງໃກ້ຊິດ, ໄດ້ຊີ້ນຳ, ນຳພາ ແລະ ຄຸ້ມຄອງທຸກຂັ້ນຕອນໃນການປ່ອຍສິນເຊື່ອ, ການນຳໃຊ້ເງິນກູ້ໃຫ້ຖືກຕ້ອງຕາມເປົ້າໝາຍ, ການຕິດຕາມເກັບໜີ້ສິນ ແລະ ດອກເບ້ຍຄືນ ຮັບປະກັນບໍ່ໃຫ້ເກີດມີໜີ້ NPL ເກີນຄາດໝາຍທີ່ກຳນົດໄວ້, ຄຸ້ມຄອງຕິດຕາມການລົງທຶນດ້ານອື່ນກໍໃຫ້ຢູ່ໃນຂອບເຂດທີ່ສາມາດຄຸ້ມຄອງໄດ້ ແລະ ມີຜົນກຳໄລ, ຊຶ່ງເຫັນວ່າຜົນການດຳເນີນທຸລະກິດອອກມາແມ່ນເກີນລະດັບຄາດໝາຍ ແລະ ສາມາດນຳໄປລ້າງຂາດທຶນສະສົມມາແຕ່ກ່ອນໃຫ້ໝົດໄປໄດ້.

- ການປ້ອງກັນຄວາມສ່ຽງຂອງລະບົບ IT: ເພື່ອຮັບປະກັນການບໍລິການລູກຄ້າໃຫ້ມີຄວາມປອດໄພ, ປ້ອງກັນຖານຂໍ້ມູນຂອງທະນາຄານ, ປ້ອງກັນການລັກເຈາະຂໍ້ມູນ ແລະ ປ້ອງກັນການຮົ່ວໄຫຼຂອງຂໍ້ມູນ ທະນາຄານຮ່ວມພັດທະນາໄດ້ຕິດຕັ້ງລະບົບຄວາມປອດໄພຢ່າງຮັດກຸມຮອບດ້ານທີ່ເຫັນວ່າຈະມີຄວາມສ່ຽງ ຄືໃນປີ2018ນີ້ແມ່ນໄດ້ປັບປຸງພັດທະນາລະບົບປ້ອງກັນຄວາມປອດໄພລະບົບ Network (IT Network Security), ໄດ້ປັບປຸງຊຸມສາຍ Network ໃຫ້ໄດ້ມາດຕະຖານ, ໄດ້ຕິດຕັ້ງ ແລະ ປັບປຸງລະບົບຖານຂໍ້ມູນສຳຮອງຢູ່ນອກສະຖານທີ່ (DR Site) ເປັນແບບ online ສຳເລັດ ແລະ ໄດ້ຕາມມາດຕະຖານສາກົນເພື່ອຮັບປະກັນການບໍລິການລູກຄ້າໄດ້ຢ່າງຕໍ່ເນື່ອງ,ໄດ້ສຳເລັດການເຮັດ Pent Testing Mobile Banking JDB Yes ເພື່ອປ້ອງກັນການ hack ເອົາຂໍ້ມູນຂອງລູກຄ້າຈາກການນຳໃຊ້ Mobile Banking JDB Yes ແລະ ນອກຈາກນັ້ນກໍໄດ້ປັບປຸງລະບົບໄຟຟ້າສຸກເສີນເພື່ອຮັບປະກັນກະແສໄຟຟ້າເຂົ້າສູ່ລະບົບ IT ຕະຫຼອດເວລາ.

-ການປ້ອງກັນຄວາມສ່ຽງຂອງສຳນັກງານ:ໄດ້ປັບປຸງສ້ອມແປງຕິດຕັ້ງເຫຼັກກັນຂະໂມຍໃສ່ໜ່ວຍບໍລິການທຸກໜ່ວຍ,ປັບປຸງປ່ອງບໍລິການ ຕາມມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ກຳນົດຄືໄດ້ຍົກແກ້ວໃຫ້ສູງ,ຕິດຕັ້ງເຫຼັກກັນຂະໂມຍດ້ານໃນ, ປັບປຸງລະບົບປະຕູເຂົ້າອອກ,ຕິດຕັ້ງລະບົບກ້ອງວົງຈອນປິດຮອບດ້ານ, ມີ ລປພ ຫຼື ເຈົ້າໜ້າທີ່ຕຳຫຼວດເວນຍາມຕະຫຼອດ 24 ຊົ່ວໂມງ,ໄດ້ຈັດຝຶກອົບຮົມວິທີການດັບມອດໄຟໃຫ້ແກ່ພະນັກງານ ແລະ ໄດ້ປະກອບຕິດຕັ້ງບໍ້ງດັບເພີງໃຫ້ແຕ່ລະໜ່ວຍບໍລິການ.

15. Preparing for Risk Prevention

Along with regular business operations as determined in the action plan, JDB has been seeking for ways to prevent risk in each of the following aspects:

- Customer services are defined as a task (Job Description) for each staffs to ensure that all staffs are trained, educated honestly, retained bank's ethics, the Internal Audit Division has conducted inspection in accordance with the plan, emergency inspection, implemented 3-steps of inspection procedures, improve front counter service to meet with international standard ISO 9001: 2015, installing hidden circuit cameras to monitor of employee's working approach, weekly scrutinize and so on.

- Preventing liquidity risk: The relevant divisions have monitored for the sources of funds, sought adequate funding sources, daily monitored for the use of fund resources in order to maximize the benefits and to ensure the liquidity of the business and maintained the capital adequacy ratio not to be lower thanstandards determined by the Bank of Lao PDR as well as to carry out other financial benchmark indexes to prevent financial risk.

- Loss prevention risk: In 2018 JDB has made a business plan for better profit than previous year. In order to achieve the target, JDB has to carry out its business with care as a result of the country's overall economic situation. The Board of Directors has closely monitored business operations, guided and managed all procedures of providing loan, using the loan correctly, recollecting debt and interest to ensure that NPL are not exceeded by the required targets, monitoring and management of investment shall be within a manageable and profitable range, which indicates that the outcomes of the business are beyond the target level and can lead to cover the accumulated losses in the past.

- Risk Prevention of IT System: In order to secure customer service, protect the bank's database, prevent data hacking and data leakage, Joint Development Bank has installed a comprehensive security system, which is expected to be as vulnerable risk. In 2018, the bank has improved the IT Network Security System, improve the network access standards, having successfully installed and upgraded the database at DR Site as online system and be international standard to ensure continuously customer service, Pent Testing Mobile Banking JDB Yes have successfully completed to prevent hacking of customer's data from using Mobile Banking JDB Yes; and in addition, emergency lighting system has been upgraded to ensure the efficiency of electric flow into the IT system all the time.

- Office Risk Protection: Anti-theft steel frames have been repaired, installed for all service units, improved service counter according to standard set out by the Bank of Lao PDR such install high glass frame, installed anti-theft steel frame inside, improved entry-exit gate, installed hidden circuit cameras around, safeguard or police guard available 24 hours, the fire prevention training course was provided for staffs and fire extinguisher has been installed for at each service units.



16. ການປະຕິບັດແຜນທຸລະກິດ

ເຖິງວ່າປີ 2018 ເປັນປີທີ່ມີຄວາມຫຍຸ້ງຍາກໃນການດຳເນີນທຸລະກິດ ຍ້ອນສະພາບເສດຖະກິດມະຫາພາກມີຄວາມຫຍຸ້ງຍາກລຳບາກແລະການຂະຫຍາຍຕົວຂອງ GDP ໄດ້ສະລົຕົວ ແຕ່ JDB ກໍໄດ້ພະຍາຍາມສູ້ຊົນປະຕິບັດຕາມແຜນການພັດທະນາ ແລະ ປະຕິບັດຕາມແຜນທຸລະກິດຂອງຕົນທີ່ໄດ້ກຳນົດໄວ້ ຊຶ່ງ JDB ໄດ້ສືບຕໍ່ລົງທຶນໃນການຂະຫຍາຍລະບົບຕາໜ່າງບໍລິການ ແລະການພັດທະນາລະບົບ ITໃຫ້ມີຄວາມທັນສະໄໝພ້ອມທັງພັດທະນາຜະລິດຕະພັນທາງອີເລັກໂທຣນິກ ເພື່ອສ້າງ JDB ໃຫ້ກາຍເປັນທະນາຄານ Digital Banking ໃນຍຸກ 4.0 ເທື່ອລະກ້າວດ້ວຍຕົ້ນທຶນໃນມູນຄ່າທີ່ສູງ,ແຕ່ຜົນການດຳເນີນທຸລະກິດທີ່ອອກມາກໍເປັນທີ່ໜ້າພໍໃຈ ໃນແຕ່ລະດ້ານດັ່ງນີ້:

- ຍອດຊັບສິນໃນທ້າຍປີ 2018 ມີທັງໝົດ 3.632 ຕື້ກີບ ເທົ່າກັບ 99% ຂອງແຜນການ ແລະ ເພີ້ມຂຶ້ນຈາກປີຜ່ານມາ 26%.
- ລະດົມເງິນຝາກໄດ້ເພີ້ມ 630,6 ຕື້ກີບ ເທົ່າກັບ 90ຂອງແຜນການປີ ແລະ ຍອດເງິນຝາກເພີ້ມຂຶ້ນຈາກປີຜ່ານມາ 26%, ແຕ່ຖ້າຄິດໄລ່ເປັນແຕ່ລະວັນທີ່ລູກຄ້າເອົາເງິນມາຝາກແມ່ນໄດ້ທັງໝົດ 1.303,89 ຕື້ກີບຈະເທົ່າກັບ 186,27% ຂອງແຜນການ ແລະລູກຄ້າໄດ້ຖອນເງິນຝາກອອກທັງໝົດ 673,28ຕື້ກີບ.
-ປ່ອຍສິນເຊື່ອໄດ້ 282,9 ຕື້ກີບເທົ່າກັບ 50,52ຂອງແຜນທຸລະກິດແລະຍອດລວມສິນເຊື່ອເພີ້ມຂຶ້ນຈາກປີກາຍ14,45%, ແຕ່ຖ້າຄິດໄລ່ໃນການປ່ອຍເງິນກູ້ໃນແຕ່ລະວັນແມ່ນປ່ອຍໄດ້ທັງໝົດ 817,53 ຕື້ກີບ ຈະເທົ່າກັບ 146%ຂອງແຜນການປີ ແລະ ລູກຄ້າມາຊຳລະເງິນກູ້ຄືນ 534,57 ຕື້ກີບ.
- ສ້າງລາຍຮັບໝົດປີໄດ້ 278,89 ຕື້ກີບເທົ່າກັບ 60%ທຽບໃສ່ແຜນການທີ່ຄາດຄະເນໄວ້ແລະເຫັນວ່າຫຼຸດແຜນການຫຼາຍເນື່ອງຈາກວ່າ ປີຜ່ານມາ ລະບົບ Core Banking ໄດ້ບັນທຶກບັນຊີທັງຊື້ແລະຂາຍຊ້ຳກັນໃນການຊື້ຂາຍເງິນຕາ ແຕ່ປີນີ້ ແມ່ນໄດ້ຫັກລາຍການລົງບັນຊີຊື້ຂາຍເງິນຕາຊ້ຳກັນອອກຈຶ່ງເຮັດໃຫ້ລາຍຮັບທັງໝົດຖືກຕ້ອງຕາມຄວາມເປັນຈິງ.
- ລາຍຈ່າຍມີ 271,05 ຕື້ກີບ ເທົ່າກັບ 60% ຂອງແຜນການປີ, ລາຍຈ່າຍໄດ້ຫຼຸດລົງຫຼາຍຈາກປີຜ່ານມາ ແມ່ນເປັນຍ້ອນເຫດຜົນດຽວກັບເບື້ອງລາຍຮັບ.
- ກຳໄລກ່ອນອາກອນປະຕິບັດໄດ້ທັງໝົດ10,27ຕື້ກີບລົ້ນແຜນການຄາດຄະເນ 18%. ກຳໄລໃນການດຳເນີນທຸລະກິດລົ້ນແຜນການ ຍ້ອນວ່າ JDB ໄດ້ນຳເງິນຈຳນວນນຶ່ງໄປຊື້ພັນທະບັດໃນລາຄາຫຼຸດເຮັດໃຫ້ມີລາຍຮັບສ່ວນຫຼຸດຈາກພັນທະບັດດັ່ງກ່າວ ຈຳນວນ 10,81 ຕື້ກີບ ໂດຍທີ່ບໍ່ມີຢູ່ໃນແຜນການ ແລະກໍໄດ້ດອກເບ້ຍຈາກພັນທະບັດດັ່ງກ່າວຕື່ມອີກ 2,35 ຕື້ກີບ ໂດຍບໍ່ມີຢູ່ໃນແຜນເຊັ່ນດຽວກັນ.

16. Implementing of Business Plan

Even though the year 2018 is a difficult year for business, due to the difficulty of macroeconomic situation and GDP growth has slowed down, JDB has been trying to implement its evelopment plan and business plan, JDB has continued to invest in expanding service network and IT systems development, as well as developing of electronic products to create JDB to become a Digital Banking Bank in the 10 Industrial Revolution 4.0 at a high cost; the results of business operations are acceptable in each of the following aspects:

- Total assets at the end of 2018 had 3,632 billion kip, equal to 99% of the plan and increased 26% compared to the last year.
- The deposit mobilized 630.6 billion kip equivalent to 90% of the annual plan and the amount of deposits balance increased 26% compared to last year, but if it is calculated on a daily basis, the customer deposited at total of 1,303.89 billion kip, equivalent to 186.27% of the plan, and the customer has withdrawn of 673.28 billion kip.
- Providing loan of 282.9 billion kip equivalent to 50.52% of the business plan and increased 14.45% compared to last year, but if it is calculated on a daily basis, the total loan is 817.53 billion kip, equivalent to 146% of the annual plan, and the customer has repaid the loan in amount of 534.57 billion kip.
- Generating revenue of 278.89 billion kip equivalent to 60% compared to the plan and was not reached the target due to the Core Banking system has recorded overlap both buying and selling accounts in currency trading in the past, resulting in the value of money transactions increase from last year and as well as increase of overall revenue. But in this year overlap record of the list for buying and selling accounts in currency trading was deducted, the total revenue will be true as reality.
- Expenditure is 271.05 billion kip equivalent to 60% of estimated plan, expenditure was under the target due to the same reason as income side.
- Profit before tax was 10.27 billion kip, exceeded 18% of the estimated plan. Profitability in business operation is exceeded the plan because of that JDB has brought some money to buy bonds at a discount prices, generating a discount of 10.81 billion kip outside the plan, and it also gained the interest of 2.35 billion kip outside the plan as well.


30
JDB
ເຕີບໃຫ່ຍໄປພ້ອມກັນ
BLOOMING TOGETHER
1989-2019
“ເຕີບໃຫ່ຍໄປພ້ອມກັນ”
“BLOOMING TOGETHER”
JDB
ທະນາຄານຮ່ວມພັດທະນາ
Joint Development Bank

III. ສະຫຼຸບ

ເຖິງວ່າສະພາບແວດລ້ອມທາງເສດຖະກິດພາຍໃນປະເທດມີຄວາມຫຍຸ້ງຍາກແລະສະພາບການລົງທຶນໄດ້ສະລໍ້ຕໍ່ທີ່ບໍ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດຂອງທະນາຄານກໍຕາມ ແຕ່ທະນາຄານຮ່ວມພັດທະນາກໍໄດ້ພະຍາ ຍາມບຸກບືນປະຕິບັດຕາມແຜນຍຸດທະສາດພັດທະນາທະນາຄານໃຫ້ມີການເຕີບໃຫຍ່ຂະຫຍາຍຕົວ ມີຄວາມທັນສະໄໝ ກາຍເປັນ Digital Banking ໃນຍຸກ 4.0 ແລະປະຕິບັດຕາມແຜນທຸລະກິດທີ່ໄດ້ກຳນົດໄວ້ ໃນປີ 2018. ການພັດທະນາໃນປີນີ້ ແມ່ນໄດ້ປະສົບຜົນສຳເລັດຫລາຍດ້ານໂດຍສະເພາະແມ່ນການປັບປຸງລະບົບບໍລິການໃຫ້ໄດ້ມາດຕະຖານສາກົນ, ການປັບປຸງສະຖານທີ່ບໍລິການໃຫ້ມີຄວາມສວຍງາມ ໂອ່ໂຖງ ສະດວກສະບາຍ, ຂະຫຍາຍລະບົບຕາໜ່າງບໍລິການມີທັງຂະຫຍາຍໜ່ວຍບໍລິການເພີ້ມ, ຂະຫຍາຍຕູ້ ATM ແລະເຄື່ອງຮູດບັດ EDC, ໄດ້ພັດທະນາຜະລິດຕະພັນອີເລັກໂທຣນິກອອກມາຮັບໃຊ້ບໍລິການລູກຄ້າ ໂດຍສະເພາະແມ່ນຜະລິດຕະພັນ Mobile Banking “JDB Yes” ແລະ ຜະລິດຕະພັນການຊຳລະຄ່າສິນຄ້າແລະບໍລິການ QR Code “Yes Pay” , ອອກຜະລິດຕະພັນບັດໃໝ່ ຄືບັດ UPI Debit Card ແລະ UPI Credit Card ເຫັນວ່າ JDB ມີຜະລິດຕະພັນອີເລັກໂທຣນິກທີ່ຫຼາກຫຼາຍນັບມື້ນັບເພີ້ມຂຶ້ນ ແລະ ພ້ອມກັນນັ້ນກໍຍັງໄດ້ປັບປຸງລະບົບຄຸ້ມຄອງບັດ (CMS) ແລະໄດ້ປັບປຸງລະບົບ ATM Switching ໃຫ້ໄດ້ມາດຕະຖານສາກົນ ພ້ອມທັງໄດ້ຄົ້ນຄ້ວາການເຊື່ອມໂຍງເຄືອຂ່າຍການຊຳລະສະສາງທາງອີເລັກໂທຣນິກກັບສາກົນ ໂດຍສະເພາະກັບ Wechat Pay ແລະ Alipay ເຮັດໃຫ້ JDB ກ້າວສູ່ຍຸກ Digital 4.0 ຢ່າງຂາດຕົວ ແລະເຮັດໃຫ້ JDB ກາຍເປັນທະນາຄານນຶ່ງທີ່ນຳໜ້າທາງດ້ານເທັກໂນໂລຢີ ຢູ່ ສປປລ. ສຳລັບຜົນຂອງການດຳເນີນທຸລະກິດ ເຫັນວ່າລູກຄ້າໄດ້ມາໃຊ້ບໍລິການເພີ້ມຂຶ້ນຫຼາຍ, ບັນຊີເງິນຝາກເພີ້ມຂຶ້ນຈາກປີຜ່ານມາ 24%, ຍອດເງິນຝາກໝົດປີ ເພີ້ມຂຶ້ນ 26%, ສິນເຊື່ອເພີ້ມຂຶ້ນ 14,45% ຊຶ່ງສິ່ງຜົນໃຫ້ມີກຳໄລ ເປັນທີ່ໜ້າພໍໃຈ ລົ້ນປີຜ່ານມາ.







III. Conclusion

Although the domestic economic environment has been difficult and investment conditions have not been favorable to the business operation of the bank, Joint Development Bank has been trying to abide by the Bank's strategic development plan to become modern Digital Banking in the Industrial Revolution 4.0 and implement the business plan set out in 2018. This year's development has achieved several successful, especially the improvement of the service system to reach international standards, renovation the service facilities, providing a comfortable environment, expanding service network, service units, expanding ATM and EDC services, electronic products has developed to serve customers, especially Mobile Banking products "JDB Yes" and products to pay for goods and services like "Yes Pay" QR Code, issued new card products as UPI Debit Card and UPI Credit Card showing that JDB has produced various electronic products increasingly, and Card Management System (CMS), ATM Switching have also been improved to meet with the international standards and research a link to international electronic payment network, particularly with Wechat Pay and Alipay to make JDB to forwards to the Industrial Revolution 4.0 absolutely, and in order to make JDB to become a leading bank on technology in the Lao PDR. As a result of business operations, number of customers are increasing, deposits account increased 24% compared to the last year, total deposits increased by 26%, credit increased 14.45%, which its profit result is increased continuously.







JDB
ທະນາຄານຮ່ວມພັດທະນາ

ວຽກງານຊ່ວຍເຫຼືອສັງຄົມ





“ ຊ່ວຍເຫຼືອໄພນ້ຳຖ້ວມຢູ່ ແຂວງອັດຕະປື ”









“ ມອບຊຸດກິລາ ໂຮງຮຽນ ການຊ່າງ-ລາວເຍຍລະມັນ ”





“ ມອບລົດຄັນທີ່ 3 ໃຫ້ລູກຄ້າຜູ້ໂຊກດີ ”





“ ຊ່ວຍສ້າງໂຮງຮຽນ ບ້ານກັດ ແຂວງອຸດົມໄຊ ”



Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 60956549/20598798-LAS

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ເຈົ້າຂອງ ທະນາຄານຮ່ວມພັດທະນາ ຈຳກັດ

ຄຳເຫັນ

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ທະນາຄານຮ່ວມພັດທະນາ ຈຳກັດ ("ທະນາຄານ"), ເຊິ່ງ ປະກອບດ້ວຍໃບລາຍງານຖານະການເງິນວັນທີ 31 ທັນວາ 2018, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງ ທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການ ເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງນະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງທະນາຄານໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການ ບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ພື້ນຖານການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ (ISAs). ບັນດາຄວາມ ຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນຫົວ *ຄວາມຮັບຜິດຊອບຂອງ ນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍ ສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງ ດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າ ຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີ ຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີ ທີ່ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນ ການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງ ພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

ຄວາມຮັບຜິດຊອບຂອງຄະນະບໍລິຫານຂອງທະນາຄານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານທະນາຄານແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ກົດໝາຍວ່າ ດ້ວຍການການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນ ການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະ ບໍລິຫານເຫັນວ່າ ວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫລື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງທະນາຄານ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳ ເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນ ກໍລະນີທີ່ທາງຄະນະບໍລິຫານທະນາຄານ ມີຈຸດປະສົງຢາຍຸບເລີກ ຫຼື ຢຸດກິດຈະການ.

Building a better working world

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນ ໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ສ້າງທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີກ່ຽວວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

Building a better working world

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານທີ່ກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ບໍລິສັດ ເອິນແອນຢັ ລາວ ຈຳກັດ

ແອ້ ຫວ ຈິ
ຮຸ້ນສ່ວນ
ໃບຢັ້ງຢືນເລກທີ LCPAA/2-1-00001

ນະຄອນຫຼວງວຽງຈັນ, ສ ປປ ລາວ

28 ພຶດສະພາ 2019

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຫົວໜ້າພະແນກ ບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

28 ພຶດສະພາ 2019

ອະນຸມັດໂດຍ:

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
ຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2018

ລຳດັບ	ຊັບສິນ	ບົດອະທິບາຍ ເລກທີ	31 ທັນວາ 2018 ກີບ	31 ທັນວາ 2017 ກີບ
I	**ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")**		**707,457,130,952**	**564,910,660,395**
1	ເງິນສົດໃນຄັງ	10	249,266,853,456	230,409,923,753
2	ເງິນຝາກຢູ່ ທຫລ	11	458,190,277,496	334,500,736,642
II	**ໜີ້ຕ້ອງຮັບຈາກທະນາຄານ**		**226,610,687,279**	**125,744,217,765**
1	ເງິນຝາກກະແສລາຍວັນ	12.1	189,871,122,856	70,421,247,421
2	ເງິນຝາກມີກຳນົດ	12.2	10,000,000,000	-
3	ເງິນຝາກປະຢັດ	12.3	26,739,564,423	55,322,970,344
III	**ການລົງທຶນໃນຫຼັກຊັບ**	**13**	**82,175,050,000**	**17,300,000,000**
1	ຫຼັກຊັບມີໄວ້ເພື່ອຂາຍ		4,300,000,000	4,300,000,000
2	ຫຼັກຊັບຖືໄວ້ຈົນຄົບກຳນົດ		77,875,050,000	13,000,000,000
IV	**ເງິນກູ້ໃຫ້ແກ່ລູກຄ້າ, ຫຼັງຫັກເງິນແຮສຳຮອງ ສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ**	**14**	**2,190,460,919,638**	**1,913,425,425,653**
V	**ຊັບສິນບັດຖືທີ**		**243,521,905,322**	**195,068,036,869**
1	ຊັບສິນບັດຖືທີ່ພວມຊື້ ແລະ ພວມກໍ່ສ້າງ	15.1	7,559,538,223	7,039,511,888
2	ຊັບສິນບັດຖືທີ່ບໍ່ມີຕົວຕົນ	15.2	156,584,854,723	111,058,745,891
3	ຊັບສິນບັດຖືທີ່ມີຕົວຕົນ	15.3	79,377,512,376	76,969,779,090
VI	**ຊັບສິນອື່ນໆ**		**181,960,169,096**	**72,964,540,546**
1	ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ		21,688,786,228	14,425,404,909
2	ຊັບສິນອື່ນໆ	16	160,271,382,868	58,539,135,637
	ລວມຍອດຊັບສິນ		**3,632,185,862,287**	**2,889,412,881,228**

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

ລຳດັບ	ໜີ້ສິນ ແລະ ທຶນ	ບົດອະທິບາຍ ເລກທີ	31 ທັນວາ 2018 ກີບ	31 ທັນວາ 2017 ກີບ
I	**ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນ ການເງິນອື່ນ**	**17**	**123,830,646,506**	**61,708,613,379**
1	ເງິນຝາກສະເລ່ຍວັນ		6,059,646,506	6,783,613,379
2	ເງິນຝາກມີກຳນົດ		117,771,000,000	54,925,000,000
II	**ໜີ້ຕ້ອງສົ່ງໃຫ້ລູກຄ້າ**	**18**	**2,925,231,774,666**	**2,356,742,359,929**
1	ເງິນຝາກສະເລ່ຍວັນ ແລະ ເງິນຝາກປະຢັດ		888,508,742,066	784,943,091,578
2	ເງິນຝາກມີກຳນົດ		2,036,719,311,630	1,571,797,669,326
3	ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ		3,720,970	1,599,025
III	**ໜີ້ສິນອື່ນໆ**		**113,832,884,400**	**84,184,484,547**
1	ດອກເບ້ຍຄ້າງຈ່າຍ		90,978,463,963	67,550,618,815
2	ໜີ້ຕ້ອງສົ່ງອື່ນໆ	19	22,854,420,437	16,633,865,732
	ລວມຍອດໜີ້ສິນ		**3,162,895,305,572**	**2,502,635,457,855**
IV	**ທຶນເຈົ້າຂອງ ແລະ ຄ້າງສຳຂອງ**			
1	ທຶນຈົດທະບຽນທີ່ຖອກແລ້ວ		404,666,100,000	404,666,100,000
2	ຄ້າງສະສົມຕາມລະບຽບການ		391,685,038	391,685,038
3	ຄ້າງສະສົມຂະຫຍາຍທຸລະກິດ		550,517,242	550,517,242
4	ຄ້າງສຳຂອງໃນການຕີມູນຄ່າຄືນ		94,029,775,080	23,671,958,000
5	ເງິນແຮສຳລັບສິນເຊື່ອທີ່ເກີດດອກອອກຜົນ	14.2	13,951,544,121	9,634,146,846
6	ຂາດທຶນສະສົມ	20	(44,299,064,766)	(52,136,983,753)
	ລວມຍອດທຶນ		**469,290,556,715**	**386,777,423,373**
	ລວມຍອດໜີ້ສິນ ແລະ ທຶນ		**3,632,185,862,287**	**2,889,412,881,228**

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

ລຳດັບ	ລາຍການນອກໃບລາຍງານຖານະທາງການເງິນ	ບົດອະທິບາຍ ເລກທີ	31 ທັນວາ 2018 ກີບ	31 ທັນວາ 2017 ກີບ
I	**ຄ້ຳໝັ້ນສັນຍາທີ່ໄດ້ໃຫ້**			
A	**ຄ້ຳໝັ້ນສັນຍາທາງການເງິນ**		**143,934,362,666**	**182,185,634,532**
1	ຄ້ຳໝັ້ນສັນຍາທາງການເງິນໃຫ້ແກ່ລູກຄ້າ		143,934,362,666	182,185,634,532
B	**ຄ້ຳໝັ້ນສັນຍາໃນການຮັບປະກັນ**		**24,132,080,988**	**22,477,187,765**
1	ຄ້ຳໝັ້ນສັນຍາໃນການຮັບປະກັນໃຫ້ແກ່ລູກຄ້າ		24,132,080,988	22,477,187,765
	ລວມຍອດຂໍ້ຜູກພັນ		**168,066,443,654**	**204,662,822,297**
II	**ຫຼັກຊັບຄ้ຳປะกัน ແລะ ภาระจำนอง**			
A	**ຫຼັກຊັບຄ้ຳປะกัน ແລะ ภาระจำนอง**		**2,796,461,389,514**	**2,289,674,681,204**
1	ຫຼັກຊັບຄ้ຳປะกัน ແລะ ຈຳนองสำลับเงินกู้ ให้ลูกค้า		2,796,461,389,514	2,289,674,681,204
	ລວມຍອດຫຼັກຊັບຄ้ຳປะกัน ແລะ ภาระ จำนอง		**2,952,013,818,973**	**2,289,674,681,204**

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຫົວໜ້າພະແນກ ບັນຊີ ແລະ ການເງິນ

ອະນຸມັດໂດຍ:

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

28 ພຶດສະພາ 2019

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

	ທຶນຈົດທະບຽນທີ່ຖອກແລ້ວ ກີບ	ຄັງແຮຕາມລະບຽບການ ກີບ	ຄັງຂະຫຍາຍທຸລະກິດ ກີບ	ຄັງສຳຮອງໃນການຕີມູນຄ່າຄືນ ກີບ	ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ ກີບ	ຂາດທຶນສະສົມ ກີບ	ຄັງເງິນແຮຈາກການຕີມູນຄ່າເງິນຕາຕ່າງປະເທດ ກີບ	ລວມທັງໝົດ ກີບ
ຍອດເຫຼືອນະວັນທີ 31 ທັນວາ 2016	**404,666,100,000**	**391,685,038**	**550,517,242**	**23,671,958,000**	**6,842,974,833**	**(57,319,423,599)**	**(1,095,312,085)**	**377,708,499,429**
ກຳໄລສຸດທິພາຍໃນປີ	-	-	-	-	-	6,277,751,931	-	6,277,751,931
ການປ່ຽນຄືນຂອງເງິນຕາສະກຸນຕ່າງປະເທດ	-	-	-	-	-	(1,095,312,085)	1,095,312,085	-
ເງິນແຮສຳລັບສິນເຊື່ອທີ່ບໍ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 14.2)*	-	-	-	-	2,609,674,063	-	-	2,609,674,063
ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ	-	-	-	-	181,497,950	-	-	181,497,950
ຍອດເຫຼືອນະວັນທີ 31 ທັນວາ 2017	**404,666,100,000**	**391,685,038**	**550,517,242**	**23,671,958,000**	**9,634,146,846**	**(52,136,983,753)**	**-**	**386,777,423,373**
ກຳໄລສຸດທິພາຍໃນປີ	-	-	-	-	-	7,837,918,987		7,837,918,987
ການເພີ່ມຂຶ້ນຂອງການປະເມີນຊັບສົມບັດຄົງທີ	-	-	-	70,357,817,080	-	-	-	70,357,817,080
ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 14.2)*	-	-	-	-	4,042,722,014	-	-	4,042,722,014
ສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ	-	-	-	-	274,675,261		-	274,675,261
ຍອດເຫຼືອນະວັນທີ 31 ທັນວາ 2018	**404,666,100,000**	**391,685,038**	**550,517,242**	**94,029,775,080**	**13,951,544,121**	**(44,299,064,766)**		**469,290,556,715**

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຫົວໜ້າພະແນກບັນຊີ ແລະ ການເງິນ

ອະນຸມັດໂດຍ:

ທ່ານ ບຸນສະຫວ່າງ ພິລະໄຊພິທັກ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

28 ພິດສະພາ 2019

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

	ບົດອະທິບາຍ ເລກທີ	2018 ກີບ	2017 ກີບ
ກິດຈະກຳການດຳເນີນງານ			
ກຳໄລຫຼັງຫັກອາກອນ		**10,277,562,568**	**8,540,759,290**
ດັດແກ້ສຳລັບ:			
ກຳໄລຈາກການລົງທຶນ		(10,817,333,333)	-
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ		42,783,846,214	24,424,825,364
ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ	14	4,135,888,744	2,548,148,654
ລາຍຮັບຈາກອັດຕາດອກເບ້ຍ		(200,333,287,891)	(150,062,171,919)
ລາຍຈ່າຍຈາກອັດຕາດອກເບ້ຍ		131,688,650,330	103,163,202,849
ສ່ວນຕ່າງຈາກອັດຕາແລກປ່ຽນ (ກຳໄລ)/ຂາດທຶນ ຈາກການຕີ ມູນຄ່າບັນຊີເງິນຕາຂອງສະກຸນເງິນຕ່າງປະເທດ		(3,351,977,727)	2,450,965,833
ກະແສເງິນສົດຈາກກຳໄລຈາກການດຳເນີນງານ ກ່ອນການປ່ຽນແປງຊັບ ສິນ ແລະ ໜີ້ສິນໃນການດຳເນີນງານ		**(25,616,651,095)**	**(8,934,269,929)**
(ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ			
ເງິນຝາກທີ່ມີກັບທະນາຄານອື່ນ		(17,180,720,226)	17,141,760,960
ເງິນກູ້ຍືມໃຫ້ແກ່ລູກຄ້າ		(277,137,460,041)	(640,510,198,082)
ຊັບສິນທາງການເງິນອື່ນໆ		(64,875,050,000)	(13,000,000,000)
ຊັບສິນອື່ນໆ		(93,072,017,989)	(17,730,066,958)
ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດຳເນີນງານ			
ເງິນຝາກຈາກທະນາຄານອື່ນ		62,122,033,127	8,028,116,593
ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ		568,489,414,737	483,048,242,753
ໜີ້ສິນອື່ນໆ		7,544,674,051	3,664,662,728
ດອກເບ້ຍທີ່ໄດ້ຮັບ		193,069,906,572	145,309,272,309
ດອກເບ້ຍທີ່ໄດ້ຈ່າຍ		(108,260,805,183)	(74,950,902,670)
ອາກອນກຳໄລທີ່ໄດ້ຈ່າຍ	21	(3,480,288,338)	(1,044,762,512)
ກະແສເງິນສົດສຸດທິມາຈາກ/(ໃຊ້ໄປ)ກິດຈະກຳການດຳເນີນງານ		**241,603,035,615**	**(98,978,144,808)**
ກິດຈະກຳການລົງທຶນ			
ການຊຳລະເງິນເພື່ອຊື້ ແລະ ກໍ່ສ້າງຊັບສົມບັດຄົງທີ່ໃຫມ່		(15,848,729,024)	(17,526,476,094)
ຮັບຈາກການສະສາງຊັບສິນ	6	187,913,254	3,556,504,002
ເງິນປັນຜົນທີ່ໄດ້ຮັບ		290,000,000	270,000,000
ກະແສເງິນສົດສຸດທິໃຊ້ເຂົ້າໃນກິດຈະກຳການລົງທຶນ		**(15,370,815,770)**	**(13,699,972,092)**

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

	ບົດອະທິບາຍ ເລກທີ	2018 ກີບ	2017 ກີບ
ກິດຈະກຳທາງດ້ານການເງິນ			
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		-	-
ສ່ວນປ່ຽນແປງສຸດທິ ໃນເງິນສົດ ແລະ ທຽບເທົ່າເງິນສົດ		226,232,219,845	(112,678,116,900)
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		564,339,173,835	677,017,290,735
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	22	790,571,393,680	564,339,173,835

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຫົວໜ້າພະແນກ ບັນຊີ ແລະ ການເງິນ

ອະນຸມັດໂດຍ:
ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

28 ພຶດສະພາ 2019

ທະນາຄານ ຮ່ວມພັດທະນາ ຈຳກັດ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານທາງການເງິນ
ສຳລັບປີທີ່ສິ້ນສຸດ ແລະ ນະວັນທີ 31 ທັນວາ 2018

1. ຂໍ້ມູນກ່ຽວກັບທະນາຄານ

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ແມ່ນທະນາຄານຮັບຜິດຊອບຕໍ່ໜີ້ສິນຈຳກັດ ທີ່ໄດ້ດຳເນີນງານ ແລະ ຈົດທະບຽນ ຢູ່ໃນ ສປປ ລາວ.

ທະນາຄານ ໄດ້ຖືກສ້າງຕັ້ງຂຶ້ນພາຍໃຕ້ຂໍ້ຕົກລົງລົງວັນທີ 2 ກຸມພາ 1989 ລະຫວ່າງ ທະນາຄານແຫ່ງ ສ ປປ ລາວ ("ທຫລ") ແລະ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດ ຈຳກັດ ປະເທດໄທ. ເຊິ່ງພາຍໃຕ້ຂໍ້ຕົກລົງ, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດ ຈຳກັດ ແມ່ນຖືຮຸ້ນ 70% ແລະ ທຫລ ແມ່ນ 30%. ໃນປີ 2010, ທຫລ ໄດ້ໂອນທຶນປະກອບທັງໝົດໃຫ້ແກ່ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດຈຳກັດ. ໃນປີ 2012, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດ ຈຳກັດ ໄດ້ຂາຍຮຸ້ນທັງໝົດ 100% ໃຫ້ແກ່ 3 ນັກລົງທຶນພາຍໃນ.

ທະນາຄານດຳເນີນທຸລະກິດພາຍໃຕ້ຂໍ້ຕົກລົງເລກທີ 04/PMA ອອກໂດຍຫ້ອງວ່າການລັດຖະມົນຕີ ແລະ ຂໍ້ຕົກລົງ ເລກທີ 04/ທຫລ ລົງວັນທີ 21 ມັງກອນ 1989, ສະບັບດັດແກ້ຂອງໃບອະນຸຍາດລົງທຶນເລກທີ 133/10 ລົງວັນທີ 23 ກັນຍາ 2010 ອອກໂດຍກະຊວງແຜນການ ແລະ ການລົງທຶນ ແລະ ພາຍໃຕ້ໃບທະບຽນວິສາຫະກິດເລກທີ 0234/ຫຈຫ ລົງວັນທີ 3 ພຶດສະພາ 2013 ເຊິ່ງອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ.

ການບໍລິການຕົ້ນຕໍຂອງທະນາຄານ ແມ່ນລະດົມເງິນຝາກທີ່ມີກຳນົດໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ, ການປ່ອຍກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວແກ່ບັນດາອົງການຈັດຕັ້ງ ແລະ ບຸກຄົນ ທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມເປັນໄປໄດ້ຂອງແຫຼ່ງທຶນຂອງທະນາຄານ, ດຳເນີນທຸລະກຳທາງດ້ານເງິນຕາຕ່າງປະເທດ, ການໃຫ້ບໍລິການທາງດ້ານການເງິນລະຫວ່າງປະເທດ, ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າ ຕ່າງໆ ແລະ ການໃຫ້ບໍລິການທຸລະກຳຕ່າງໆແກ່ລູກຄ້າ ແລະ ການບໍລິການອື່ນໆທີ່ໄດ້ຮັບອະນຸມັດ ຈາກ ທຫລ.

ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານໃນເບື້ອງຕົ້ນແມ່ນ 33,882,440,000 ກີບ. ທຶນຈົດທະບຽນທີ່ໄດ້ຖອກແລ້ວນະວັນທີ 31 ທັນວາ 2018 ແມ່ນ 404,666,100,000 ກີບ (31 ທັນວາ 2017: 404,666,100,000ກີບ).

ເຄືອຂ່າຍການດຳເນີນງານ

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ ເລກທີ 82, ຖະໜົນລ້ານຊ້າງ ນະຄອນຫຼວງວຽງຈັນ, ສປປ ລາວ. ນະວັນທີ 31 ທັນວາ 2018, ທະນາຄານມີສຳນັກງານໃຫຍ່ ໜຶ່ງ (1) ແຫ່ງ, ໜ່ວຍບໍລິການ ສີ່ສິບແປດ (48) ແຫ່ງ ແລະ ໜ່ວຍບໍລິການຍ່ອຍ ສີ່ (4) ແຫ່ງ.

ພະນັກງານ

ພະນັກງານທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2018 ມີ 522 ຄົນ (31 ທັນວາ 2017: 472 ຄົນ).

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

2.1 ຄຳຖະແຫຼງການ

ຄະນະບໍລິຫານຂອງທະນາຄານ ຕ້ອງໄດ້ກະກຽມເອກະສານລາຍງານການເງິນ ໂດຍອີງຕາມກົດໝາຍວ່າດ້ວຍ ການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ອາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ນຳສະເໜີ ເອກະສານລາຍງານການເງິນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.2 ພື້ນຖານການກະກຽມເອກະສານລາຍງານການເງິນ

ທະນາຄານບັນທຶກບັນຊີ ແລະ ໄດ້ກະກຽມເອກະສານລາຍງານການເງິນເປັນ ເງິນກີບ ("ກີບ") ໂດຍອີງຕາມດຳລັດ ເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມິນາ 2000 ແລະ ຕາມກົດໝາຍການບັນຊີ ຂອງ ສປປ ລາວ ແລະ ລະບຽບການ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີ ເອກະສານລາຍງານການເງິນ ("LAS").

ເອກະສານລາຍງານການເງິນສະບັບນີ້ ໄດ້ຖືກກະກຽມໂດຍນຳໃຊ້ລະບຽບການຫລັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການລາຍງານທີ່ໄດ້ຍອມຮັບໂດຍທົ່ວໄປໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານການປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ສະບັບນີ້ ບໍ່ໄດ້ຖືກສ້າງຂຶ້ນເພື່ອບຸກຄົນທີ່ບໍ່ຮູ້ກ່ຽວກັບລະບຽບຫລັກການການບັນຊີແຫ່ງ ສປປ ລາວ, ຂັ້ນຕອນ, ການປະຕິບັດ ແລະ ນອກຈາກນີ້, ແມ່ນບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນຂອງທະນາຄານ, ຜົນການດຳເນີນງານ ແລະ ກະແສເງິນສົດແຕ່ຢ່າງໃດໂດຍອີງຕາມລະບຽບຫລັກການການບັນຊີ ແລະ ການປະຕິບັດທີ່ຖືກຮັບຮອງໂດຍທົ່ວໄປຢູ່ ຕ່າງປະເທດນອກເໜືອຈາກ ສປປ ລາວ.

ປີການບັນຊີ

ປີການບັນຊີ ຂອງທະນາຄານ ແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

2.3 ການປ່ຽນແປງຂອງນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ທີ່ທະນາຄານນຳໃຊ້ ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ ແມ່ນມີຄວາມສອດຄ່ອງກັບ ເອກະສານລາຍງານການເງິນທີ່ກະກຽມສຳລັບການລາຍງານຂອງທະນາຄານ ນະປີທີ່ສິ້ນສຸດວັນທີ 31 ທັນວາ 2018, ຍົກເວັ້ນ ການປ່ຽນແປງຂອງນະໂຍບາຍການບັນຊີ ແລະ ບົດອະທິບາຍຊ້ອນທ້າຍທີ່ກ່ຽວກັບການດຳເນີນງານດັ່ງຕໍ່ໄປນີ້:

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2.9, ໃນວັນທີ 29 ມິຖຸນາ 2018, ຜູ້ວ່າການ ທຫລ ແຫ່ງ ສປປ ລາວໄດ້ປະກາດ ໃຊ້ຂໍ້ຕົກລົງ ເລກທີ 512/ທຫລ ("512") ກ່ຽວກັບ ການຈັດຊັ້ນໜີ້ ແລະ ການຫັກເງິນແຮ່ຄ່າເສື່ອມ ສຳລັບກິດຈະກຳສິນເຊື່ອ ເຊິ່ງມີຜົນບັງຄັບໃຊ້ ໃນວັນທີ 27 ກັນຍາ 2018 ແລະ ໄດ້ຖືກນຳໃຊ້ປ່ຽນແທນ ຂໍ້ຕົກລົງ ເລກທີ 324/ທຫລ ລົງວັນທີ 19 ເມສາ 2011. ໃນວັນທີ 14 ພະຈິກ 2018, ກົມຄຸ້ມຄອງທະນາຄານທຸລະກິດ ໄດ້ອອກຄຳແນະນຳຈັດຕັ້ງປະຕິບັດ ເລກທີ 898/ກຄທ ເພື່ອກຳນົດຄຳແນະນຳໃນການປະຕິບັດຕໍ່ກັບ ຂໍ້ຕົກລົງ ເລກທີ 512/ທຫລ. ລະບຽບການເຫຼົ່ານີ້ ນຳໄປສູ່ການ ປ່ຽນແປງທີ່ສຳຄັນໃນນະໂຍບາຍການບັນຊີດັ່ງຕໍ່ໄປນີ້:

(i) ການຈັດຊັ້ນໜີ້: ປ່ຽນແປງ ແລະ ເພີ່ມເຕີມ ຂໍ້ກຳນົດໃນການຈັດຊັ້ນໜີ້ ສຳລັບເງິນກູ້ທີ່ມີການປັບໂຄງສ້າງ.
(ii) ເງິນແຮ່ຄ່າເສື່ອມ: ເພີ່ມທາງເລືອກສຳລັບການຄິດໄລ່ເງິນແຮ່ຄ່າເສື່ອມໂດຍການລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳ ປະກັນເຂົ້າໃນສູດຄິດໄລ່.
(iii) ພາລະຜູກພັນ: ເພີ່ມເຕີມການຮັບຮູ້, ການຈັດຊັ້ນ ແລະ ການຫັກເງິນແຮ ສຳລັບພາລະຜູກພັນທາງການເງິນ.

ເນື່ອງຈາກບໍ່ມີຄຳແນະນຳຈາກ ທຫລ ໃນການຈັດຕັ້ງປະຕິບັດລະບຽບໃໝ່ນີ້ກັບໄປຄົນຫຼັງ, ທະນາຄານຈຶ່ງໄດ້ເລືອກຈັດຕັ້ງ ປະຕິບັດການປ່ຽນແປງນີ້ຕໍ່ໄປພາຍໜ້າ. ດັ່ງນັ້ນ, ມູນຄ່າ ແລະ ການນຳສະເໜີທັງໝົດຂອງການປຽບທຽບຕົວເລກໃນປີ 2017 ຍັງຄົງບໍ່ປ່ຽນແປງ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.4 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫຼັກການບັນຊີ ແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີຄິດໄລ່ແບບສະເໜີຕົວ ແລະ ອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາ ເງິນກູ້/ເງິນຝາກ ກັບ ລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນໜີ້ຕ້ອງຮັບທວງຍາກ (*ເບິ່ງບົດອະທິບາຍເລກທີ 2.9 ສຳລັບນິຍາມຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ*) ຫລື ເມື່ອຄະນະບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ກໍ່ຕໍ່ເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

2.5 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ

ຄ່າທຳນຽມ ແລະ ຄ່ານາຍໜ້າປະກອບດ້ວຍ ຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ, ການເງິນເພື່ອການຄ້າ, ຄ່າທຳນຽມວົງເງິນສິນເຊື່ອ ແລະ ອື່ນໆ.

ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບຍົນພື້ນຖານຫຼັກການເງິນສົດ.

2.6 ການຮັບຮູ້ລາຍຮັບຈາກເງິນປັນຜົນ

ລາຍຮັບຈາກເງິນປັນຜົນຈາກການລົງທຶນ ແມ່ນຮັບຮູ້ຢູ່ໃນລາຍງານຜົນການດຳເນີນງານ ເມື່ອທະນາຄານໄດ້ຮັບໃນການຈ່າຍເງິນ.

2.7 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດ ແມ່ນລວມມີ ເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດບໍ່ເກີນ ຫຼື ທຽບເທົ່າ 30 ວັນທີ່ສາມາດປ່ຽນເປັນເງິນສົດ ແລະ ໜີ້ຕ້ອງຮັບຈາກທະນາຄານອື່ນໂດຍກຳນົດເວລາໜ້ອຍກວ່າ ຫຼື ເທົ່າກັບ 30 ວັນ.

2.8 ເງິນກູ້ໃຫ້ແກ່ລູກຄ້າ

ເງິນກູ້ຢືມໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍລົບໃຫ້ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ.

2.9 ການຈັດຊັ້ນໜີ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ

ການຈັດຊັ້ນໜີ້ເງິນກູ້

ອີງຕາມຂໍ້ຕົກລົງ ເລກທີ 512/ທຫຄ (“BOL 512”) ລົງວັນທີ 29 ມິຖຸນາ 2018; ຄຳແນະນຳຈັດຕັ້ງປະຕິບັດ ເລກທີ 898/ກຄທ ລົງວັນທີ 14 ພະຈິກ 2018, ທະນາຄານ ໄດ້ຈັດຊັ້ນເງິນກູ້ ເປັນ 5 ກຸ່ມ ໂດຍອີງຕາມ ປະຫວັດການຄ້າງຈ່າຍ ແລະ ປັດໃຈເຊິ່ງຄຸນະພາບອື່ນໆ. ເງິນກູ້ ທີ່ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕ່ຳກ່ວາມາດຕະຖານໄດ້ແກ່ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງຮັບທວງຍາກ (“NPL”).

2. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

2.9 ການຈັດຊັ້ນໜີ້ ແລະ ເງິນຮັບສຳລັບກິດຈະກຳສິນເຊື່ອ (ຕໍ່)

ເງິນຮັບ

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ແລະ ທຫລ 898/ກຄທ, ທະນາຄານຕ້ອງໄດ້ສ້າງເງິນຮັບຄ່າເສື່ອມເງິນກູ້ ໂດຍອີງຕາມການຈັດຊັ້ນໜີ້ຂອງແຕ່ລະກຸ່ມດັ່ງຕໍ່ໄປນີ້:

ກຸ່ມ	*ອັດຕາເງິນຮັບ*	*ປະເພດຄ້ຳເງິນຮັບ (i)*	*ການບັນຊີສຳລັບຍອດເຫຼືອເງິນຮັບ (ii)*	*ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນຮັບ (iii)*
ເງິນກູ້ທີ່ເກີດດອກອອກຜົນ				
A	0.5%	ຄ້ຳເງິນຮັບທົ່ວໄປ	ໃນສ່ວນທຶນເຈົ້າຂອງ	ລາຍຈ່າຍ/ລາຍຮັບອື່ນໆ
B	3.0%	ຄ້ຳເງິນຮັບສະເພາະ	ໃນສ່ວນທຶນເຈົ້າຂອງ	ລາຍຈ່າຍ/ລາຍຮັບອື່ນໆ
ເງິນກູ້ທີ່ບໍ່ເກີດດອກອອກຜົນ				
C	20.0%	ຄ້ຳເງິນຮັບສະເພາະ	ຫັກຈາກຍອດເຫຼືອເງິນກູ້	ເງິນຮັບສຸດທິສຳລັບ ໜີ້ NPL
D	50.0%	ຄ້ຳເງິນຮັບສະເພາະ	ຫັກຈາກຍອດເຫຼືອເງິນກູ້	ເງິນຮັບສຸດທິສຳລັບ ໜີ້ NPL
E	100.0%	ຄ້ຳເງິນຮັບສະເພາະ	ຫັກຈາກຍອດເຫຼືອເງິນກູ້	ເງິນຮັບສຸດທິສຳລັບ ໜີ້ NPL

(i) ມູນຄ່າເງິນຮັບແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ລຸ່ມນີ້:

ກ. ເງິນຮັບທົ່ວໄປ = ອັດຕາເງິນຮັບ x ຍອດເຫຼືອເງິນກູ້

ຂ. ເງິນຮັບສະເພາະ = ອັດຕາເງິນຮັບ x (ຍອດເຫຼືອເງິນກູ້ - ມູນຄ່າສ່ວນຫຼຸດຂອງຫຼັກຊັບຄ้ຳປະກັນ)

ທະນາຄານສາມາດເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ้ຳປະກັນເຂົ້າໃນສູດຄິດໄລ່ເງິນຮັບ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ.

(ii) ຍອດເຫຼືອເງິນຮັບຂອງ*ເງິນກູ້ທີ່ເກີດດອກອອກຜົນ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນຢູ່ "ເງິນຮັບສຳລັບເງິນກູ້ທີ່ເກີດດອກອອກຜົນ".

ຍອດເຫຼືອສະສົມຂອງ*ເງິນຮັບຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນກູ້ໃຫ້ລູກຄ้າ, ຫຼັງຫັກເງິນຮັບສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".

(iii) ການປ່ຽນແປງສຳລັບ*ເງິນຮັບຂອງເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນຮັບ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບການເກັບຄືນລາຍຈ່າຍເງິນຮັບ.

ການປ່ຽນແປງສຳລັບ*ເງິນຮັບຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍ/(ເກັບຄືນ) ເງິນຮັບສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.10 *ການລົງທຶນໃນຫລັກຊັບທີ່ມີໄວ້ເພື່ອຂາຍ*

ການລົງທຶນໃນຫລັກຊັບທີ່ມີໄວ້ເພື່ອຂາຍລວມມີເຄື່ອງມືທາງການເງິນທີ່ເປັນທຶນ ເຊິ່ງທະນາຄານມີຄວາມປະສົງຖືໄວ້ເພື່ອລົງທຶນ ແລະ ກຽມພ້ອມເພື່ອການຄ້າ. ຫຼັກຊັບດັ່ງກ່າວຈະບໍ່ຖືກຂາຍກ່ອນຮອດມື້ຄົບກຳນົດ ແຕ່ສາມາດຂາຍໄດ້ທຸກເວລາເມື່ອຫຸລະກຳມີຜົນກຳໄລ.

ຫຼັກຊັບທີ່ມີໄວ້ເພື່ອຂາຍໃນເບື້ອງຕົ້ນ ແມ່ນຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ກໍ່ຈະສືບຕໍ່ຮັບຮູ້ຕາມມູນຄ່າຕົ້ນທຶນຈາກການເສື່ອມຄ່າ (ຖ້າມີ).

ຫຼັກຊັບທີ່ມີໄວ້ເພື່ອຂາຍແມ່ນມີການທົບທວນຄືນການເສື່ອມມູນຄ່າເປັນແຕ່ລະໄລຍະ. ຄັງແຮຄ່າເສື່ອມຂອງຫລັກຊັບເຫຼົ່ານັ້ນຖືກກຳນົດຂຶ້ນເມື່ອເຫັນວ່າມູນຄ່າຍຸຕິທຳຕ່ຳກວ່າມູນຄ່າເດີມຫຼາຍ ຫຼື ຕໍ່ເນື່ອງເປັນເວລາຍາວນານ. ຄັງແຮຄ່າເສື່ອມມູນຄ່າແມ່ນໄດ້ຖືກຮັບຮູ້ເປັນ *"ກຳໄລ/(ຂາດທຶນ) ສຸດທິ ຈາກການລົງທຶນໃນ ຫຼັກຊັບ"* ໃນໃບລາຍງານຜົນການດຳເນີນງານ.

2.11 *ຫຼັກຊັບຖືໄວ້ຈົນຄົບກຳນົດ*

ການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ ແມ່ນຫຼັກຊັບປະເພດໜີ້ທີ່ມີກຳນົດການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ ເຊິ່ງທາງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດເພື່ອໃຫ້ໄດ້ລາຍຮັບຈາກດອກເບ້ຍ. ເມື່ອຫຼັກຊັບດັ່ງກ່າວຖືກຂາຍກ່ອນວັນຄົບກຳນົດແມ່ນຈະໄດ້ຖືກຈັດປະເພດຄືນໃໝ່ເປັນ ຫຼັກຊັບປະເພດມີໄວ້ເພື່ອຄ້າ ຫຼື ຫຼັກຊັບປະເພດມີໄວ້ເພື່ອຂາຍ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດໃນເບື້ອງຕົ້ນ ແມ່ນຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ກໍ່ຈະສືບຕໍ່ຮັບຮູ້ຕາມມູນຄ່າຕົ້ນທຶນໃນປີຕໍ່ໄປ. ສ່ວນເກີນ ແລະ ສ່ວນຫຼຸດທີ່ເກີດຈາກການຈັດຊື້ຫຼັກຊັບແມ່ນຖືກແບ່ງສ່ວນເຂົ້າ ໃນໃບລາຍງານຜົນການດຳເນີນງານ ເຊິ່ງນຳໃຊ້ແບບວິທີສະເໜີຕົວຕາມໄລຍະເວລາຈາກມື້ທີ່ຊື້ ຫາ ມື້ທີ່ຄົບກຳນົດ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ ຕ້ອງມີການທົບທວນຄືນຄ່າເສື່ອມເປັນແຕ່ລະໄລຍະ, ເງິນແຮຄ່າເສື່ອມສຳລັບຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ ຈະຖືກລົງບັນຊີເມື່ອມູນຄ່າຍຸດຕິທຳມີການຫຼຸດລົງຫຼາຍ ຫຼື ຫຼຸດລົງຕ່ຳກວ່າຕົ້ນທຶນເປັນເວລາດົນ. ເງິນແຮສຳລັບຄ່າເສື່ອມ ຈະຖືກບັນທຶກເປັນ "ກຳໄລ/(ຂາດທຶນ) ສຸດທິຈາກການລົງທຶນໃນຫຼັກຊັບ" ໃນໃບລາຍງານຜົນການດຳເນີນງານ.

2.12 *ຊັບສິນບັດຖືທີ່*

ຊັບສິນບັດຖືທີ່ລວມມີຊັບສິນບັດຖືທີ່ທີ່ມີຕົວຕົນ ແລະ ຊັບສິນບັດຖືທີ່ບໍ່ມີຕົວຕົນ. ຊັບສິນບັດຖືທີ່ທີ່ມີຕົວຕົນ ປະກອບມີ ອາຄານ ແລະ ການປັບປຸງ, ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ ແລະ ເຄື່ອງຕິດຕັ້ງ ແລະ ພາຫນະ. ຊັບສິນບັດ ຖືທີ່ທີ່ບໍ່ມີຕົວຕົນປະກອບສິດນຳໃຊ້ທີ່ດິນ ແລະ ຄອມພິວເຕີຊັອບແວ.

ຊັບສິນບັດຖືທີ່ໄດ້ຖືກຮັບຮູ້ດ້ວຍຕົ້ນທຶນຂັ້ນຕົ້ນ. ຖ້າວ່າຕົ້ນທຶນຂອງຊັບສິນລວມມີ ລາຄາຊື້ ບວກ ລາຍຈ່າຍອື່ນໆທີ່ກ່ຽວຂ້ອງໂດຍກົງ ເພື່ອເຮັດໃຫ້ຊັບສິນນັ້ນພ້ອມໃນການນຳໃຊ້.

ຫຼັງຈາກການຮັບຮູ້ຕົ້ນທຶນຂັ້ນຕົ້ນ:

- ຊັບສິນຖືທີ່ ສາມາດວັດແທກມູນຄ່າທາງ ແລະ ໄດ້ສະແດງ ໃຫ້ເຫັນການຕີມູນ ຄ່າຄືນໃໝ່, ເປັນມູນຄ່າທາງ ບວ ວັນທີ ມີການຕີມູນຄ່າໃໝ່ຫັກດ້ວຍຄ່າເສື່ອມສະສົມ ແລະ ຂາດທຶນຈາກມູນຄ່າດ້ວຍສະສົມ ເມື່ອມູນຄ່າທາງຂອງຊັບສິນທີ່ຕີລາຄາໃໝ່ມີຄວາມແຕກຕ່າງຈາກລາຄາຕາມບັນຊີຢ່າງມີໃຈຄວາມສຳຄັນ, ຈຳເປັນຕ້ອງມີການປະເມີນມູນຄ່າໃໝ່ເມື່ອ

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.12 ຊັບສິນບັດຄົງທີ່ (ຕໍ່)

ລາຍການຊັບສິນ ອາຄານ ແລະ ອັດສະດຸໃນການປະເມີນລາຄາຄືນໃໝ່.

- ຖ້າຈຳນວນມູນຄ່າຂອງຊັບສິນເພີ່ມຂຶ້ນຍ້ອນການຕີມູນຄ່າຄືນໃໝ່ ແມ່ນຖືກບັນທຶກໃນ "ການປະເມີນມູນຄ່າສຳຮອງ", ຖ້າໃນເວລາຊັບສິນຫຼຸດລົງຈະຖືກຮັບຮູ້ເປັນກຳໄລ ຫຼື ຂາດທຶນ.
- "ການປະເມີນມູນຄ່າສຳຮອງ" ລວມຢູ່ໃນສ່ວນຂອງເຈົ້າຂອງລາຍການຊັບສິນຖາວອນທີ່ຖືກໂອນໂດຍເປັນກຳໄລສະສົມ ເມື່ອມີການຕັດຈຳໜ່າຍຈາກຊັບສິນບັດຄົງທີ່ໂອນ ເປັນກຳໄລສະສົມທີ່ບໍ່ໄດ້ຢູ່ໃນຜົນກຳໄລ ຫຼື ຂາດທຶນ.
- ຊັບສິນຄົງທີ່ອື່ນໆ ຕໍ່ມາສະແດງໃນການຫັກມູນຄ່າເສື່ອມສະສົມ ແລະ ມູນຄ່າເສື່ອມລາຄາ, ຖ້າມີ.

ລາຍຈ່າຍເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸແມ່ນບັນທຶກເປັນຊັບສິນ ແລະ ບັນທຶກເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ມູນຄ່າຕາມບັນຊີຈະຖືກສະສາງຈາກໃບລາຍງານຖານະທາງການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

2.13 ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່

ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ແມ່ນ ຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົ້ນໃນອັດຕາທີ່ກຳນົດໃຊ້ຕໍ່ ການຄາດຄະເນອາຍຸການນຳໃຊ້ຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍ ວ່ອຍສາອາກອນຂອງ ສປປ ລາວ ເລກທີ 70/ສພຊ ນະວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງຈາກ ວັນທີ 24 ພຶດສະພາ 2016 ອອກໂດຍ ປະທານສະພາແຫ່ງຊາດ, ອັດຕາການຄິດໄລ່ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີມີດັ່ງຕໍ່ໄປນີ້:

	ບໍ່ມີຄ່າເສື່ອມມູນຄ່າ
ສິດນຳໃຊ້ທີ່ດິນ (*)	
ຄອມພິວເຕີ ຊັອບແວ	50%
ອາຄານ ແລະ ການປັບປຸງ	5%
ເຄື່ອງຫ້ອງການ	20%
ເຟີນີເຈີ ແລະ ສິ່ງຕິດຕັ້ງ	20%
ພາຫະນະ	20%

(*): ມູນຄ່າຂອງສິດນຳໃຊ້ທີ່ດິນແມ່ນບໍ່ໄດ້ຫັກຄ່າເສື່ອມເນື່ອງຈາກບໍ່ໄດ້ກຳນົດອາຍຸການນຳໃຊ້.

2.14 ຄັງສຳຮອງຕາມລະບຽບການ

ພາຍໃຕ້ຂໍ້ກຳນົດຂອງກົດໝາຍ ວ່າດ້ວຍທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດຕ້ອງ ໄດ້ແບ່ງຜົນກຳໄລສຸດທິ ເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການດັ່ງລຸ່ມນີ້:

- ► ຄັງສຳຮອງຕາມລະບຽບການ
- ► ຄັງສຳຮອງຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆ

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.14 *ຄັງສຳຮອງຕາມລະບຽບການ* (ຕໍ່)

ອີງຕາມມາດຕາ 156 ຂອງກົດໝາຍວ່າດ້ວຍວິສາຫະກິດ, ລົງວັນທີ 26 ທັນວາ 2013, ທະນາຄານຖືກຮຽກຮ້ອງໃຫ້ຫັກເງິນ ແຮ 10% ຂອງກຳໄລຫຼັງອາກອນໃນແຕ່ລະປີເຂົ້າຄັງສຳຮອງຕາມກົດໝາຍ. ເມື່ອຄັງສຳຮອງເຖິງ 50% ຂອງເງິນທຶນຈົດທະບຽນ, ທະນາຄານອາດຈະຢຸດການສຳຮອງດັ່ງກ່າວ, ເວັ້ນເສຍແຕ່ກົດໝາຍຈະກຳນົດຢ່າງອື່ນ.

ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຄວນຖືກສ້າງຂຶ້ນພາຍໃຕ້ການຕົກລົງຂອງຄະນະບໍລິຫານ. ທະນາຄານບໍ່ໄດ້ສ້າງຄັງສຳຮອງຢ່າງເໝາະສົມໃນປີນີ້ ເນື່ອງຈາກການຂາດທຶນສະສົມ.

2.15 *ລາຍການເຄື່ອນໄຫວກ່ຽວກັບເງິນຕາຕ່າງປະເທດ*

ທະນາຄານໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ. ລາຍຮັບ ແລະ ລາຍຈ່າຍ ທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນ ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ເປັນສະກຸນເງິນຕາອື່ນທີ່ບໍ່ແມ່ນສະກຸນເງິນກີບ. ແມ່ນໃຫ້ປ່ຽນເປັນເງິນກີບຕາມອັດຕາແລກປ່ຽນໃນມື້ປິດບັນຊີ. ສ່ວນຜິດຕ່ຽງເງິນຕາຕ່າງປະເທດທີ່ເກີດຈາກການຕີມູນຄ່າຂອງຊັບສິນ ແລະ ໜີ້ສິນຂອງເງິນຕາໃນໃບລາຍງານງົບດຸນຮັບຮູ້ໃນໃບສະຫຼຸບຜົນກຳໄລຂາດທຶນໃນມື້ສ້າງໃບລາຍງານຖານະການເງິນ. ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບ ນະວັນທີ 31 ທັນວາ 2018 ແລະ 31 ທັນວາ 2017 ໄດ້ສະແດງຢູ່ຂ້າງລຸ່ມນີ້:

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ໂດລາ ສະຫະລັດ ("ໂດລາ")	8,510.00	8,275.00
ບາດ ໄທ ("ບາດ")	265.14	252.50

2.16 *ອາກອນກຳໄລ*

ອາກອນກຳໄລຂອງນິຕິບຸກຄົນ ແມ່ນຍົກເວັ້ນອາກອນທີ່ຕ້ອງຈ່າຍຕໍ່ງວດອາກອນດັ່ງກ່າວ. ການນຳໃຊ້ອັດຕາອາກອນ ທີ່ໄດ້ປະກາດນຳໃຊ້ຢ່າງມີສາລະສຳຄັນ ນະວັນທີອອກບົດລາຍງານກຳໄລຂາດທຶນ ແລະ ການດັດແກ້ ຕໍ່ການຊຳລະອາກອນຕ້ອງຈ່າຍໃນງວດກ່ອນໆ. ອີງຕາມກົດໝາຍອາກອນສະບັບເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ທີ່ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 24 ພຶດສະພາ 2016, ທະນາຄານແມ່ນມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນອາກອນ. ເຖິງຢ່າງໃດກໍຕາມ, ທະນາຄານນຳໃຊ້ອັດຕາ 20% ຂອງກຳໄລກ່ອນອາກອນ ໂດຍອີງຕາມໃບອະນຸຍາດລົງທຶນຕ່າງປະເທດ ສະບັບເລກທີ 133/10 ລົງວັນທີ 23 ກັນຍາ 2010 ທີ່ອອກໂດຍ ກະຊວງແຜນການ ແລະ ການລົງທຶນ (2017: 20% ຂອງກຳໄລກ່ອນອາກອນ) ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.17 *ຜົນປະໂຫຍດຂອງພະນັກງານ*

ຜົນປະໂຫຍດຫຼັງອອກການ

ຜົນປະໂຫຍດຫລັງອອກການຈະຖືກຈ່າຍໃຫ້ພະນັກງານທະນາຄານຜູ້ທີ່ບໍານານໂດຍພະແນກກອງທຶນສະຫວັດດີການສັງຄົມ ເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານໄດ້ກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆ ເດືອນ. ທະນາຄານບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫຼັງອອກການ.

ຜົນປະໂຫຍດຈາກການຢຸດຈ້າງງານ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງເລກທີ 43/ສພຊ ລົງນາມໂດຍປະທານປະເທດແຫ່ງ ສປປ ລາວລົງ ວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ເມື່ອພະນັກງານບໍ່ມີສຸຂະພາບແຂງແຮງ ດັ່ງນັ້ນ, ຈຶ່ງບໍ່ສາມາດເຮັດວຽກຕໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫຼຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ກ່າວມາຂ້າງເທິງ. ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານທີ່ໄດ້ຮັບກ່ອນການເລີກຈ້າງ. ນະວັນທີ 31 ທັນວາ 2018, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ, ທະນາຄານບໍ່ໄດ້ຫັກຄັ່ງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

3. ລາຍຮັບສຸດທິຈາກດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍ

	2018 *ກີບ*	*2017* *ກີບ*
ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍຈາກ:		
ທຸລະກຳລະຫວ່າງທະນາຄານ	181,686,465	860,927,525
ເງິນກູ້ໃຫ້ລູກຄ້າ	197,766,356,648	148,861,107,409
ພັນທະບັດຂອກໂດຍ ທຫລ	2,385,244,778	340,136,985
	200,333,287,891	**150,062,171,919**
ລາຍຈ່າຍດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍຈາກ:		
ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ	(2,434,241,860)	(1,908,265,060)
ເງິນຝາກລູກຄ້າ	(129,254,408,470)	(101,254,937,789)
	(131,688,650,330)	**(103,163,202,849)**
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**68,644,637,561**	**46,898,969,070**

4. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2018 ກີບ	2017 ກີບ
ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ທຸລະກຳກັບທະນາຄານ	1,165,852,294	2,011,283,590
ລາຍການເຄື່ອນໄຫວດ້ານການເງິນ, ATM ແລະ ກິດຈະ ກຳການໂອນຜ່ານ	56,546,915,342	58,446,604,997
ບໍລິການຊຳລະສະສາງ	3,041,082,980	2,877,702,625
	60,753,850,616	**63,335,591,212**
ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຳລັບ:		
ບໍລິການຊຳລະສະສາງ	(1,373,660,104)	(823,297,530)
ລາຍການເຄື່ອນໄຫວທີ່ກ່ຽວຂ້ອງກັບທະນາຄານ	(8,137,892,281)	(7,943,212,280)
	(9,511,552,385)	**(8,766,509,810)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**51,242,298,231**	**54,569,081,402**

5. ກຳໄລຈາກການລົງທຶນໃນຫຼັກຊັບ

	2018 ກີບ	2017 ກີບ
ເງິນປັນຜົນ ແລະ ກຳໄລຈາກລາຍຮັບທຽບເທົ່າອື່ນໆ	**290,000,000**	**270,000,000**
- ເງິນປັນຜົນຈາກຫຸ້ນ EDL-Gen	290,000,000	270,000,000
ກຳໄລຈາກການຊື້ຫຼຸດພັນທະບັດ	**10,817,333,333**	**-**
- ພັນທະບັດຫຼຸດລາຄາ	10,817,333,333	-
	11,107,333,333	**270,000,000**

6. ລາຍຮັບອື່ນໆຈາກການດຳເນີນງານ

	2018 ກີບ	2017 ກີບ
ເກັບຄືນຈາກລາຍຈ່າຍ ແລະ ຄ້າງຮັບດອກເບ້ຍ	168,036,237	128,397,563
ເກັບຄືນໜີ້ສູນທີ່ໄດ້ລ້າງອອກ	-	6,538,000
ລາຍຮັບຈາກການສະສາງຊັບສິນບັດຄົງທີ່	187,913,254	3,556,504,002
ອື່ນໆ	2,987,368,733	2,214,980,099
	3,343,318,224	**5,906,419,664**

7. ເງິນເດືອນ ແລະ ລາຍຈ່າຍອື່ນໆທີ່ກ່ຽວພັນກັບພະນັກງານ

	2018 ກີບ	2017 ກີບ
ຄ່າແຮງງານ ແລະ ເງິນເບ້ຍລ້ຽງ	39,155,945,151	34,992,116,494
ຄ່າປະກັນສັງຄົມສຳລັບພະນັກງານ	1,366,296,082	1,149,067,244
ໂບນັດ ແລະ ສະຫວັດດີການ	448,662,740	368,587,603
ລາຍຈ່າຍເບ້ຍບຳນານ	-	112,625,373
ຄ່າໃຊ້ຈ່າຍໃນການຝຶກອົບຮົມ	89,400,798	64,417,338
ອື່ນໆ	229,863,245	114,500,930
	41,290,168,016	**36,801,314,982**

8. ລາຍຈ່າຍອື່ນໆໃນການບໍລິຫານງານ

	2018 ກີບ	2017 ກີບ
ຄ່ານາຍໜ້າ ແລະ ວິຊາຊີບ	1,860,419,058	333,086,428
ຄ່ານ້ຳມັນ	1,080,483,446	934,031,088
ຄ່າໃຊ້ຈ່າຍໃນການເດີນທາງ	1,590,540,124	471,038,716
ລາຍຈ່າຍໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	3,542,923,802	4,027,302,170
ລາຍຈ່າຍບັນເທີງ	2,292,268,110	1,640,171,755
ລາຍຈ່າຍບໍລິຫານທົ່ວໄປ	2,440,153,293	2,431,480,145
ລາຍຈ່າຍປະກັນໄພ	385,395,451	556,568,260
ລາຍຈ່າຍຄ່າໂທລະຄົມມະນາຄົມ	2,976,744,396	2,615,242,117
ລາຍຈ່າຍຄ່າ ບຳລຸງຮັກສາ ແລະ ສ້ອມແປງ	7,470,899,131	5,822,778,562
ຄ່ານ້ຳ ແລະ ໄຟຟ້າ	2,384,080,800	2,177,832,602
ລາຍຈ່າຍຄ່າເຊົ່າຫ້ອງການ	5,519,186,530	5,190,972,719
ອື່ນໆ	5,478,474,174	5,141,405,164
	37,021,568,315	**31,341,909,726**

9. ລາຍຈ່າຍອື່ນໆໃນການຄ່າເນີນງານ

	2018 ກີບ	2017 ກີບ
ກອງທຶນປົກປ້ອງຜູ້ຝາກເງິນ	1,859,758,048	1,521,590,951
ເງິນແຮສຸດທີ່ສຳລັບເງິນກູ້ທີ່ເກີດດອກອອກຜົນ *(ບົດອະທິບາຍ ເລກທີ 14.2)*	4,042,722,014	2,609,674,063
ອື່ນໆ	108,837,480	14,955,336
	6,011,317,542	**4,146,220,350**

10. ເງິນສົດໃນຄັງ

	2018 ກີບ	2017 ກີບ
ເງິນສົດໃນຄັງ ທີ່ເປັນສະກຸນເງິນກີບ	86,541,569,000	90,939,801,000
ເງິນສົດໃນຄັງ ທີ່ເປັນສະກຸນເງິນຕາຕ່າງປະເທດ	162,725,284,456	139,470,122,753
	249,266,853,456	**230,409,923,753**

11. ເງິນຝາກກັບທະນາຄານແຫ່ງ ສປປ ລາວ

	31 ທັນວາ 2018 ກີບ	31 ທັນວາ 2017 ກີບ
ເງິນຝາກກະແສລາຍວັນ	324,693,852,945	208,185,032,317
ເງິນຝາກພາກບັງຄັບ (i)	133,490,509,551	126,309,789,325
ເງິນຝາກສຳລັບທຶນຈົດທະບຽນ (ii)	5,915,000	5,915,000
	458,190,277,496	**334,500,736,642**

ເງິນຝາກກັບທະນາຄານແຫ່ງ ສປປ ລາວ ລວມທັງ ບັນຊີເງິນຝາກ, ເງິນຄັງຕາມກົດໝາຍບັງຄັບ ແລະ ທຶນຈົດທະບຽນ. ແມ່ນ ບໍ່ມີດອກເບ້ຍ.

(i) ພາຍໃຕ້ຂໍ້ກຳນົດຂອງ ທຫລ, ທະນາຄານໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງແຮເງິນສົດໄວ້ກັບທະນາຄານແຫ່ງສປປລາວ ໃນຮູບແບບເງິນຝາກພາກບັງຄັບເຊິ່ງຄິດໄລ່ໃນອັດຕາ 5.00% ສຳລັບເງິນກີບ ແລະ 10.00% ສຳລັບເງິນຕາ ຕ່າງປະເທດ (2017: 5.00% ແລະ 10.00%) ໃນທຸກໆ 2 ຄັ້ງຕໍ່ເດືອນຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີທະນາຄານໄດ້ຮັກສາເງິນຝາກພາກບັງຄັບເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ.

(ii) ພາຍໃຕ້ຂໍ້ຕົກລົງສະບັບເລກທີ 02/ທຫລ. ທະນາຄານທຸລະກິດຈະຕ້ອງຮັກສາຍອດເງິນຂັ້ນຕ່ຳຂອງເງິນຝາກພາກ ບັງຄັບໃນ ທຫລ ເຊິ່ງທຽບເທົ່າກັບ 25% ຂອງທຶນຈົດທະບຽນເພື່ອຮັກສາຄວາມປອດໄພໃນການດຳເນີນງານຂອງ ທະນາຄານ. ທະນາຄານໄດ້ຖືກອະນຸມັດໂດຍ ທຫລ ຈາກໜັງສືທາງການເລກທີ 46/ກຄທ, ລົງວັນທີ 5 ກຸມພາ 2014 ເພື່ອຖອນເງິນຈາກຄັງສຳຮອງໃນການເພີ່ມທຶນດຳເນີນງານ. ນະວັນທີ 31 ທັນວາ 2018, ຍອດເງິນຝາກແຮບັງຄັບຂອງ ທະນາຄານແມ່ນ 5,915,000 ກີບ.

12. ໜີ້ຕ້ອງຮັບຈາກທະນາຄານ

12.1 *ເງິນຝາກແລະລາຍວັນ*

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ເງິນຝາກແລະລາຍວັນກັບທະນາຄານພາຍໃນປະເທດ	**138,775,899,586**	**46,879,087,962**
ທະນາຄານພັດທະນາລາວ	2,545,203,776	3,824,571,484
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ	136,230,208,131	43,054,016,478
ທະນາຄານອິນໂດຈີນ ຈຳກັດ	487,679	500,000
ເງິນຝາກແລະລາຍວັນກັບທະນາຄານຕ່າງປະເທດ	**51,095,223,270**	**23,542,159,459**
ທະນາຄານ ຢູໄນເຕັດ ໂອເວີຊີ	22,309,553,938	7,108,767,927
ທະນາຄານ ກະສິກອນ ມະຫາຊົນ ຈຳກັດ	4,295,702,145	9,924,477,082
ທະນາຄານ ທະນາຊາດ ມະຫາຊົນ ຈຳກັດ	492,617,232	428,229,790
ທະນາຄານ ຊີໄອເອັມບີໄທ ຈຳກັດ	1,116,140	2,160,000
ທະນາຄານ ພີເອັນຊີ	1,441,804,623	1,393,792,343
ທະນາຄານ ກຸງເທບ	22,554,429,192	4,684,732,317
	189,871,122,856	**70,421,247,421**

12.2 *ເງິນຝາກມີກຳນົດ*

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ທະນາຄານ ລາວຈີນ ຈຳກັດ	10,000,000,000	-

ເງິນຝາກທະນາຄານ ລາວຈີນ ຈຳກັດ ໃນສະກຸນເງິນກີບ, ໄລຍະເວລາ 1 ປີ ແລະ ອັດຕາດອກເບ້ຍ 4.5% ຕໍ່ປີ.

12.3 *ເງິນຝາກປະຢັດ*

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ເງິນຝາກປະຢັດກັບທະນາຄານພາຍໃນປະເທດ	**405,907,055**	**15,042,160,848**
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ	405,907,055	15,042,160,848
ເງິນຝາກປະຢັດກັບທະນາຄານຕ່າງປະເທດ	**26,333,657,368**	**40,280,809,496**
ທະນາຄານ ຊີໄອເອັມບີ ໄທ ມະຫາຊົນ ຈຳກັດ	20,116,272,492	11,617,882,202
ທະນາຄານ ຊີໄອເອັມບີ ໄທ ມະຫາຊົນ ຈຳກັດ ສາຂາໜອງຄາຍ	-	200,275,892
ທະນາຄານ ຊີໄອເອັມບີ ໄທ ມະຫາຊົນ ຈຳກັດ, ສາຂາຫຼ້ຽງສອນ	-	19,303,523,129
ທະນາຄານ ນິວຢອກ ເມລເລັນ	3,225,160,393	2,088,212,221
ທະນາຄານ ທະນະຊາດ ມະຫາຊົນ ຈຳກັດ	1,100,314,556	5,214,519,534
ທະນາຄານ ຢູໄນເຕັດ ໂອເວີຊີ	1,891,909,927	1,856,396,518
	26,739,564,423	**55,322,970,344**

ເງິນຝາກປະຢັດແມ່ນບໍ່ມີກຳນົດ ແລະ ໄດ້ອັດຕາດອກເບ້ຍລະຫວ່າງ 0.5% ຫາ 1.7%.

13. ການລົງທຶນໃນຫຼັກຊັບ

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ຫຼັກຊັບປະເພດມີໄວ້ເພື່ອຂາຍ (i)	4,300,000,000	4,300,000,000
ຫຼັກຊັບຖືໄວ້ຈົນຄົບກຳນົດ (ii)	77,875,050,000	13,000,000,000
	82,175,050,000	**17,300,000,000**

(i) ຫຼັກຊັບມີໄວ້ເພື່ອຂາຍ ແມ່ນສະແດງເຖິງຮຸ້ນ ໜຶ່ງລ້ານຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບຂອງ ບໍລິສັດຜະລິດໄຟຟ້າ ລາວ ມະຫາຊົນ, ຮຸ້ນເຫຼົ່ານັ້ນມີມູນຄ່າໜ້າບັດແມ່ນ 4,300 ຕໍ່ຮຸ້ນ.

(ii) ການຮັບຮອງພັນທະບັດທີ່ອອກໂດຍກະຊວງການເງິນ. ລາຍລະອຽດພັນທະບັດນະວັນທີ 31 ທັນວາ 2018 ມີດັ່ງນີ້:

ວັນທີ	*ມູນຄ່າໜ້າບັດ* *ກີບ*	*ກຳນົດເວລາ*	*ອັດຕາດອກເບ້ຍ* *(% ຕໍ່ປີ)*
22 ມິຖຸນາ 2018	13,000,000,000	1 ປີ	5.00%
24 ພຶດສະພາ 2018	1,999,663,000	1 ປີ	3.00%
24 ພຶດສະພາ 2018	625,353,000	1 ປີ	3.00%
24 ພຶດສະພາ 2018	1,999,664,000	3 ປີ	3.40%
24 ພຶດສະພາ 2018	625,354,000	3 ປີ	3.40%
24 ພຶດສະພາ 2018	625,353,000	2 ປີ	3.20%
24 ພຶດສະພາ 2018	1,999,663,000	2 ປີ	3.20%
26 ເມສາ 2018	57,000,000,000	1 ປີ	4.00%
	77,875,050,000		

14. ເງິນກູ້ໃຫ້ລູກຄ້າ, ຫຼັກຊັບເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ເງິນໃຫ້ລູກຄ້າ *(ບົດອະທິບາຍເລກທີ 14.1)*	2,196,515,422,204	1,919,377,962,163
ລົບເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 14.2)*	(6,054,502,566)	(5,952,536,510)
	2,190,460,919,638	**1,913,425,425,653**

14.1 ເງິນກູ້ໃຫ້ລູກຄ້າ

ການວິເຄາະສິນເຊື່ອຕາມສະກຸນເງິນ

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ເງິນກູ້ ເປັນສະກຸນເງິນກີບ	448,045,280,860	478,429,930,139
ເງິນກູ້ ເປັນສະກຸນເງິນໂດລາ	1,025,558,297,954	866,691,248,353
ເງິນກູ້ ເປັນສະກຸນເງິນບາດ	722,911,843,390	574,256,783,671
	2.196,515,422,204	**1,919,377,962,163**

14. ເງິນກູ້ໃຫ້ລູກຄ້າ, ຫຼັກຫັກເງິນແຮສຸດທີສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)

14.1 *ເງິນກູ້ໃຫ້ລູກຄ້າ* (ຕໍ່)

ອັດຕາດອກເບ້ຍສຳລັບການປ່ອຍສິນເຊື່ອພາຍໃນປີມີດັ່ງລຸ່ມນີ້:

	2018 ***ອັດຕາດອກເບ້ຍ*** ***% ຕໍ່ປີ***	*2017* ***ອັດຕາດອກເບ້ຍ*** ***% ຕໍ່ປີ***
ເງິນກູ້ ເປັນສະກຸນເງິນກີບ	9.00%-14.00%	9.00%-14.00%
ເງິນກູ້ ເປັນສະກຸນເງິນໂດລາ	7.00%-12.00%	7.00%-12.00%
ເງິນກູ້ ເປັນສະກຸນເງິນບາດ	7.00%-12.00%	7.00%-12.00%

ການວິເຄາະສິນເຊື່ອຕາມຄຸນນະພາບເງິນກູ້

	31 ທັນວາ 2018 ***ກີບ***	*31 ທັນວາ 2017* ***ກີບ***
ໜີ້ປົກກະຕິ	2,052,501,508,740	1,902,607,090,563
ໜີ້ຄວນເອົາໃຈໃສ່	122,967,885,923	4,037,046,428
ໜີ້ຕ່ຳກວ່າມາດຕະຖານ	15,110,488,041	5,311,878,587
ໜີ້ສົງໃສ	5,806,269,085	5,063,571,585
ໜີ້ສູນ	129,270,415	2,358,375,000
	2,196,515,422,204	**1,919,377,962,163**

14.2 *ເງິນແຮສຳລັບໜີ້ເສຍ*

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ນະວັນທີ 31 ທັນວາ 2018 ມີດັ່ງລຸ່ມນີ້:

ການຈັດຊັ້ນໜີ້	*ຍອດຫຼືອເງິນກູ້* ***ກີບ***	*ເງິນແຮທົ່ວໄປສຳລັບ ເງິນກູ້ທີ່ເກີດດອກ ອອກຜົນ* ***ກີບ***	*ເງິນແຮສຳລັບເງິນກູ້ ທີ່ບໍ່ເກີດດອກອອກ ຜົນ* ***ກີບ***	*ລວມເງິນແຮທັ້ງໝົດ* ***ກີບ***
ເງິນກູ້ທີ່ເກີດດອກ ອອກຜົນ	**2,175,469,394,663**	**13,951,544,121**	**-**	**13,951,544,121**
- *ໜີ້ປົກກະຕິ*	*2,052,501,508,740*	*10,262,507,543*	-	*10,262,507,543*
- *ໜີ້ຄວນ ເອົາໃຈໃສ່*	*122,967,885,923*	*3,689,036,578*	-	*3,689,036,578*
ເງິນກູ້ທີ່ບໍ່ເກີດດອກ ອອກຜົນ ("NPL")	**21,046,027,541**	**-**	**6,054,502,566**	**6,054,502,566**
- *ໜີ້ຕ່ຳກວ່າ ມາດຕະຖານ*	*15,110,488,041*	-	*3,022,097,608*	*3,022,097,608*
- *ໜີ້ສົງໃສ*	*5,806,269,085*	-	*2,903,134,543*	*2,903,134,543*
- *ໜີ້ສູນ*	*129,270,415*	-	*129,270,415*	*129,270,415*
ລວມທັ້ງໝົດ	**2,196,515,422,204**	**13,951,544,121**	**6,054,502,566**	**20,006,046,687**

14. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສຸດທີ່ສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)

14.2 *ເງິນແຮສຳລັບສິນເຊື່ອທີ່ບໍ່ເກີດດອກອອກຜົນ* (ຕໍ່)

ການເຄື່ອນໄຫວຂອງເງິນແຮສຳລັບສິນເຊື່ອທີ່ບໍ່ເກີດດອກອອກຜົນຂອງທະນາຄານພາຍໃນປີ 2018 ແລະ 2017 ມີດັ່ງລຸ່ມນີ້:

	ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ ກີບ	*ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ກີບ*	*ລວມເງິນແຮທັ້ງໝົດ ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2017	**6,842,974,833**	**5,986,179,008**	**12,829,153,841**
ເງິນແຮສຸດທີ່ໄດ້ຫັກເກັບຄືນໃນປີ	2,609,674,063	(61,525,409)	2,548,148,654
ສ່ວນຕ່າງຈາກອັດຕາແລກປ່ຽນ	181,497,950	27,882,911	209,380,861
ຍອດເຫຼືອນະວັນທີ 31 ທັນວາ 2017	**9,634,146,846**	**5,952,536,510**	**15,586,683,356**
ເງິນແຮສຸດທີ່ໄດ້ຫັກໃນປີ	4,042,722,014	93,166,730	4,135,888,744
ສ່ວນຕ່າງຈາກອັດຕາແລກປ່ຽນ	274,675,261	8,799,326	283,474,587
ຍອດເຫຼືອນະວັນທີ 31 ທັນວາ 2018	**13,951,544,121**	**6,054,502,566**	**20,006,046,687**

15. ຊັບສິນບັດຄົງທີ່

15.1 *ຊັບສິນບັດຄົງທີ່ພວມກໍ່ສ້າງ*

	2018 ກີບ	*2017 ກີບ*
ຍອດເຫຼືອ ນະວັນທີ 1 ມັງກອນ	**7,039,511,888**	**1,643,520,065**
- ເພີ່ມໃນປີ	6,141,139,660	6,435,198,563
- ໂອນເປັນຊັບສິນບັດຄົງທີ່ແລ້ວ	(5,621,113,325)	(1,039,206,740)
ຍອດເຫຼືອ ນະວັນທີ 31 ທັນວາ	**7,559,538,223**	**7,039,511,888**

15. ຊັບສິນບັດຄີທີ່ (ຕໍ່)

15.2 *ຊັບສິນບັດຄີທີ່ບໍ່ມີຕົວຕົນ*

	ສິດນຳໃຊ້ທີ່ດິນ ກີບ	*ຊັບແວຄອມພິວເຕີ* ກີບ	*ລວມ* ກີບ
ຕົ້ນທຶນ:			
ນະວັນທີ 1 ມັງກອນ 2018	90,974,200,869	38,240,522,924	129,214,723,793
ຊື້ເພີ່ມ	1,401,712,000	4,457,891,682	5,859,603,682
ໂອນຈາກຊັບສິນພວມກໍ່ສ້າງ	-	4,536,994,500	4,536,994,500
ປະເມີນໃໝ່ໃນປີ 2018	57,451,013,394	-	57,451,013,394
ສະສາງອອກ	(284,838,775)	-	(284,838,775)
ນະວັນທີ 31 ທັນວາ 2018	149,542,087,488	47,235,409,106	196,777,496,594
ຄ່າເສື່ອມສະສົມ:			
ນະວັນທີ 1 ມັງກອນ 2018	-	18,155,977,902	18,155,977,902
ຄ່າໃຊ້ຈ່າຍໃນປີ 2018	-	22,036,663,969	22,036,663,969
ນະວັນທີ 31 ທັນວາ 2018	-	40,192,641,871	40,192,641,871
ມູນຄ່າສຸດທິ:			
ນະວັນທີ 1 ມັງກອນ 2018	90,974,200,869	20,084,545,022	111,058,745,891
ນະວັນທີ 31 ທັນວາ 2018	149,542,087,488	7,042,767,235	156,584,854,723

ທະນາຄານ ຮ່ວມພັດທະນາ ຈຳກັດ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານທາງການເງິນ (ຕໍ່)

ສຳລັບປີທີ່ສິ້ນສຸດ ແລະ ນະວັນທີ 31 ທັນວາ 2018

15. ຊັບສິນບັດຄີງທີ່ (ຕໍ່)

15.3 ຊັບສິນບັດຄີງທີ່ມີຫົວຕົນ

	ອາຄານ ແລະ ການປັບປຸງ ກີບ	*ເຄື່ອງ ໃຊ້ຫ້ອງການ ກີບ*	*ເຟີນີເຈີ ແລະ ສິ່ງຕິດຕັ້ງ ກີບ*	*ພາຫະນະ ກີບ*	*ລວມທັງໝົດ ກີບ*
ຕົ້ນທຶນ:					
ນະວັນທີ 1 ມັງກອນ 2018	42,202,895,130	41,895,171,148	52,859,442,133	8,728,518,494	145,686,026,905
ຊື້ເພີ່ມ	113,229,992	1,536,496,870	4,292,731,345	3,527,990,800	9,470,449,007
ໂອນຈາກ ຊຄທ ພວມກໍ່ສ້າງ	100,085,825	984,033,000	-	-	1,084,118,825
ການປະເມີນຄ່າຄືນໃໝ່	12,906,803,685	-	-	-	12,906,803,685
ຈັດປະເພດຄືນໃໝ່	-	(37,135,550)	37,135,550	-	-
ສະສາງອອກ	(104,714,064)	(184,730,922)	(5,733,000)	(11,278,000)	(306,455,986)
ນະວັນທີ 31 ທັນວາ 2018	55,218,300,568	44,193,834,546	57,183,576,028	12,245,231,294	168,840,942,436
ຄ່າຫຼຸ້ຍຫ້ຽນສະສົມ:					
ນະວັນທີ 1 ມັງກອນ 2018	13,156,114,629	27,385,066,842	21,741,675,421	6,433,390,923	68,716,247,815
ຫັກຄ່າໃຊ້ຈ່າຍໃນປີ 2018	2,701,177,965	6,557,111,698	9,884,757,344	1,816,070,929	20,959,117,936
ຈັດປະເພດໃໝ່	-	(17,002,624)	17,002,624	-	-
ສະສາງອອກ	(28,738,192)	(166,625,089)	(5,732,999)	(10,839,411)	(211,935,691)
ນະວັນທີ 31 ທັນວາ 2018	15,828,554,402	33,758,550,827	31,637,702,390	8,238,622,441	89,463,430,060
ມູນຄ່າສຸດທິ:					
ນະວັນທີ 1 ມັງກອນ 2018	29,046,780,501	14,510,104,306	31,117,766,712	2,295,127,571	76,969,779,090
ນະວັນທີ 31 ທັນວາ 2018	39,389,746,166	10,435,283,719	25,545,873,638	4,006,608,853	79,377,512,376

16. ຊັບສິນອື່ນໆ

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ບັນຊີເງິນລ່ວງໜ້າສຳລັບບັດເຄຣດິດຂອງຕ່າງປະເທດ	5,915,325,990	4,805,821,567
ເງິນລ່ວງໜ້າໃຫ້ຜູ້ສະໜອງ	938,929,000	1,207,612,338
ລາຍຈ່າຍລ່ວງໜ້າລໍຖ້າການແບ່ງສ່ວນ	7,029,910,609	7,808,522,298
ໜີ້ຕ້ອງຮັບຈາກພະນັກງານ (i)	2,349,133,389	2,349,133,389
ເງິນລ່ວງໜ້າໃຫ້ຜູ້ຖືຮຸ້ນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ (ii)	14,882,740,026	14,882,740,026
ຊັບສິນຖືກຍຶດລໍຖ້າຂາຍ (iii)	124,719,650,564	22,851,835,329
ຊັບສິນອື່ນໆ (iv)	4,435,693,290	4,633,470,690
	160,271,382,868	**58,539,135,637**

(i) ມູນຄ່ານີ້ແມ່ນສະແດງເຖິງມູນຄ່າເງິນສົດທີ່ພະນັກງານໄດ້ລັກໄປໃນປີ 2010-2012 ແລະ ກວດພົບໃນປີ 2013 ແລະ 2014. ທາງທະນາຄານໄດ້ເຮັດຂໍ້ຕົກລົງກັບບັນດາພະນັກງານເຫຼົ່ານັ້ນເພື່ອຍຶດຊັບສິນໃນການໃຊ້ທົດແທນເງິນທີ່ຖືກລັກ. ທະນາຄານບໍ່ໄດ້ດຳເນີນການໂອນກຳມະສິດຂອງຊັບສິນດັ່ງກ່າວມາເປັນຂອງທະນາຄານ ພຽງແຕ່ບັນທຶກເປັນ "ຊັບສິນອື່ນໆ" (ອ້າງອີງຂໍ້ (iii) ທາງລຸ່ມ).

(ii) ສະແດງເຖິງຈຳນວນເງິນປັນຜົນລ່ວງໜ້າຊື່ຄາວໃຫ້ຜູ້ຖືກຮຸ້ນ ຕາມຜົນການດຳເນີນງານໄລຍະກາງ ປີ 2015. ອາກອນກຳໄລທີ່ກ່ຽວຂ້ອງໄດ້ຫັກມອບໃຫ້ແກ່ເຈົ້າໜ້າທີ່ອາກອນ.

(iii) ລວມທັງຊັບສິນທີ່ຖືກຍຶດພາຍໃຕ້ຂໍ້ຕົກລົງກັບພະນັກງານ ເປັນຄ່າຊົດເຊີຍສ່ວນໜຶ່ງຈາກຊັບສິນທີ່ຖືກລັກ (ອ້າງອີງ ຂໍ້ (i) ທາງເທິງ). ທະນາຄານຍັງບໍ່ໄດ້ໂອນກຳມະສິດຊັບສິນດັ່ງກ່າວ ແຕ່ບັນທຶກເປັນຊັບສິນລໍຖ້າຂາຍ.

(iv) ຈຳນວນດັ່ງກ່າວແມ່ນຈຳນວນເງິນໂອນທີ່ຍັງບໍ່ທັນສຳເລັດ, ລາຍຈ່າຍລ່ວງໜ້າສຳລັບເຄື່ອງຂຽນ, ອຸດເຄື່ອງແບບ ແລະ ເຊັ້ກທີ່ໄດ້ສັ່ງຄືນ.

17. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນ

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ເງິນຝາກກະແສລາຍວັນ	**6,059,646,507**	**6,783,613,379**
ບໍລິສັດ DEVCO ລາວເຊົ່າສິນເຊື່ອຈຳກັດ	1,024,300	1,797,700
ທະນາຄານ ອິນໂດຈີນ	891,165,753	812,826,182
ທະນາຄານ ພັດທະນາລາວ	2,825,960,631	1,806,219,848
ທະນາຄານ ເອັສທີ ຈຳກັດ	351,827,739	1,246,806,000
ທະນາຄານ ກຸງສີ	1,727,432,386	1,613,636,466
ກຸ່ມການລົງທຶນທະນາຄານນານາຊາດ	4,255,000	-
ບໍລິສັດ ທະນະຊັບ ເຊົ່າສິນເຊື່ອ ແລະ ການເງິນ	257,980,698	1,302,327,183
ເງິນຝາກມີກຳນົດ	**117,771,000,000**	**54,925,000,000**
ທະນາຄານລາວຈີນ	77,441,000,000	-
ກອງທຶນປົກປ້ອງຜູ້ຝາກເງິນ	5,000,000,000	20,000,000,000
ທະນາຄານ ຊາຄອມແບ້ງ ລາວຈຳກັດ	-	34,925,000,000
ສະຫວັນແດນຄຳ	950,000,000	-
ທະນາຄານຫວຽດຕິນລາວຈຳກັດ	34,040,000,000	-
ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນບ້ານວິງວິໄລ	340,000,000	-
	123,830,646,506	**61,708,613,379**

ລາຍລະອຽດຂອງບັນຊີຝາກປະຈຳນະ ວັນທີ 31 ທັນວາ 2018 ມີດັ່ງນີ້:

	31/12/2018 *ກີບ*	*ສະກຸນເງິນ*	*ໄລຍະ* *ເວລາ*	*ອັດຕາດອກເບ້ຍ* *%ຕໍ່ປີ*
ທະນາຄານ ລາວ ຈີນ ຈຳກັດ	77,441,000,000	ໂດລາ	1 ປີ	4.30% - 4.50%
ກອງທຶນປົກປ້ອງຜູ້ຝາກເງິນ	5,000,000,000	ກີບ	1 ປີ	4.00%
ສະຫວັນຄຳ	950,000,000	ກີບ	1 ປີ	3.20%
ທະນາຄານ ຫວຽດຕິນ ລາວ ຈຳກັດ	34,040,000,000	ໂດລາ	1 ປີ	3.52%
ສະຖາບັນການເງິນທີ່ບໍ່ຮັບຝາກເງິນ ວິງວິໄລ	340,000,000	ກີບ	1 ປີ	3.20%
	117,771,000,000			

18. ໜີ້ຕ້ອງສິ່ງລູກຄ້າ

ຍອດເຫຼືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສິ່ງອື່ນໆໃຫ້ລູກຄ້າ ນະວັນທີ 31 ທັນວາ 2018 ດັ່ງນີ້:

	ເປັນສະກຸນເງິນກີບ	*ເປັນສະກຸນເງິນຕາຕ່າງປະເທດ*	*ລວມທັງໝົດ*
	ກີບ	*ກີບ*	*ກີບ*
ເງິນຝາກກະແສລາຍວັນ	29,563,740,345	119,273,675,594	148,837,415,939
ເງິນຝາກປະຢັດ	235,420,178,196	504,251,147,931	739,671,326,127
ເງິນຝາກມີກຳນົດ	340,050,685,308	1,696,668,626,322	2,036,719,311,630
ໜີ້ຕ້ອງສິ່ງອື່ນໆ	3,321,000	399,970	3,720,970
	605,037,924,849	**2,320,193,849,817**	**2,925,231,774,666**

ຍອດເຫຼືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສິ່ງອື່ນໆໃຫ້ລູກຄ້າ ນະວັນທີ 31 ທັນວາ 2017 ດັ່ງລຸ່ມນີ້:

	ສະກຸນເງິນກີບ	*ສະກຸນເງິນຕາຕ່າງປະເທດ*	*ລວມທັງໝົດ*
	ກີບ	*ກີບ*	*ກີບ*
ເງິນຝາກກະແສລາຍວັນ	20,830,658,354	127,663,377,613	148,494,035,967
ເງິນຝາກປະຢັດ	191,800,287,290	444,648,768,321	636,449,055,611
ເງິນຝາກມີກຳນົດ	327,761,982,527	1,244,035,686,799	1,571,797,669,326
ໜີ້ຕ້ອງສິ່ງອື່ນໆ	695,000	904,025	1,599,025
	540,393,623,171	**1,816,348,736,758**	**2,356,742,359,929**

ອັດຕາດອກເບ້ຍຂອງໜີ້ຕ້ອງສິ່ງລູກຄ້າມີດັ່ງລຸ່ມນີ້:

	2018	*2017*
	ອັດຕາດອກເບ້ຍຕໍ່ປີ	*ອັດຕາດອກເບ້ຍຕໍ່ປີ*
ເງິນຝາກກະແສລາຍວັນເປັນເງິນກີບ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດເປັນເງິນກີບ	0.85%-1.89%	0.97%-1.96%
ເງິນຝາກປະຢັດເປັນເງິນໂດລາສະຫະລັດ	0.50%-1.50%	0.50%-2.00%
ເງິນຝາກປະຢັດເປັນເງິນບາດ	0.50%-1.50%	0.50%-2.00%
ເງິນຝາກມີກຳນົດເປັນເງິນກີບ	2.50%-14.00%	2.30%-14.00%
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	1.00%-10.00%	1.00%-10.00%

19. ໜີ້ຕ້ອງສິ່ງອື່ນໆ

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ໜີ້ຕ້ອງສິ່ງໃຫ້ພະນັກງານ	1,851,540,874	229,482,974
ອາກອນຕ້ອງສິ່ງ *(ບົດອະທິບາຍເລກທີ 21)*	711,852,948	1,752,497,705
ອາກອນລາຍໄດ້	32,219,743	6,246,193
ໜີ້ຕ້ອງສິ່ງອື່ນໆ (*)	20,258,806,872	14,645,638,860
	22,854,420,437	**16,633,865,732**

(*) ໃນຈຳນວນດັ່ງກ່າວແມ່ນໜີ້ຕ້ອງສິ່ງກ່ຽວກັບການຊຳລະສະສາງບັດວີຊ່າ, ໜີ້ຕ້ອງສິ່ງລາຍການເງິນໂອນ ແລະ ໜີ້ຕ້ອງສິ່ງໃຫ້ຜູ້ສະໜອງ ແລະ ເງິນຮັດສ່ວນລໍຖ້າການແກ້ໄຂ.

20. ຂາດທຶນສະສົມ

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ກຳໄລສະສົມ/(ຂາດທຶນສະສົມ)ຈາກການດຳເນີນງານ	(4,542,014,766)	(12,379,933,753)
ຂາດທຶນຈາກການແລກປ່ຽນສະກຸນເງິນຂອງທຶນຈົດທະບຽນ (*)	(39,757,050,000)	(39,757,050,000)
	(44,299,064,766)	**(52,136,983,753)**

(*) ການຂາດທຶນນີ້ເກີດຈາກປ່ຽນທຶນຈົດທະບຽນກັບຄືນສະກຸນເງິນເດີມ ນະວັນທີ 31 ມັງກອນ 2010, ເມື່ອ ທຫລ ອອກກົດໝາຍສະບັບທີ 01/ທຫລ ລົງວັນທີ 28 ມັງກອນ 2010 ຊຶ່ງໄດ້ລະບຸໃຫ້ທະນາຄານປ່ຽນທຶນຈົດທະບຽນຈາກສະກຸນເງິນຕ່າງປະເທດເປັນສະກຸນເງິນກີບ ດ້ວຍອັດຕາແລກປ່ຽນຄົງທີ່ ນະວັນທີ 31 ມັງກອນ 2010.

21. ອາກອນ

ອີງຕາມກົດໝາຍອາກອນສະບັບເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ທີ່ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 24 ພຶດສະພາ 2016, ທະນາຄານແມ່ນມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນອາກອນ. ເຖິງຢ່າງໃດກໍຕາມ, ທະນາຄານນຳໃຊ້ອັດຕາ 20% ຂອງກຳໄລກ່ອນອາກອນ ໂດຍອີງຕາມໃບອະນຸຍາດລົງທຶນຕ່າງປະເທດ ສະບັບເລກທີ 133/10 ລົງວັນທີ 23 ກັນຍາ 2010 ທີ່ອອກໂດຍ ກະຊວງແຜນການ ແລະ ການລົງທຶນ (2017: 20% ຂອງກຳໄລກ່ອນອາກອນ).

21. ອາກອນ (ຕໍ່)

	2018 ລ້ານກີບ	2017 ລ້ານກີບ
ກຳໄລກ່ອນອາກອນພາຍໃນປີ	10,277,562,568	8,540,759,290
ບວກ:		
- ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກ	2,210,655,339	3,044,277,509
ລົບ:		
- ສ່ວນຕ່າງລະຫວ່າງນະໂຍບາຍບັນຊີ ແລະ ກົດໝາຍອາກອນ	(15,546,893,065)	-
- ເງິນປັນຜົນ	(290,000,000)	(270,000,000)
ກຳໄລທີ່ຕ້ອງເສຍອາກອນ	12,198,217,907	11,315,036,799
ອາກອນກຳໄລໃນ ອັດຕາ 20% ຂອງກຳໄລທີ່ຕ້ອງເສຍອາກອນ	**2,439,643,581**	**2,263,007,360**
ໜີ້ຕ້ອງຊຳລະພາຍໃນຕົ້ນປີ	1,752,497,705	534,252,857
ອາກອນຈ່າຍພາຍໃນປີ	(3,480,288,338)	(1,044,762,512)
ອາກອນຄ້າງຈ່າຍໃນທ້າຍປີ	**711,852,948**	**1,752,497,705**

ການແຈ້ງເສຍອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

22. ເງິນສົດ ແລະ ທຽບເທົ່າເງິນສົດ

	31 ທັນວາ 2018 ກີບ	31 ທັນວາ 2017 ກີບ
ເງິນສົດໃນຄັງ	249,266,853,456	230,409,923,753
ເງິນຝາກທະນາຄານແຫ່ງ ສປປ ລາວ	324,693,852,945	208,185,032,317
ເງິນຝາກທະນາຄານ ແລະ ປະຢັດກັບທະນາຄານອື່ນ	216,610,687,279	125,744,217,765
	790,571,393,680	**564,339,173,835**

23. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນລວມທຸກລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນ ເຊິ່ງມີສາຍພົວພັນ ກັບທະນາຄານ, ພາກສ່ວນທີ່ຈະກ່ຽວຂ້ອງກັບທະນາຄານ ຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:
- ມີການຄວບຄຸມ (ຖືກຄວບຄຸມໂດຍ) ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບທະນາຄານ (ໃນນີ້ລວມມີທະນາຄານສຳນັກງານໃຫຍ່, ທະນາຄານ ແລະ ສະມາຊິກຂອງ ທະນາຄານ);
- ມີຜົນປະໂຫຍດນຳກັນກັບທະນາຄານເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ.

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ່ນສ່ວນນຳທະນາຄານ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຜູ້ບໍລິຫານຫຼັກຂອງທະນາຄານ ຫຼື ທະນາຄານສຳນັກງານໃຫຍ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ).

(ຈ) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ຫຼວງຫຼື ມີສິດທິອຳນາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດຳເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆ ພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ).

(ສ) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງ ທະນາຄານ ຫຼື ທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບທະນາຄານ.

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2018 ມີດັ່ງຕໍ່ໄປນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ທຸລະກຳ*	*ໜີ້ຕ້ອງຮັບ ກີບ*	*ໜີ້ຕ້ອງສົ່ງ ກີບ*
ກຸ່ມບໍລິສັດ ສີເມືອງ ຈຳກັດ	ພາຍໃຕ້ການຄວບຄຸມຂອງປະທານ ທະນາຄານ ຮ່ວມພັດທະນາ ຈຳກັດ - ທ່ານ ເອກກະພັນ ພະພິທັກ	ເງິນກູ້ຍືມ ແບບເບີກເກີນບັນຊີ	404,308,680,000	-
		ເງິນກູ້ຍືມ ແບບມີກຳນົດ	-	505,897,802
		ເງິນຝາກກະແສລາຍວັນ	25,530,000	-
		ໜັງສືຄ້ຳປະກັນ	61,353,108,810	-
ບໍລິສັດອະສັງຫາຣິມະຊັບ ເອກະໄຊ ຈຳກັດ	ພາຍໃຕ້ການຄວບຄຸມຂອງຜູ້ຖືຮຸ້ນ ທະນາຄານຮ່ວມ ພັດທະນາ ຈຳກັດໂດຍ ທ່ານພູໄຊຊະນະໄຊສົມບັດ	ເງິນກູ້ຍືມ ແບບມີກຳນົດ	135,476,600,000	-
		ໜັງສືສິນເຊື່ອ	27,914,895	
ທ່ານ ຄຳຮຸ້ ທອງທະວີ	ຮອງຜູ້ອຳນວຍການທະນາຄານຮ່ວມ ພັດທະນາ ຈຳກັດ	ເງິນຝາກປະຫຍັດ	-	79,110,234
		ເງິນຝາກປະຈຳ	-	1,762,733
ທ່ານ ເອກະໄຊ ພະພິທັກ	ປະທານ	ເງິນຝາກປະຫຍັດ	-	6,864,569,937
ບໍລິສັດໄຟຟ້າ ນ້ຳຮຸ່ງ ຈຳກັດ	ພາຍໃຕ້ການຄວບຄຸມຂອງປະທານ ທະນາຄານ ຮ່ວມພັດທະນາ ຈຳກັດ - ທ່ານ ເອກກະພັນ ພະພິທັກ	ໜັງສືສິນເຊື່ອ	56,421,300,000	-

23. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີມີດັ່ງຕໍ່ໄປນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ທຸລະກຳ*	*ມູນຄ່າ ກີບ*
ກຸ່ມບໍລິສັດ ສີເມືອງ ຈຳກັດ	ພາຍໃຕ້ການຄວບຄຸມຂອງ ປະທານ ທຄຣ - ທ່ານ ເອກກະພັນ ພະພິທັກ	ເພີ່ມຂຶ້ນພາຍໃຕ້ສັນຍາກູ້ຢືມ	64,881,056,072
		ຖອນຈາກບັນຊີກະແສລາຍວັນ	(1,480,778,006)
		ເພີ່ມຂຶ້ນຈາກໜັງສືຄ້ຳປະກັນ	25,530,000
		ເພີ່ມຂຶ້ນຈາກໜັງສືສິນເຊື່ອ	61,353,108,810
		ລາຍຮັບດອກເບ້ຍຈາກການກູ້ຢືມ ພາຍໃຕ້ສັນຍາເງິນກູ້	20,620,498,705
ບໍລິສັດ ອະສັງຫາຣິມະຊັບ ເອກະໄຊ ຈຳກັດ	ພາຍໃຕ້ການຄວບຄຸມຂອງ ຜູ້ຖືຮຸ້ນ ທຄຣ ໂດຍ ທ່ານ ພຸໄຊຊະນະ ໄຊສົມບັດ	ເພີ່ມຂຶ້ນພາຍໃຕ້ສັນຍາການກູ້ຢືມ	12,841,172,300
		ເພີ່ມຂຶ້ນຈາກໜັງສືຄ້ຳປະກັນ	27,914,895
		ລາຍຮັບດອກເບ້ຍຈາກການກູ້ຢືມ ພາຍໃຕ້ສັນຍາເງິນກູ້	9,744,156,110
ທ່ານ ຄຳຮຸ້ ທອງທະວີ	ຮອງຜູ້ອຳນວຍການ ທະນາຄານຮ່ວມພັດທະນາ	ເພີ່ມຂຶ້ນຈາກບັນຊີເງິນຝາກປະຫຍັດ	4,164,771
		ຈ່າຍຄືນພາຍໃຕ້ສັນຍາການເງິນກູ້	(122,635,427,700)
ທ່ານ ເອກະໄຊ ພະພິທັກ	ປະທານ	ເພີ່ມຂຶ້ນຈາກເງິນຝາກປະຈຳ	179,300
		ເພີ່ມຂຶ້ນຈາກເງິນຝາກປະຫຍັດ	564,241,968
ບໍລິສັດໄຟຟ້າ ນ້ຳຮຸ່ງ ຈຳກັດ	ພາຍໃຕ້ການຄວບຄຸມຂອງ ປະທານ ທຄຣ - ທ່ານ ເອກກະພັນ ພະພິທັກ	ຫຼຸດລົງຈາກໜັງສືສິນເຊື່ອ	(19,543,200,000)
		ຫຼຸດລົງຈາກໜັງສືຄ້ຳປະກັນ	(822,742,280)

ລາຍການເຄື່ອນໄຫວກັບຄະນະບໍລິຫານຫຼັກຂອງທະນາຄານ

ຄ່າຕອບແທນຂອງສະພາຜູ້ອຳນວຍການ ແລະ ຜູ້ບໍລິຫານມີດັ່ງນີ້:

	2018 ກີບ	*2017 ກີບ*
ເງິນເດືອນ	4,315,218,050	4,344,099,925

24. ຄ່າໝັ້ນສັນຍາຕໍ່ກັບຄ່າເຊົ່າໃນການດຳເນີນງານ

	31 ທັນວາ 2018 ກີບ	*31 ທັນວາ 2017 ກີບ*
ພາຍໃນ 1 ປີ	397,199,000	179,510,000
ຈາກ 1 ປີ ຫາ ໜ້ອຍກວ່າ 5 ປີ	636,114,520	693,900,000
ຫຼາຍກວ່າ 5 ປີ	-	165,500,000
	1,033,313,520	**1,038,910,000**

25. ເຫດການຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ມີເຫດການໃດທີ່ສຳຄັນເກີດຂຶ້ນ ຫຼັງຈາກວັນທີໃບລາຍງານຖານະທາງການເງິນທີ່ສົ່ງຜົນໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງທະນາຄານ.

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຫົວໜ້າພະແນກ ບັນຊີ ແລະ ການເງິນ

ອະນຸມັດໂດຍ:

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

28 ພຶດສະພາ 2019

Building a better working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

Reference: 60956549/20598798-LAS

INDEPENDENT AUDITORS' REPORT

To: The Owners of Joint Development Bank Limited

Opinion

We have audited the financial statements of Joint Development Bank Limited ("the Bank"), which comprise the balance sheet as at 31 December 2018, and the income statement, statement of changes in equity and cash flow statement for the year then ended, and notes to the financial statements, including a summary of significant accounting policies.

In our opinion, the accompanying financial statements of the Bank are prepared, in all material respects, in accordance with the Accounting Law of Lao PDR and with the regulations stipulated by Bank of the Lao PDR relevant to preparation and presentation of financial statements.

Basis for Opinion

We conducted our audit in accordance with International Standards on Auditing (ISAs). Our responsibilities under those standards are further described in the *Auditors' Responsibilities for the Audit of the Financial Statements* section of our report. We are independent of the Bank in accordance with the International Ethics Standards Board for Accountants' Code of Ethics for Professional Accountants (IESBA Code) and the ethical requirements that are relevant to our audit of the financial statements in Lao PDR, and we have fulfilled our other ethical responsibilities in accordance with these requirements and the IESBA Code. We believe that the audit evidence we have obtained is sufficient and appropriate to provide a basis for our opinion.

Emphasis of Matter

